# CHAMPA 占芭 ຈຳປາ

02/2016 ສະບັບທີ 125

## ປັດໃຈສຳຄັນຂອງຈີນ ທີ່ຈູດຮຸ່ງໃສ່ປີໃໝ່ສາກົນໃນໂລກ




ໄປທ່ຽວພູທີ່ມີຊື່ສຽງ 4 ແຫ່ງໃນລະດູໜາວ

ທາງຜ່ານຢູ່ປະເທດຈີນຂອງນົກອົບພະຍົບທົ່ວໂລກ

ຢຸນນານເລັ່ງລັດການກໍ່ສ້າງທາງລົດໄຟສ້າງເຄືອຂ່າຍທາງລົດໄຟທີ່ໄປຮອດແມ່ນ້ຳ ແລະ ທະເລ

ISSN 1673-3266

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871－96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

公司地址：老挝万象市13号公路5公里处万象安居建材市场内

ບໍລິສັດເຮືອນແປ້ນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕົວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ:ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບ
ສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ວນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

## 老挝万杰彩钢
## 活动板房有限公司



















Tel： 021 720509 ； 020 54606278 （chinese ） 020 55557178 （ Lao ）

Mob： 0086 13758972039 （China

ໂຮງແຮມເມືອງທອງ
Muangthong Hotel



孟通酒店

孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。

房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适

自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普：巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上 3.免费早餐 4.可以在酒店办登机手续和出机票 5.可用车接送琅勃拉邦机场到酒店。




www.muangthonglpb.com

ການບິນລາວ
Lao Airlines

ຈຳປາໂຮລິເດ
Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ

云南建工集团有限公司成立于1951年，于2009年11月6日改制挂牌。目前，集团由过去的施工总承包正在转型升级为集投融资、房地产开发和工程建设总承包为一体的产融双驱大型建设企业集团。现有全资子公司、控股公司和直管企事业单位37个，是云南省唯一拥有2个国家房屋建筑施工总承包特A级资质、机场跑道施工专项资质、援外成套项目A级资格的企业，业务覆盖建筑工程投资建设全领域，是云南省政府国资委履行出资人职责的19户省属重要骨干企业之一。目前在职职工有19000余人，各类专业技术人员12000余人，其中高级职称1278人。

近年来，在省委省政府和省国资委的正确领导下，在社会各界的关心和支持下，云南建工集团主动融入国家发展战略，积极参与我国周边互联互通建设，强化“走出去”战略，集团投融资、施工总承包和“走出去”三大能力显著提高。2014年，完成经营额864.38亿元，合同额539.48亿元，产值438.34亿元，完成竣工面积728.35万平方米，实现利润12亿元，营业收入利润率高达2.7%，居行业领先水平。目前，集团总资产已突破1000亿元，净资产突破300亿元。

截至2014年，集团累计获得全国建筑工程鲁班奖24项，国家优质工程金奖1项，国家优质工程银质奖41项，詹天佑土木工程大奖1项，国家级工法、发明专利、实用新型专利等230余项，主编国家行业标准6项。集团先后在也门、南非、沙特、伊拉克、赤道几内亚、泰国、老挝、柬埔寨、缅甸、越南、斯里兰卡等国家投资开发和总承包建设各类项目，并荣获老挝、柬埔寨政府颁发的“发展勋章”和“贡献勋章”等荣誉，已形成南亚和东南亚、中东、非洲三大海外市场发展格局。2015年，集团连续24次入选中国企业500强；连续5次入选ENR250强（美国工程新闻录杂志），位列166位；在中国承包商80强中位列第18位，在中国100大跨国公司及跨国指数排名中位列第72位，集团的综合竞争实力、品牌影响力和社会信誉度显著提高。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດສ້າງຕັ້ງຂຶ້ນໃນປີ 1951,ໄດ້ປ່ຽນລະບົບກົນໄກຕິດປ້າຍໃນວັນທີ 6 ເດືອນ 11 ປີ 2009. ປັດຈຸບັນນີ້,ກຸ່ມບໍລິສັດກຳລັງຫັນປ່ຽນຮູບແບບເລື່ອນຊັ້ນຈາກລົງມືກໍ່ສ້າງຮັບເໝົາລວມໃນເມື່ອກ່ອນ,ກາຍເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງຂະໜາດໃຫຍ່ທີ່ມີການຜະລິດ ແລະ ການລະດົມທຶນສອງຢ່າງລວມທັງການລົງທຶນ,ການລະດົມທຶນ,ການພັດທະນາເຄຫາສະຖານ,ທີ່ດິນ ແລະ ຮັບເໝົາລວມວິສະວະກຳກໍ່ສ້າງເປັນອັນໜຶ່ງອັນດຽວ.ປັດຈຸບັນນີ້,ໄດ້ມີບໍລັດລູກທີ່ມີທຶນຄົບຖ້ວນ,ບໍລິສັດຄຸມຫຸ້ນ ແລະ ກົມກອງຄຸ້ມຄອງກິດຈະການໂດຍກົງ 37 ແຫ່ງ,ແມ່ນວິສາຫະກິດທີ່ມີຄຸນວຸດທິຊັ້ນ A ພິເສດ 2 ໃບໃນການຮັບເໝົາລວມການກໍ່ສ້າງເຄຫາສະຖານແຫ່ງຊາດຂອງຢຸນນານແຕ່ແຫ່ງດຽວ,ຄຸນວຸດທິໂຄງການສະເພາະທາງແລ່ນເຮືອບິນໃນສະໜາມບິນ ແລະ ຄຸນວຸດທິຊັ້ນ A ໂຄງການຊ່ວຍເຫຼືອຕ່າງປະເທດຄົບຊຸດ,ກິດຈະກຳປົກຄຸ້ມດ້ວຍຂົງເຂດທັງໝົດໃນການກໍ່ສ້າງໂຄງການລົງທຶນວິສະວະກຳກໍ່ສ້າງ,ແມ່ນ 1 ໃນວິສາຫະກິດຫຼັກແຫຼ່ງທີ່ສຳຄັນສັງກັດແຂວງ 19 ຄອບຄົວເປັນຜູ້ຮັບຜິດຊອບຂອງຄະນະກຳມະການຊັບສິນຂອງລັດປົກຄອງແຂວງຢຸນນານປະຕິບັດໜ້າທີ່ຜູ້ອອກທຶນ.ປັດຈຸບັນນີ້,ພະນັກງານພະລາກອນລວມມີ 19,000 ກວ່າຄົນ,ນັກວິຊາການທຸກປະເພກ 12,000 ກວ່າຄົນ,ໃນນັ້ນ,ຜູ້ທີ່ມີຊື່ຕຳແໜ່ງໜ້າທີ່ຊັ້ນສູງ 1278 ຄົນ.

ຫວ່າງປີມໍ່ໆມານີ້,ໃຕ້ການນຳພາອັນຖືກຕ້ອງຂອງຄະນະພັກແຂວງ,ປົກຄອງແຂວງ ແລະ ຄະນະກຳມະການຊັບສິນຂອງລັດ ແລະ ໃຕ້ການສະໜັບສະໜູນ ແລະ ຄວາມເອົາໃຈໃສ່ຈາກທຸກຊັ້ນວັນນະໃນສັງຄົມ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານເປັນເຈົ້າການເຊື່ອມໂຍງເຂົ້າສູ່ຍຸດທະສາດການພັດທະນາຂອງລັດ,ເຂົ້າຮ່ວມການກໍ່ສ້າງເຊື່ອມຈອດກັນໃນອ້ອມຂ້າງປະເທດຈີນຢ່າງຕັ້ງໜ້າ,ເຮັດໃຫ້ຍຸດທະສາດ“ອອກໄປຕ່າງປະເທດ”ຢ່າງແຂງແຮງ,ໄດ້ຍົກສູງຄວາມສາມາດ 3 ປະການຂຶ້ນຢ່າງເດັ່ນຊັດເຊັ່ນ:ການລົງທຶນ ແລະ ລະດົມທຶນ,ການຮັບເໝົາລວມການກໍ່ສ້າງ ແລະ “ອອກໄປຕ່າງປະເທດ”ຂອງກຸ່ມບໍລິສັດ.

ໃນປີ 2014,ໄດ້ສຳເລັດຈຳນວນເງິນດຳເນີນທຸລະກິດ 86,438 ຕື້ຢວນ,ຈຳນວນເງິນລົງເຊັນສັນຍາ 53,948ຕື້ຢວນ,ມູນຄ່າການຜະລິດ 43,834 ຕື້ຢວນ,ສຳເລັດເນື້ອທີ່ການກໍ່ສ້າງ 7283500 ຕາແມັດ,ບັນລຸຜົນກຳໄລ 1,2 ຕື້ຢວນ,ອັດຕາກຳໄລຜົນໄດ້ຮັບຈາກທຸລະກິດ 2,7%,ຢູ່ລະດັບນຳໜ້າໃນຂະແໜ່ງການ.ປັດຈຸບັນນີ້,ຊັບສິນບັດລວມຂອງກຸ່ມບໍລິສັດໄດ້ທະລຸ 100 ຕື້ຢວນ,ຊັບສິນບັດສຸດທິບັນລຸເຖິງ 30 ຕື້ຢວນ.

ຈົນຮອດປີ 2014,ກຸ່ມບໍລິສັດໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດລວມມີ 24 ລາຍ,ລາງວັນຄຳວິສະວະກຳກໍ່ສ້າງທີ່ມີຄຸນນະພາບດີເລີດຂອງລັດ 1 ລາຍ,ລາງວັນເງິນວິສະວະກຳກໍ່ສ້າງທີ່ມີຄຸນນະພາບດີເລີດຂອງລັດ 41 ລາຍ,ລາງວັນໃຫຍ່ວິສະວະໂຍທາຈັນທຽນຢຽວ 1 ລາຍ,ສິດທິບັດປະດິດສ້າງ,ສິດທິບັດແບບໃໝ່ປະໂຍກເປັນຕົ້ນ 230 ກວ່າລາຍ.ມາດຕາຖານຂະແໜງການຂອງປະເທດບັນດາທີການຫຼັກ 6 ລາຍ.ກຸ່ມບໍລິສັດໄດ້ລົງທຶນພັດທະນາ ແລະ ຮັບເໝົາລວມວິສະວະກຳກໍ່ສ້າງໂຄງການທຸກປະເພດຢູ່ປະເທດເຢແມນ,ອາຟຼິກາໃຕ້,ຊາອູດິດ,ອີລັກ,ກີເນເອກົວເຕີ,ໄທ,ລາວ,ກຳປູເຈຍ,ມຽນມາ,ຫວຽດນາມ,ສີລັງກາເປັນຕົ້ນ ແລະ ໄດ້ຮັບນາມມະຍົດເຊັ່ນ:“ຫຼຽນໄຊພັດທະນາ”,“ຫຼຽນໄຊຄຸນງາມຄວາມດີ”ທີ່ລັດຖະບານລາວ ແລະ ລັດຖະບານກຳປູເຈຍປະດັບໃຫ້ ແລະ ອື່ນໆ.ໄດ້ກາຍເປັນສະຖານນະພາບແຫ່ງການພັດທະນາການຕະຫລາດອາຊີໃຕ້,ອາຊີຕາເວັນອອກສຽງໃຕ້,ຕາເວັນອອກກາງ.ອາຟຼິກາໃນປີ 2015,ກຸ່ມບໍລິສັດໄດ້ລຽນຕິດ 24 ເທື່ອຖືກຄັດເລືອກເປັນບໍລິສັດເຂັ້ມແຂງ 500 ບໍລິສັດຂອງຈີນ. ແລະ ລຽນຕິດ 5 ເທື່ອຖືກຄັດເລືອກເຂົ້າສູ່ ENR 250 ແຂງ(ວາລະສານບັນທຶນຂ່າວວິສະວະກຳກໍ່ສ້າງອາເມລິກາ).ເປັນອັນດັບທີ 166 ແລະ ເປັນອັນດັບ 18 ຂອງນັກທຸລະກິດຮັບເໝົາກໍ່ສ້າງຈີນ 80 ແຂງ; ທັງເປັນອັນດັບ 72 ຂອງບໍລິສັດຂ້າມຊາດ 100 ບໍລິສັດຈີນ ແລະ ຊື່ດັດຊະນີດບໍລິສັດຂ້າມຊາດລຽນແຖວເປັນອັນດັບ 72, ກຳລັງແກ່ງແຍ້ງສັງລວມ,ຜົນສະທ້ອນທາງຍີ່ຫໍ້ ແລະ ຄວາມເຊື່ອໝັ້ນໃຈທາງສັງຄົມຂອງກຸ່ມບໍລິສັດໄດ້ຖືກຍົກສູງຂຶ້ນຢ່າງຊັດແຈ້ງ.





ພາບແຕ້ມໂຕລີງຂອງຊາວກະສິກອນເມືອງຫູ
户县农民画猴　CFP 图



# ສາລະບານ

02/2016 ສະບັບທີ 125










## ສາລະຄະດີພິເສດ 本刊特稿

08.ປັດໃຈສຳຄັນຂອງຈີນທີ່ຈູດຮຸ່ງໃສ່ປີໃໝ່ສາກົນໃນໂລກ

## ໜຶ່ງແລວທາງ ໜຶ່ງເສັ້ນທາງ “一带一路”

14. ບໍລິສັດກໍ່ສ້າງໄຟຟ້າຈີນເຍືອງຮຸ່ງແຈ້ງຕະຫຼາດສາກົນ

## ປະຕູເມືອງຈີນ 中国之窗

18.ການເປີດປະຕູສູ່ພາຍນອກະຈີນກັບໂລກເຕີບໂຕພ້ອມກັນ

22.ທາງຜ່ານຢູ່ປະເທດຈີນຂອງນົກອົບພະຍົບທົ່ວໂລກ

## ການໄປມາຫາສູ່ກັນສັນຖະວະໄມຕີຈິດ 友好往来

26.ຈີນຊ່ວຍວາງແຜນເພື່ອກະຕຸກຊຸກຍູ້ເສດຖະກິດຂອງອາຊີຕາເວັນອອກ

29.ຄວາມຊົງຈຳທີ່ຍາກຈະລືມ

## ລວມຈຸດຢູນນານ 聚焦云南

32.ຢູນນານເລັ່ງລັດການກໍ່ສ້າງທາງລົດໄຟສາງເຄືອຂ່າຍທາງລົດໄຟທີ່ໄປຮອດແມ່ນ້ຳ ແລະ ທະເລ

36.ການທ່ອງທ່ຽວຂອງແຂວງຢູນນານເຊື່ອມໂຍງກັບໂລກເປັ່ງສະເໜ່ຢ່າງສົດໃສ

## ວິສະວະກຳກໍ່ສ້າງຢູນນານ 云南建工

42.ຊວງຊີງກາລະເວລາຜ່ານຜ່າຄວາມຫຍຸ້ງຍາກນາໆປະການ ຊັກນຳເອົານ້ຳໃສມາເພື່ອຊີວິດການເປັນຢູ່ຂອງປະຊາຊົນ

## ການທ່ອງທ່ຽວທັດສະນາຈອນ 旅游纵横

48.ໄປທ່ຽວພູທີ່ມີຊື່ສຽງ 4 ແຫ່ງໃນລະດູໜາວ

## ລຽບຊົມວັດທະນະທຳ 文化博览

50.24 ລະດູການ: ສຸລິຍະຄະຕິໃນໜັງສືປະຕິທິນໃຊ້ດ້ານການກະເສດ

## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校

52.ມະຫາວິທະຍາໄລເສີ່ນເຈີ້ນ

## ປະຊາຊາດຈີນ 中华民族

54."ບຸນຊາມາ"ຂອງເຜົ່າຕົງ

## ບໍລິການເພື່ອທ່ານ 为您服务

56.ຖ້າຢາກກຳຈັດຝ້າ ເຊີນດື່ມນ້ຳອະຫງຸ່ນເດີ

## ຮຽນພາສາຈີນ 学汉语

58.ຮຽນພາສາຈີນ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86-871-64112975
办公室电话：86-871-64101644
传真：86-871-64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856-21-254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D
ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86-871-64112975 64101644
ແຟກ: 86-871-64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10



主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　张红平　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　吴静波　田虎青　海　江
总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦
编辑部副主任　苏雯雯　中文编辑　张　蕾
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　李沁颖　韩佐伊
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ　ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ　ຫ້ອງການຂ່າວປົກຄອງແຂວງຢູນນານ
ອົງການປະສານງານ　ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ
ຮຽບຮຽງພິມຈຳໜ່າຍ　ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່　ຈາວຈິນ ເມົາເວີນກົວ
ທີ່ປຶກສາ　ຈ່າງຫົງພິງ ຊຽນຢູຍໄຊ ໄຊຊຸນແຊງ
　　　　　ຈ່າງຢູ້ຍໄຊ ລີລຽນປິ່ນ ລີວຢົງ
ຜູ້ອຳນວຍການໃຫຍ່　ລີສີ້ຽນ
ຮອງຜູ້ອຳນວຍການໃຫຍ່　ອູຈິນໂປ ທຽນຫູຊີນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່　ຢາງຢູນ
ຫົວໜ້າພິມຈຳໜ່າຍ　ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ　ຫວ່າງເວີຍຢູນ
ຫົວໜ້າບັນນາທິການ　ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ　ຊູ່ເວີນເວີນ　ບັນນາທິການພາສາຈີນ　ຈາງລຸຍ
ຜູ້ແປພາສາລາວ　ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
　　　　　ຫຼີຊຽວຢວນ　ອູດຶນສິນ　ລີວເຢີນເຫີ
ຜູ້ກວດແກ້ພາສາລາວ　ລີວເຢີນເຫີ
ບັນນາທິການພາສາລາວ　ປາຍຍຽນ
ຜູ້ຄຸມງານຝ່າຍສິລະປະ　ຈູ້ສີນ
ຜູ້ຄຸມງານຝ່າຍອິນເຕີເນັດ　ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸມງານ　ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ　ລີທາວ　ບັນນາທິການ　ລີເວີນຈູນ　ລີຊີ້ງຢີງ ຮານໂຈ່ວຢີ່
ຫົວໜ້າພະແນກແຈກຈ່າຍ　ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ　ແຊງລົງ
ພະນັກງານຝ່າຍປົກຄອງ　ລູຢູຍ　ເຫຍູລານ

# ປັດໃຈສຳຄັນຂອງຈີນທີ່ຈຸດຮຸ່ງໃສ່ປີໃໝ່ສາກົນໃນໂລກ

## 中国元素点亮世界新年

焰火、彩灯、花车、游行……新的一年到来之际，世界各地都正忙着进入“节日模式”。曾几何时，圣诞节、万圣节等西方节庆文化进入中国，街头巷尾常常可见缤纷的圣诞树和热闹的化装舞会。而如今，随着华侨华人在海外落地生根，开枝散叶，中华文化也漂洋过海，风靡世界。在各国辞旧迎新的庆典活动中，中国元素已成为不可或缺的亮点。

ເມື່ອງໃນໂອກາດທີ່ປີໃໝ່ສາກົນພວມຈະມາຮອດນັ້ນ,ດອກໄຟ,ໂຄມໄຟສີ,ລົດປະດັບດອກໄມ້,ການແຫ່ຂະບວນ...ແຫ່ງຕ່າງໆໃນໂລກລ້ວນແຕ່ຟ້າວຟັ່ງເຂົ້າສູ່“ຮູບແບບແຫ່ງມື້ບຸນ”.ນັບແຕ່ເວລາໃດມາ,ມື້ບຸນສະຫຼອງວັດທະນະທຳຕາເວັນຕົກໄດ້ເຂົ້າສູ່ປະເທດຈີນແລ້ວເຊັ່ນ: ບຸນຄຣິດສະມາດ,ບຸນບູຊາຜະ ແລະ ບຸນອື່ນໆທີ່ເຄີຍເຫັນຕົ້ນຄຣິດສະມາດ,ງານເຕັ້ນລຳແຕ່ງໜ້າທີ່ມ່ວນໆເຕັມໄປຕາມທ້ອງຖະໜົນທົ່ວຫົວເມືອງ.ປັດຈຸບັນນີ້,ຄຽງຄູ່ກັບຊາວຈີນຕ່າງດ້າວ ແລະ ຊາວຈີນອາໄສຢູ່ຕ່າງປະເທດຕັ້ງຖິ່ນຖານຢັ່ງຮາກຢູ່ພົ້ນທະເລ,ວັດທະນະທຳຈີນກໍໄດ້ໄປພ້ອມພຽງກັນ,ທຳໃຫ້ນິຍົມທົ່ວໂລກ.ໃນທ່າມກາງກິດຈະກຳສະຫລອງມື້ບຸນທີ່ສົ່ງທ້າຍປີເກົ່າຮັບຕ້ອນປີໃໝ່ແຕ່ລະປະເທດນັ້ນ,ປັດໃຈສຳຄັນຈີນກໍກາຍເປັນຈຸດຮຸ່ງໃສ່ທີ່ຂາດບໍ່ໄດ້.



ທິວທັດໃນຍາມກາງຄືນຂອງເມືອງຈີນໃນກຸງວໍຊິງຕັນ
华盛顿中国城的夜景 新华社 图

ເຄື່ອງທີ່ລະນຶກເຕັມປ່ຽມໄປດ້ວຍຮີດຄອງປະເພນີຈີນ

ຫວ່າງມໍ່ໆມານີ້ບັນດາປະເທດພາກັນລົງມືພິມຈຳໜ່າຍຂອງທີ່ລະນຶກປີ 2016,ເພື່ອຝາກຄວາມອວຍພອນທີ່ດີງາມຕໍ່ປີໃໝ່.ໃນນັ້ນ,ບໍ່ວ່າຈະແມ່ນສະແຕມທີ່ລະນຶກທີ່ມີຄວາມໝາຍດ້ານວັດທະນະທຳ ຫຼື ຈະແມ່ນເງິນອັດທີ່ລະນຶກປີໃໝ່ທີ່ໄດ້ມີຄຸນຄ່າສູງເກັບມ້ຽນໄວ້,ລ້ວນແຕ່ປາສະຈາກປັດໃຈສຳຄັນຈີນບໍ່ໄດ້.



ໄລຍະບຸນກຸດຈີນປະຕິທິນໃຊ້ດ້ານການກະເສດ(ຈັດທະຄະຕິ)ຂອງຈີນໃນຕະຫລາດການຄ້າຕ່າງປະເທດເຮັດໃຫ້ຄົນທັງຫຼາຍສຳຜັດກັບບັນຍາກາດເບີກບານມ່ວນຊື່ນສະຫລອງບຸນກຸດຈີນ
中国农历羊年春节期间，国外商场让人感受到中国新年的喜庆氛围 半 清 图

12 ລາສີທີ່ມາຈາກວັດທະນະທຳຈີນ,ໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນບັນດາປະເທດຢູ່ຕະຫລອດມາ.ຫວ່າງແລ້ວນີ້,ກົມໄປສະນີຝລັ່ງເສດຊີ້ອອກວ່າ,ປີ 2016 ຈະສືບຕໍ່ພິມຈຳໜ່າຍສະແຕມທີ່ລະນຶກປີໃໝ່ 12 ລາສີຮູບລີງ.ກ່ອນໜ້ານີ້ບໍ່ດົນ,ປະເທດຝລັ່ງເສດໄດ້ພິມຈຳໜ່າຍສະແຕມໃໝ່ທີ່ມີ 11 ຊະນິດອື່ນໆແລ້ວ.

“ກົມໄປສະນີການາດາເຊິ່ງມີຖານະເປັນອົງການຂອງເຈົ້າໜ້າທີ່,ໃນປີນີ້,ກໍຈະຕ້ອງພິມຈຳໜ່າຍສະແຕມລາສີປີລີງ.”ທ່ານ ເກົາຢູຕຸງ ປະທານສະມາຄົມພັດທະນາວັດທະນະທຳການາດາ-ຈີນຮັບສຳພາດຕໍ່ນັກຂ່າວແນະນຳວ່າ.ຄືກັນກັບຝລັ່ງເສດ,ການາດາໄດ້ພິມຈຳໜ່າຍສະແຕມທີ່ລະນຶກປີໃໝ່ 12 ລາສີເປັນເວລາ 10 ກວ່າປີມາແລ້ວ.

ນອກຈາກສະແຕມແລ້ວ,ສິງກະໂປ,ການາດາ ແລະ ປະເທດອື່ນໆ,ຫວ່າງປີມໍ່ໆມານີ້,ກໍໄດ້ພິມຈຳໜ່າຍເງິນອັດທີ່ລະນຶກປີໃໝ່ກໍມີເງົາລີງລາສີຂອງຈີນບໍ່ໜ້ອຍ.ຕາມລາຍງານຂ່າວຈາກສື່ມວນຊົນທ້ອງຖິ່ນການາດາລາຍງານວ່າ,ໂຮງງານຫລໍ່ຫຼອມເງິນອັດພລາຊາການາດາຈະອອກເງິນອັດທີ່ລະນຶກທີ່ເຊື່ອມໂຍງເຂົ້າປັດໃຈສຳຄັນຈີນ ແລະ ຕາເວັນຕົກຢ່າງຍອດຢ້ຽມ.ດ້ານໜຶ່ງແມ່ນເພື່ອຮູບຫົວຂອງອີລີຊາເບດລຸ້ນທີ 2 ເຈົ້າຊີວິດຍິງອັງກິດ,ອີກດ້ານໜຶ່ງໄດ້ເລືອກເອົາແຜ່ນຮູບ“ລີງປີ້ວອກເຕັ້ນຕາມງ່າໄມ້”,“ລີງຖືໝາກຄາຍ”ເຊິ່ງມີວັດທະນະທຳທີ່ເປັນມູນເຊື້ອຈີນ ແລະ ມີຄວາມອຸປະມາສີລິມົງຄົນອັນດີງາມ ແລະ ອື່ນໆທີ່ຫຼໍ່ຄວັດເຂົ້າໂຕໜັງສືຈີນ“ 猴 ”(ລີງ).




ພາບວິວຖະໜົນຫົນທາງໄທໄລຍະປີໃໝ່ປະຕິທິນໃຊ້ດ້ານກະເສດຂອງຈີນ
中国农历新年期间的泰国街景 半 清 图

ສິ່ງທີ່ໜ້າຊື່ນໃຈຂອງຄົນນັ້ນແມ່ນຜະລິດຕະພັນທີ່ລະນຶກປີໃໝ່ທີ່ມີຮີດຄອງພື້ນແຜ່ນຂອງຈີນ,ເຊິ່ງສ່ວນຫຼາຍປາສະຈາກຄວາມບັນດານໃຈໃນການອອກແບບຂອງຊາວຈີນຕ່າງດ້າວ ແລະ ຊາວຈີນແຫ່ງຕ່າງໆໃນໂລກ.

ສະແຕມລາສີທີ່ທຸກປີພິມອອກຈຳໜ່າຍນັ້ນລ້ວນແຕ່ມີແຟນມິເພື່ອນມິດເປັນຈຳນວນຫລວງຫຼາຍ,ນັກມັກຮັກສະສົມສະແຕມທ້ອງຖິ່ນຟລັ່ງເສດ ແລະ ຊາວຈີນລ້ວນແຕ່ມັກຮັກສະແຕມລາສີດັ່ງກ່າວນີ້.ທ່ານ ຮວງກອນເຈຍຜູ້ສື່ມວນຊົນອະວຸໂຊຟລັ່ງເສດເຫັນວ່າ,ລົດນິຍົມຈີນໃນວັດຖຸທີ່ລະນຶກປີໃໝ່,ສຳລັບປວງຊົນພົ້ນທະເລແມ່ນການວາງສະແດງສະເໜີວັດທະນະທຳຂອງຈີນ,ສຳລັບຊາວຈີນຕ່າງດ້າວ ແລະ ຊາວຈີນກໍແມ່ນຄວາມຝາກຄວາມຄິດຮອດຄິດເຖິງຕໍ່ປິຕຸພູມ.

ຮີດຄອງປະເພນີສະຫລອງມື້ບຸນສະແດງໃຫ້ເຫັນລົດນິຍົມຂອງຈີນໄດ້ໝົດ

ກິນເຂົ້າປີໃໝ່,ຈັດງານລາຕີກອງໄຟ,ອາບນ້ຳປີໃໝ່...ວັນບຸນປີໃໝ່,ຮີດຄອງປະເພນີແຫ່ງຕ່າງໆໃນໂລກອຸດົມສົມບູນ ແລະ ມີສີສັນຫຼາກຫຼາຍ.ປັດຈຸບັນນີ້,ສະເຫຼີມສະຫລອງປີໃໝ່ດ້ວຍຮູບແບບຈີນກຳລັງຄ່ອຍໆກາຍເປັນແຟຊັ້ນໃໝ່ຊະນິດໜຶ່ງ, ໂດຍສະເພາະແມ່ນປະເທດທີ່ມີຊາວຈີນຕ່າງດ້າວ ແລະ ຊາວຈີນທີ່ມີຜົນລະເມືອງຫຼາຍກວ່ານັ້ນ,ຮີດຄອງປະເພນີຂອງຈີນຍິ່ງແມ່ນກັບຮີດຄອງປະເພນີຂອງປະຊາຊົນທ້ອງຖິ່ນເໝືອນກັນຄືນ້ຳກັບນົມເຊື່ອມໂຍງກັນຢ່າງກົມກືນ.

ທ່ານນາງ ເຊີນເສີງ ແມ່ນເອື້ອຍລ້ຽງຍິງຊາວຈີນຜູ້ໜຶ່ງທີ່ດຳລົງຊີວິດຢູ່ການາດາເປັນເວລາ 20 ກວ່າປີ.ເມື່ອເວລາຫາກໍ່ມາເຖິງການາດານັ້ນ,ວັນປີໃໝ່ສາກົນທຸກປີ,ນາງທີ່ດຳເນີນທຸລະກິດຮ້ານອາຫານ,ຫລັງຈາກສິ່ງແຂກກັບໄປແລ້ວ,ຈະຕ້ອງຕົ້ມກ້ຽວໝໍ້ໜຶ່ງໃຫ້ຄອບຄົວໝົດທຸກຄົນ,“ທີ່ແທ້ແລ້ວ,ປີໃໝ່ສາກົນບໍ່ນັບເປັນມື້ບຸນທີ່ເປັນມູນເຊື້ອຂອງຈີນ,ແຕ່ວ່າ,ຮີດຄອງປະເພນີຂອງຈີນທີ່ເຮັດບຸນກິນກ້ຽວມາແຕ່ດົນນານແລ້ວ,ຂ້ອຍແຕ່ຍາມນ້ອຍກໍຮູ້ຈັກປີໃໝ່ສາກົນກິນກ້ຽວ.”ນາງ ເຊີນເສີງ ໄດ້ເກີດມີຄວາມຄິດຖືເອົາຮີດຄອງປະເພນີປີໃໝ່ສາກົນກິນກ້ຽວແນະນຳແກ່ຊາວການາດາ.

“ປະມານເລີ່ມແຕ່ປີ 2005,ເມື່ອເຖິງປີໃໝ່ສາກົນ,ຂ້ອຍກໍຍູ້ຂາຍອາຫານກ້ຽວຄົບຊຸດປີໃໝ່ໃນຮ້ານອາຫານ ແລະ ອອກແຮງໂຄສະນາ,ສຸດທ້າຍ,ໄດ້ຮັບຄວາມນິຍົມຊົມຊອບຫຼາຍຈາກລູກຄ້າທ້ອງຖິ່ນ.ປີໃໝ່ສາກົນໃນປີນີ້ຍັງບໍ່ທັນມາເຖິງ,ກໍມີລູກຄ້າທ້ອງຖິ່ນມາຈ່ອງກ້ຽວປີໃໝ່ສາກົນແລ້ວ.ເມື່ອໄດ້ອອກໄປຕ່າງປະເທດແລ້ວ,ກໍຈະຕ້ອງໃຫ້ຊາວຕ່າງປະເທດຫຼິ້ນບຸນປີໃໝ່ສາກົນຂອງພວກເຮົາ.” ນາງເຊີນເສີງເວົ້າຕໍ່ນັກຂ່າວທີ່ຮັບສຳພາດຂ່າວ.

ຄືຄວາມເວົ້າຂອງນາງເຊີນເສີງ,ປັດໃຈສຳຄັນຈີນແຍກອອກຈາກຄວາມນິຍົມຈາກຕ່າງປະເທດ ແລະ ຄວາມພະຍາຍາມຢ່າງຕັ້ງໜ້າຂອງຊາວຈີນຕ່າງດ້າວ ແລະ ຊາວຈີນທ້ອງຖິ່ນບໍ່ໄດ້.ທ່ານ ເກົາຢູຕຸງ ແນະນຳວ່າ,ໄລຍະປີໃໝ່ນັ້ນ,ຮ້ານອາຫານຈີນບໍ່ໜ້ອຍຂອງການາດາລ້ວນແຕ່ຕ້ອງໃຊ້ເຈັ້ຍຮອງລາສີລັກສະນະໃຊ້ເທື່ອດຽວ,ໄດ້ແປເປັນພາສາອັງກິດ,“ໂຄສະນາວັດທະນະທຳປີໃໝ່ຈີນດ້ວຍຮູບການວິທີເຫຼົ່ານີ້ໄດ້ຮັບຜົນດີຫຼາຍ.”

ຢູ່ມາເລເຊຍທີ່ມີຊາວຈີນເປັນເຊື້ອຊາດໃຫຍ່ທີ 2 ນັ້ນ,ປັດໃຈສຳຄັນກໍໄດ້ເຊື່ອມໂຍງເຂົ້າສູ່ຮີດຄອງປະເພນີປີໃໝ່ທ້ອງຖິ່ນຢ່າງເຕັມສ່ວນແລ້ວ.ທ່ານນາງ ຟອງປິນເຊຍ ພໍ່ຄ້າຊາວຂາຍຊາວຈີນສັນຊາດຟລັ່ງທີ່ດຳລົງຊີວິດຢູ່ມາເລເຊຍໄດ້ຮັບສຳພາດຂ່າວຈາກນັກຂ່າວໜັງສືພິມນີ້ແນະນຳວ່າ,ເຖິງວ່າມາເລເຊຍທີ່ມີຊົນເຜົ່າຫຼາກຫຼາຍ ແລະ ມີວັດທະນະທຳຫຼາຍຂື້ອກໍຕາມ,ແຕ່ວ່າ,ຊາວຈີນເປັນໝູ່ຄະນະເປັນຈຳນວນຫຼາຍ,ວັດທະນະທຳຂອງເຂົາເຈົ້າໄດ້ມີກຳລັງແຜ່ຂະຫຍາຍ ແລະ ກຳລັງດຶງດູດທີ່



ນັກສະແດງນຸ່ງເຄື່ອງລິເກປັກກິ່ງໄດ້ເຂົ້າຮ່ວມການແຫ່ຂະບວນລົດດອກໄມ້ລະດູບານໃໝ່ທີ່ໄດ້ຈັດຂຶ້ນຢູ່ລອນດອນປະເທດອັງກິດ
身穿京剧服装的演员参加在英国伦敦举行的新春花车巡游 新华社 图



ສະແຕັມລາສີປີລີງຈີນທີ່ການາດາພິມຈຳໜ່າຍ
加拿大发行中国猴年生肖邮票　新华社 图

ແຮງກ້າ.ປັດຈຸບັນນີ້,ປີໃໝ່ມາເລເຊຍໄດ້ເຕັມໄປດ້ວຍຮີດຄອງປະເພນີຂອງຈີນຢູ່ທຸກໆແຫ່ງຫົນ,ຈະເຫັນໄດ້ໂຄມໄຟແດງ,ຊຸກມັງກອນ ແລະ ເຊີດສິງ ໂຕຢູ່ທຸກແຫ່ງ. "ເມື່ອມາຮອດປີໃໝ່,ບໍ່ພຽງແຕ່ແມ່ນຊາວຈີນຕ່າງດ້າວ ແລະ ຊາວຈີນລ້ວນແຕ່ຫ້ອຍ ໂຄມໄຟ,ຕິດພາບວາດສະຫລອງປີໃໝ່,ຊາວມາເລກໍມາຊື້ຂອງປີໃໝ່ຈີນ."ທ່ານ ຟອງປິງເຊຍ ໄດ້ເວົ້າແນວນັ້ນ.

ພິທີສະຫລອງແມ່ນເຄີຍເຫັນເງົາຊາວຈີນເລື້ອຍໆ ຄຽງຄູ່ກັບປັດໃຈຈີນປະດັບປະດາພິທີສະຫລອງປີໃໝ່ຂອງບັນດາປະເທດໃນໂລກ,ເງົາຊາວຈີນຕ່າງດ້າວ ແລະ ຊາວຈີນໄດ້ນັບມື້ນັບຄຶກຄັກຢູ່ໃນ.ຜູ້ຈັດຕັ້ງພິທີສະຫລອງປີໃໝ່,ຜູ້ເຂົ້າຮ່ວມການເຄື່ອນໄຫວສະຫລອງມື້ບຸນ,ຜູ້ອອກແບບຂອງທີ່ລະນຶກ...ເມື່ອຮອດປີໃໝ່ສາກົນ,ບັນດາຊາວຈີນຕ່າງດ້າວ ແລະ ຊາວຈີນກໍຈະຕ້ອງມີຄວາມຟ້າວຟັ່ງຫຼາຍທີ່ສຸດ.

ຫວ່າງກ່ອນນີ້ບໍ່ດົນ,ຢູ່ໃນຊາມົວເຊິ່ງເປັນປະເທດເກາະດອນມະຫາສະໝຸດປາຊີຟິກ,ບໍລິສັດຊາວຈີນຕ່າງດ້າວ ແລະ ຊາວຈີນທ້ອງຖິ່ນເປັນເຈົ້າການນຳໜ້າຈັດພິທີໂຄມໄຟຮຸ່ງແຈ້ງໃນປີໃໝ່ສາກົນຮອບໜຶ່ງທີ່ສະໜາມຫຼວງໃຈກາງໃນະຄອນຫຼວງອາເປຍ.

ໃນມື້ເປີດພິທີ,ອາຄານການຄ້າໃຈກາງອາເປຍລ້ວນແຕ່ຫ້ອຍ ໂຄມໄຟແດງໃຫຍ່ທີ່ສົດຊື່ນເຕັມໄປໝົດ,ດອກໄຟສີທຸກຮູບທຸກແບບໄດ້ປະດັບປະດາສິ່ງປຸກສ້າງໃໝ່ໝົດ. ໃນພິທີໄດ້ສາຍຮູບເງົາເລື່ອງຟິມ ໂຄສະນາແນະນຳປະຫວັດສາດວັດທະນະທຳຂອງຈີນ,ຊາວຊາມົວທ້ອງຖິ່ນຍັງເຕັ້ນລຳທຳເພງຂອງຊົນເຜົ່າທີ່ມີອາລົມເຮົ້າຮ້ອນ.ເມື່ອການເຄື່ອນໄຫວເຂົ້າສູ່ກະແສສູງ,ໃນທ່າມກາງສຽງຂອງແຂກທັງໝົດທີ່ນັບເລກຖອຍຫຼັງນັ້ນ,ທ່ານຟູຢໍ ໂທຮອງນາຍົກລັດຖະມົນຕີຊາມົວ,ທ່ານວາງເສຍຟອງເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນປະຈຳຊາມົວ ແລະ ນັກທຸລະກິດຊາວຈີນຕ່າງດ້າວ ແລະ ຊາວຈີນຮ່ວມກັນກົດປຸ່ມໄຟຮຸ່ງ, ໂຄມໄຟປີໃໝ່ໃນສະໜາມຫຼວງໃຈກາງນະຄອນຫຼວງບາດດຽວກໍຮຸ່ງຂຶ້ນໝົດທີບ,ແສງໄຟຮຸ່ງເຮືອງເຫຼື້ອມເຫຼື້ອມ,ໄຟນີອອນຍິບຍັບຍັບຍິບໃນກາງຄືນລາຕີ.

ນອກຈາກການເຄື່ອນໄຫວສະເຫຼີມສະຫລອງປີໃໝ່ຂອງທ້ອງຖິ່ນທີ່ເປັນເຈົ້າພາບຈັດຂຶ້ນນັ້ນ,ຍັງມີສີສັນຈີນຂອງຊາວຈີນພົ້ນທະເລມີແຕ່"ຄົນດຽວ"ແຕ່"ມີກຳລັງບໍ່ນ້ອຍ"ເພື່ອເພີ່ມຕື່ມສີສັນໃຫ້ປີໃໝ່ໃຫ້ຊາວຈີນທີ່ຢູ່ຕ່າງປະເທດ.ເດັກຍິງຫຼິວຢູຍລິນອາຍຸ 17 ປີສັນຊາດຈີນຂອງອາເມລິກາກໍເປັນຕົວຢ່າງຜູ້ໜຶ່ງ.

ກ່ອນໜ້ານີ້ບໍ່ດົນ,ການເປີດຜົນການປະກວດເຈົ້າຍິງດອກກຸຫຼາບທີ່"ແຫ່ຂະບວນໃຫຍ່ລົດປະດັບປະດາດອກກຸຫຼາບ"ໃນປີໃໝ່ສາກົນລັດກາລີຟໍເນຍອາເມລິກາ,ການຄັດເລືອກເຂົ້າເປັນເຈົ້າຍິງກຸຫຼາບຂອງເດັກຍິງຫຼິວຢູຍລິນໄດ້ປະຈັບຕາຂອງມວນຊົນອາເມລິກາ.ງານສະແດງດອກກຸຫຼາບຂອງລັດກາລີຟໍເນຍອາເມລິກາສົມກຽດເປັນກິດຈະກຳສະເຫຼີມສະຫຼອງປີໃໝ່ທີ່ມີຂະໜາດໃຫຍ່ທີ່ສຸດໃນທົ່ວອາເມລິກາ,ແຕ່ວ່າ,ເຈົ້າຍິງກຸຫຼາບກໍເປັນດາລາ ໂຊກດີທີ່"ແຫ່ຂະບວນໃຫຍ່ລົດປະດັບປະດາດອກກຸຫຼາບ"ໃນທຸກປີ.ເດັກຍິງເຊື້ອຊາດຈີນຜູ້ທີ 3 ທີ່ເລືອກເຟັ້ນເປັນເຈົ້າຍິງກຸຫຼາບນັບແຕ່ປີ 2000 ເປັນຕົ້ນມາ,ການທີ່ຫຼິວຢູຍລິນຖືກເລືອກເຟັ້ນບໍ່ພຽງແຕ່ເປັນກຽດຕິຍົດຂອງຊາວຈີນທ້ອງຖິ່ນເທົ່ານັ້ນ,ຍັງນຳເອົາກິ່ນຂອງຈີນທີ່ສົດຊື່ນໃໝ່ກຸ່ມໜຶ່ງໃຫ້ແກ່ງານສະແດງດອກກຸຫຼາບໃນປີນີ້ອີກດ້ວຍ.

ຄືກັນກັບຫຼິວຢູນລິນ,ປັດຈຸບັນນີ້,ຊາວຈີນຕ່າງດ້າວ ແລະ ຊາວຈີນທີ່ນັບມື້ນັບເຊື່ອມ ໂຍງເຂົ້າສູ່ສັງຄົມກະແສຫຼັກຂອງຊາວຈີນນັບມື້ຫຼາຍຢ່າງຕັ້ງໜ້າ, ໄດ້ສະແດງໃຫ້ພາບພົດຂອງຕົນຢ່າງເຊື່ອໃຈເອງ,ພະຍາຍາມເຜີຍແຜ່ວັດທະນະທຳຈີນ,ເຮັດໃຫ້ປັດໃຈຈີນສາມາດເຂົ້າສູ່ຈັກຂຸວິນຍານຂອງປວງຊົນໃນແຫ່ງຕ່າງໆທົ່ວ ໂລກ ແລະ ໄດ້ຮັບຄວາມນິຍົມຊົມຊອບຈາກພວກເຂົາເຈົ້າ.

ເນື່ອງໃນ ໂອກາດປີໃໝ່ຈະມາເຖິງນັ້ນ,ທ່ານ ເຢີນລີໜິງ ຮອງປະທານສະມາຄົມຈີນຝລັ່ງໄດ້ມາຈີນສະເພາະເພື່ອຊື້ ໂຄມໄຟ,ເຄື່ອງນຸ່ງແບບລາຊາວົງຖັງ ແລະ ເຄື່ອງອື່ນໆ,ນຳເອົາກັບໄປຝລັ່ງ.ຕາມຄວາມຄິດເຫັນຂອງທ່ານວ່າ,ການເຜີຍແຜ່ວັດທະນະທຳທີ່ດີເລີດຂອງປະຊາຊາດຈີນແບກຫາບໜ້າທີ່ເປັນທູດການໄປມາຫາສູ່ກັນລະຫວ່າງຈີນກັບຕ່າງປະເທດເປັນພາລະໜ້າທີ່ຂອງຕົນ.

"ເຖິງແມ່ນວ່າຂ້ອຍໄດ້ສຳຜັດກັບວັດທະນະທຳຂອງຊົນຊາດອື່ນໆບໍ່ໜ້ອຍ,ແຕ່ວ່າຂ້ອຍຍັງຄົງຮັບຮອງເອົາ ແລະ ຮັກຫອມວັດທະນະທຳທີ່ເປັນມູນເຊື້ອຂອງຈີນຢ່າງເລິກເຊິ່ງ,ຂ້ອຍກໍຫວັງຢ່າງຍິ່ງວ່າ,ຈະແນະນຳວັດທະນະທຳທີ່ເປັນມູນເຊື້ອຂອງຈີນໃຫ້ເພື່ອນມິດຕ່າງປະເທດຍິ່ງຫຼາຍຈົນສຸດຄວາມສາມາດ."ທ່ານ ຟູງປິນເຊຍ ເວົ້າດ້ວຍພາກພູມໃຈເຊັ່ນນັ້ນ.


ປາຣີຈັດລົດດອກໄມ້ແຫ່ຂະບວນເພື່ອສະຫລອງປີໃໝ່
巴黎举行花车游行庆新年　新华社 图

# ບໍລິສັດກໍ່ສ້າງໄຟຟ້າຈີນເຍືອງຮຸ່ງແຈ້ງຕະຫຼາດສາກົນ

## 中国电建 点亮国际市场

东南亚、南亚、西亚、非洲、欧洲……乘着"一带一路"建设的东风，中国电建正秉持着"走出国门、适应环境、合作共赢"的理念大步"走出去"，用电点亮了一个个惠及当地的国际项目。

ວັນທີ 29 ພະຈິກ ປີ 2015,ເຂື່ອນໄຟຟ້ານ້ຳອູທີ່ເປັນເຂື່ອນໄຟຟ້າແບບຂັ້ນໄດຕາມແມ່ນ້ຳທີ່ເປັນພຽງໜຶ່ງດຽວພາຍໃນປະເທດລາວນັ້ນໄດ້ເລີ່ມຜະລິດໄຟຟ້າຢ່າງເປັນທາງການ.ຫຼັງຈາກເຂື່ອນໄຟຟ້າແບບຂັ້ນໄດ 7 ແຫ່ງໃນໂຄງການໄລຍະໜຶ່ງ ແລະ ໄລຍະສອງສ້າງສຳເລັດແລ້ວ,ຄວາມສາມາດຜະລິດໄຟຟ້າຈະກວມ 39% ຂອງຍອດປະລິມານຄວາມສາມາດຜະລິດໄຟຟ້າຂອງປະເທດລາວໃນປະຈຸບັນ.ເຊິ່ງໂຄງການດັ່ງກ່າວເປັນໂຄງການທຳອິດຂອງວິສາຫະກິດຈີນໄດ້ຮັບສິດບຸກເບີກຕາມສາຍແມ່ນ້ຳຢູ່ຕ່າງປະເທດ,ເຮັດໃຫ້ບໍລິສັດກໍ່ສ້າງໄຟຟ້າຈີນໄດ້



ຮູບພາບຂອງໂຮງງານໄຟຟ້າຖ່ານຫີນຄາຊີມຸກເຊິ່ງແມ່ນບໍລິສັດສັງກັດກຸ່ມການກໍ່ສ້າງໄຟຟ້າຈີນ ແລະ ບໍລິສັດການລົງທຶນກາຕາແຫ່ງໜຶ່ງຮ່ວມທຶນກໍ່ສ້າງຂຶ້ນທີ່ບໍລິເວນຄາລາຊີ
由中国电建集团下属公司和卡塔尔的一家投资公司在卡拉奇附近合资兴建的卡西姆火电站的效果图 新华社 图



ບ່ອນບາດກ້າວໃໝ່ໃນການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ".

ອາຊີຕາເວັນອອກສ່ຽງໃຕ້,ອາຊີໃຕ້,ອາຊີຕາເວັນຕົກ,ອາຟຼິກາ,ເອີລົບ... ໂດຍໄປນຳກະແສແຫ່ງນະໂຍບາຍ "ໜຶ່ງແລວທາງ ໜຶ່ງເສັ້ນທາງ",ບໍລິສັດກໍ່ສ້າງໄຟຟ້າຈີນພວມປະຕິບັດຕາມທັດສະນະ"ກ້າວສູ່ພາຍນອກ,ລື້ງກັບສະພາບແວດລ້ອມ,ຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ",ໄດ້ສ້າງໂຄງການສາກົນທາງດ້ານໄຟຟ້າຕ່າງໆທີ່ນຳເອົາຜົນປະໂຫຍດໃຫ້ແກ່ທ້ອງຖິ່ນຕ່າງໆ.ນັບມາຮອດທ້າຍປີ 2014,ບໍລິສັດກໍ່ສ້າງໄຟຟ້າຈີນໄດ້ຮັບເໝົາໂຄງການກໍ່ສ້າງ ແລະ ດຳເນີນການລົງທຶນຢູ່ 21



ຊາວບ້ານບ້ານນ້ຳຕິງເມືອງພູຄູນແຂວງຫລວງພະບາງກຳລັງກວດສຸຂະພາບໃນໂຮງພະຍາບານຂອງບໍລິສັດເຂື່ອນໄຟຟ້ານ້ຳງື່ມທີ 5 ລາວຈຳກັດບໍລິສັດກໍ່ສ້າງໄຟຟ້າຈີນສ້າງຕັ້ງຂຶ້ນ
老挝琅勃拉邦省普坤县南汀村，村民在由中国电建老挝南俄 5 发电有限公司修建的卫生院内体检 新华社 图

ປະເທດ ແລະ ເຂດແຄວ້ນຢູ່ເຂດສຳຄັນລຽບຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ໂຄງການທີ່ກຳລັງກໍ່ສ້າງຢູ່ບັນລຸເຖິງ 571 ໂຄງການ.

ຢູ່ກຳປູເຈຍ,ໂຄງການເຂື່ອນໄຟຟ້ານ້ຳຕົກແບບ BOT ທີ່ເປັນໂຄງການທຳອິດທີ່ບໍລິສັດກໍ່ສ້າງໄຟຟ້າຈີນລົງທຶນຢູ່ຕ່າງປະເທດ,ຄືເຂື່ອນໄຟຟ້ານ້ຳຕົກອັນໄຊໄດ້ສ້າງສຳເລັດໃນເດືອນ ທັນວາ ປີ 2011,ເຊິ່ງໄດ້ປ່ຽນແປງສະພາບການທີ່ຕ້ອງຈຳກັດການນຳໃຊ້ໄຟຟ້າຢູ່ທ້ອງຖິ່ນແຫ່ງນັ້ນ,ແລະ ໄດ້ຫຼຸດລາຄາໄຟຟ້າທີ່ໃຊ້ໃນຊີວິດການເປັນຢູ່ຢ່າງຫຼວງຫຼາຍ.

ຢູ່ປາກີສະຖານ,ໂຄງການຜະລິດໄຟຟ້າດ້ວຍພະລັງລົມທີ່ມີຄວາມສາມາດຜະລິດໄຟຟ້າ 49.500 ກິໂລວັດນັ້ນໄດ້ຮັບໃບທະບຽນຜະລິດໄຟຟ້າ ແລະ ໃບອະນຸຍາດເຂົ້າເຄືອຂ່າຍ,ຈະຜະລິດໄຟຟ້າໃນທ້າຍປີນີ້;ໂຮງງານຜະລິດໄຟຟ້າດ້ວຍຖ່ານຫີນຂະໜາດ 2 x 660.000 ກິໂລວັດຢູ່ທ່າກາຊິມທີ່ຖືກກຳນົດເປັນ"ໂຄງການໝາຍເລກ 1 ຂອງປາກີສະຖານ"ນັ້ນໄດ້ເລີ່ມລົງມືກໍ່ສ້າງ,ຫຼັງຈາກສ້າງສຳເລັດແລ້ວຈະຫຼຸດຜ່ອນສະພາບການຂາດເຂີນໄຟຟ້າຢ່າງຫຼວງ




CFP 图

ຫຼາຍຢູ່ປາກິສະຖານ.

ຢູ່ອາຊີຕາເວັນອອກ,ບໍລິສັດໄດ້ຊະນະການປະມູນໃນ"ໂຄງການທໍ່ສົ່ງນ້ຳມັນ ແລະ ອາຍແກັດຈາກພາກຕາເວັນອອກໄປສູ່ພາກຕາເວັນຕົກ"ພ້ອມດ້ວຍໂຮງງານຜະລິດໄຟຟ້າຢູ່ອາຣັບບີຊາອຸດີດ້ວຍມູນຄ່າ 3,3 ຕື້ໂດລາ,ເຮັດໃຫ້ບໍລິສັດກໍ່ສ້າງໄຟຟ້າຈີນເຂົ້າສູ່ຂະແໜງການນ້ຳມັນ ແລະ ອາຍແກັດຂອງອາຣັບບີຊາອຸດີ.

ຢູ່ອາຟຼິກາ,ບໍລິສັດກໍ່ສ້າງໄຟຟ້າຈີນໄດ້ລົງເລິກດຳເນີນວຽກງານຢ່າງລະອຽດ.ປີ 2012,ໄດ້ສ້າງເຂື່ອນໄຟຟ້ານ້ຳຕົກກີປູໂລທີ່ເປັນເຂື່ອນໄຟຟ້ານ້ຳຕົກແຫ່ງທຳອິດຂອງກີເນເສັ້ນສູນສູດ,ເຊິ່ງເປີດຍຸກສະໄໝໃໝ່ທີ່ນຳໃຊ້ພະລັງງານສະອາດຢູ່ທ້ອງຖິ່ນແຫ່ງນັ້ນ;ປີ 2013,ໄດ້ຊະນະການປະມູນໃນໂຄງການ EPC ຜະລິດໄຟຟ້າດ້ວຍພະລັງລົມໄລຍະສອງຢູ່ອາຕາມາຂອງເອທິໂອບີ,ອັນທີ່ເປັນໂຄງການຜະລິດໄຟຟ້າດ້ວຍພະລັງລົມໂຄງການທຳອິດທີ່ນຳໃຊ້ມາດຕະຖານຈີນ ແລະ ກໍ່ສ້າງດ້ວຍເຕັກນິກຂອງຈີນຢູ່ຕ່າງປະເທດ.ແຕ່ປີ 2004 ເປັນຕົ້ນມາ,ບໍລິສັດກໍ່ສ້າງໄຟຟ້າຈີນໄດ້ສ້າງເຂື່ອນໄຟຟ້ານ້ຳຕົກ, ໂຮງງານຜະລິດໄຟຟ້າດ້ວຍພະລັງແສງຕາເວັນ,ພະ ລັງລົມ,ແລະ ຖ່ານຫີນນັ້ນລວມມີຄວາມສາມາດຜະລິດໄຟຟ້າເຖິງ 44 ລ້ານກິໂລວັດ,ຊຸກຍູ້ການສົ່ງອອກເຄື່ອງຈັກຂອງຈີນຕົກເປັນມູນຄ່າປະມານ 10 ຕື້ໂດລາ.

ຢູ່ເອີລົບ,ບໍລິສັດໄດ້ເປີດກວ້າງຕະຫຼາດຢ່າງບໍ່ຢຸດຢັ້ງ.ໄດ້ໂອນຊື້ບໍລິສັດ TLT ຂອງເຢຍລະມັນ,ກາຍເປັນຜູ້ສະໜອງເຄື່ອງຈັກຜະລິດໄຟຟ້າດ້ວຍພະລັງລົມຂະໜາດໃຫຍ່ທີ່ສຸດໃນສາກົນ,ໄດ້ມີສິດຊັບສິນທາງປັນຍາທີ່ເປັນເຈົ້າຕົນເອງ ແລະ ເຕັກນິກໃຈກາງທີ່ນຳໜ້າໃນຂະແໜງການເຄື່ອງຈັກຜະລິດໄຟຟ້າດ້ວຍພະລັງລົມ.ນອກນີ້,ຍັງໄດ້ເຊັນສັນຍາກັບມາເຊໂດນີກ່ຽວກັບໂຄງການທາງດ່ວນສອງສາຍທີ່ມີຍອດມູນຄ່າເຖິງ 870 ລ້ານໂດລາ.

"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ການກໍ່ສ້າງພື້ນຖານໂຄງລ່າງຈະດຳເນີນໄປກ່ອນ,ໃນນັ້ນການກໍ່ສ້າງໄຟຟ້າກໍ່ເປັນສິ່ງນຳໜ້າອີກ.ສະນັ້ນ,ຫຼາຍປະເທດລຽບຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ໄດ້ຖືການເລັ່ງລັດພັດທະນາໄຟຟ້າເປັນບູລິມະສິດແຫ່ງການພັດທະນາ.ທ່ານເຢັນຈື້ຢົງ,ປະທານຄະນະບໍລິຫານກຸ່ມບໍລິສັດກໍ່ສ້າງໄຟຟ້າຈີນກ່າວວ່າ,"ພວກເຮົາຮູ້ນ້ຳ,ລົ້ງໄຟຟ້າ,ຊ່າງອອກແບບ ແລະ ວາງແຜນການ,ມີຄວາມຊຳນານໃນການກໍ່ສ້າງ,ສາມາດລົງທຶນ ແລະ ດຳເນີນທຸລະກິດ,ກິດຈະການໄດ້ປົກຫຸ້ມທຸກຂົງເຂດໃນພື້ນຖານໂຄງລ່າງ."ການປະຕິບັດການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ເຮັດໃຫ້ບໍລິສັດກໍ່ສ້າງໄຟຟ້າຈີນທີ່ໄດ້ບຸກເບີກຕະຫຼາດສາກົນເປັນເວລາ 30 ກວ່າປີນັ້ນພວມປະເຊີນກັບກາລະໂອກາດທີ່ດີໃນການພັດທະນາທຸລະກິດຢູ່ຕ່າງປະເທດ.

ໃນຂະບວນການປະຕິບັດໂຄງການຢູ່ຕ່າງປະເທດ,ບໍລິສັດໄດ້ຍຶດໝັ້ນຕາມທິດ"ໄວ້ເນື້ອເຊື່ອໃຈກັນ,ຕ່າງຝ່າຍຕ່າງມີຜົນປະໂຫຍດ".ເຂົາເຈົ້າສົ່ງເສີມໃຫ້ນຳໃຊ້ແຮງງານຢູ່ກັບທີ່,ອົບຮົມກຳມະກອນຂອງທ້ອງຖິ່ນເປັນຈຳນວນຫຼວງຫຼາຍ,ໄດ້ສ້າງ 4 ແສນຕຳແໜ່ງງານປະກອບອາຊີບຢູ່ຕ່າງປະເທດ;ເຂົາເຈົ້າປະຕິບັດຕາມຄວາມຮັບຜິດຊອບທາງສັງຄົມ,ເຜີຍແຜ່ມິດຕະພາບຂອງປະເທດຈີນ,ຊ່ວຍເຫຼືອນັກຮຽນນັກສຶກສາຜູ້ທຸກຍາກ,ຊ່ວຍລຶບລ້າງຄວາມທຸກຍາກ,ເອົາໃຈໃສ່ວຽກງານສາທາລະນະສຸກ,ແລະ ຊ່ວຍເຫຼືອການສ້າງສາຄືນໃໝ່ຫຼັງໄພທຳມະຊາດ,ເຊິ່ງໄດ້ຮັບຍ້ອງຍໍ ແລະ ສຽງຕອບຮັບທີ່ດີຢ່າງຫຼວງຫຼາຍຢູ່ປະເທດຕ່າງໆທີ່ເຂົາເຈົ້າໄປດຳເນີນທຸລະກິດ.



ພາບລວມຂອງບ້ານໃໝ່ຍົກຍ້າຍປະຊາຊົນບ້ານພາຈິງເມືອງອວຍແຂວງຫລວງພະບາງເຊິ່ງແມ່ນບໍລິສັດໄຟຟ້າລຸ່ມນ້ຳອູລາວຂອງກຸ່ມບໍລິສັດກໍ່ສ້າງໄຟຟ້າຈີນສ້າງຕັ້ງຂຶ້ນ
由中国电建集团老挝南欧江流域发电有限公司建设的老挝琅勃拉邦省孟威县帕景村新移民村全景 新华社 图

图 / 新华社

# ການເປີດປະຕູສູ່ພາຍນອກ:ຈີນກັບໂລກເຕີບໂຕພ້ອມກັນ

### 开放：中国与世界的同频共振

开放带来进步。自 1978 年以来，改革开放给中国带来了巨大的发展机遇。如今，全球化趋势日益加深，“十三五”规划建议将“开放”列为“五大发展理念”之一，就是为了营造中国与世界深度融合、同频共振的互利合作格局。

ການເປີດປະຕູສູ່ພາຍນອກພາໃຫ້ເກີດມີຄວາມກ້າວໜ້າ.ແຕ່ປີ 1978 ເປັນຕົ້ນມາ,ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກໄດ້ພາໃຫ້ເກີດມີການປ່ຽນແປງອັນໃຫຍ່ຫຼວງຢູ່ຈີນ.ປະຈຸບັນນີ້,ທ່າອ່ຽງໂລກາພິວັດນັບມື້ນັບຂະຫຍາຍກວ້າງອອກ,ແຜນການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 13 ຂອງຈີນໄດ້ສະເໜີໃຫ້ຈັດ“ການເປີດປະຕູສູ່ພາຍນອກ”ເປັນໜຶ່ງໃນ“5 ທັດສະນະສຳຄັນແຫ່ງການພັດທະນາ”,ນັ້ນກໍ່ແມ່ນເພື່ອສ້າງສະພາບການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດທີ່ຈີນກັບໂລກເຊື່ອມເຂົ້າກັນໃນລະດັບສູງ ແລະ ພັດທະນາພ້ອມກັນ.

ຫົວຂໍ້ຈຸດຮ້ອນທີ່ທົ່ວໂລກໃຫ້ຄວາມສົນໃຈ

“ໃນຖານະເປັນທີ່ປຶກສາຂອງສະຖານທູດອິສລັງປະຈຳຈີນ,ຂ້າພະເຈົ້າສົນໃຈວ່າແຜນການ 5 ປີຄັ້ງທີ 13 ຂອງຈີນຈະມີຜົນສະທ້ອນແນວໃດຕໍ່ເສດຖະກິດໂລກ?”



ກະຕ້າດອກໄມ້ "ຄວາມຝັນຈີນ "ໃນສະໜາມຫຼວງທຽນອານເໝິນປັກກິ່ງ
北京天安门广场“中国梦”花坛



“ໃນຖານະເປັນຜູ້ຕາງໜ້າບໍລິສັດ ADM ຂອງອາເມລິກາ,ຂ້າພະເຈົ້າສົນໃຈວ່າ,ໃນໄລຍະປະຕິບັດແຜນການ 5 ປີຄັ້ງທີ 13,ການເປີດປະຕູສູ່ພາຍນອກໃນຂົງເຂດກະສິກຳຂອງຈີນຈະເລັ່ງລັດບາດກ້າວໄວຂຶ້ນຫຼືບໍ່?”...ໃນເວລາໃຫ້ສຳພາດ,ທ່ານ ປາງເວີຍມິນ,ຮອງຫົວໜ້າຫ້ອງການໜ່ວຍຊີ້ນຳວຽກງານເສດຖະກິດການເງິນສູນກາງຈີນກ່າວວ່າ,“ການເຕີບໂຕຂອງເສດຖະກິດຈີນມີບົດບາດກະຕຸກຊຸກຍູ້ຕໍ່ເສດຖະກິດໂລກ,ແຕ່ການເພີ່ມຂຶ້ນຂອງແຮງກົດດັນເນື່ອງຈາກເສດຖະກິດຈີນພັດທະນາຊ້າລົງນັ້ນກໍ່ຈະເຮັດໃຫ້ແຮງກົດດັນທີ່ເສດຖະກິດໂລກພັດທະນາຊ້າລົງນັ້ນເພີ່ມຂຶ້ນເຊັ່ນກັນ.ຄຽງຄູ່ກັບຄວາມຕ້ອງການພາຍໃນປະເທດຈີນເພີ່ມຂຶ້ນ,ຕະຫຼາດຈີນອັນໃຫຍ່ຫຼວງຈະກະຕຸກຊຸກຍູ້ປະລິມານການສະໜອງສິນຄ້າຂອງອົງກອນເສດຖະກິດພາຍນອກຕໍ່ຈີນ.”

ໃນຖານະເປັນປະເທດທີ່ມີຍອດປະລິມານເສດຖະກິດເປັນອັນດັບສອງໃນໂລກ ແລະ ມີຄັງສະສົມເງິນຕາຕ່າງປະເທດທີ່ມີມູນຄ່າ 4000 ຕື້ໂດລາ,ການເຄື່ອນໄຫວດ້ານເສດຖະກິດກັບພາຍນອກຂອງຈີນມີຜົນສະທ້ອນຕໍ່ເສດຖະກິດຂອງບັນດາປະເທດ,ຕະຫຼາດພາຍໃນປະເທດຂອງຈີນສາມາດຕອບສະໜອງກັບຄວາມຕ້ອງການດ້ານການລົງທຶນຂອງວິສາຫະກິດປະເທດຕ່າງໆ.ຈີນຈະສືບຕໍ່ປະຕິບັດຕາມທັດສະນະເປີດປະຕູສູ່ພາຍນອກ,ແລະ ລົງເລິກນະໂຍບາຍເປີດປະຕູຫຼືບໍ່,ໄດ້ກາຍເປັນຫົວຂໍ້ຈຸດຮ້ອນທີ່ທົ່ວໂລກໃຫ້ຄວາມສົນໃຈໃນລະດັບສູງ.

ພຶດຕິກຳທີ່ຈີນປະຕິບັດຢ່າງສະເໝີຕົ້ນສະເໝີປາຍ

ຈາກການສ້າງຕັ້ງເຂດເສດຖະກິດພິເສດ,ຮອດການຊຸກຍູ້ການຄ້າກັບຕ່າງປະເທດ ແລະ ນຳໃຊ້ທຶນຕ່າງປະເທດ,ແລ້ວຈີນຮອດການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ,ໃນເວລາ 37 ປີທີ່ຜ່ານມາ,ຈີນແມ່ນຢູ່ບົນເສັ້ນທາງທີ່ເປີດປະຕູສູ່ພາຍນອກໂດຍຕະຫຼອດ,ແລະ ໄດ້ລົງສູ່ລວງເລິກຢ່າງບໍ່ຢຸດຢັ້ງ.


ຂົວໂລຫູເຊິນເຈີ້ນເປັນສັກຂີພິຍານການຄືບໜ້າພັດທະນາການປະຕິຮູບ ແລະ ເປີດປະຕູສູ່ພາຍນອກຂອງເຊິນເຈີ້ນ
深圳罗湖桥见证深圳改革开放发展进程


ຫວ່າງປີມໍ່ໆມານີ້,ຊົນນະບົດແຫ່ງຕ່າງໆຂອງຈີນໄດ້ເລີ່ມຕົ້ນສືບຄົ້ນກໍ່ສ້າງຮູບແບບລ້ຽງດູຜູ້ມີອາຍຸສູງໃນຊົນນະບົດ,ມີຄົນເປັນຈຳນວນນັບມື້ນັບຫຼາຍຂຶ້ນໄດ້ຮັບການສະເຫວີຍສຸກຮ່ວມກັນຍິ່ງຫຼາຍໃນການພັດທະນາກໍ່ສ້າງຮ່ວມກັນ
近年来，中国各地农村开始探索建设农村养老模式，越来越多的人在共建共享发展中享有了更多获得感

ການກໍ່ສ້າງ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ເປັນຮູບການອັນສຳຄັນທີ່ຈີນກ້າວສູ່ໂລກ ແລະ ສະແຫວງຫາການພັດທະນາຮ່ວມກັບບັນດາປະເທດ.ປະຈຸບັນ,ຈີນໄດ້ຊຸກຍູ້ການກໍ່ສ້າງພື້ນຖານໂຄງລ່າງເຊື່ອມຕໍ່ທາງລົດໄຟ,ຂົວ,ທ່າເຮືອ ແລະ ອື່ນໆຢູ່ປະເທດຕາມແລວທາງ,ເພື່ອສ້າງພື້ນຖານໃຫ້ແກ່ການເຊື່ອມຕໍ່ກັນ ແລະ



ຜູ້ຊົມທັງຫຼາຍໄດ້ສຳຜັດໂທລະສັບມືຖືອີຄິວ Mate8 ຂອງຮວາເວີຍໃນງານວາງສະແດງຊົມໃຊ້ເອເລັກໂຕຼນິກທີ່ລັດສະເວກັສອາເມລິກາ
美国拉斯韦加斯消费电子展上，参观者体验华为 Mate 8 智能手机

ເຊື່ອມໂຍງກັນ. "ທາງລົດໄຟເສິງຕູ-ເອີລົບ" "ທາງລົດໄຟຈຸງກິງ-ຊິນຈ່ຽງ-ເອີລົບ""ທາງລົດໄຟອີອູ-ຊິນຈ່ຽງ-ເອີລົບ"ໄດ້ເປີດທາງຜ່ານທາງບົກລະຫວ່າງຈີນກັບເອີລົບ,ເຮັດໃຫ້ການຄ້າ ແລະ ການຈໍລະຈອນສິນຄ້າຍິ່ງມີຄວາມສະດວກສະບາຍກວ່າເກົ່າ.

ນອກນີ້,ຜູ້ນຳຈີນໄປຢ້ຽມຢາມຕ່າງປະເທດທຸກເທື່ອ,ວິສາຫະກິດທີ່ໄປນຳນັ້ນລ້ວນແຕ່ຈະໄດ້ຮັບໃບສັ່ງສິນຄ້າທີ່ມີມູນຄ່າສູງສົມຄວນ.ຕົວຢ່າງວ່າ,ຫວ່າງກ່ອນນີ້ບໍ່ດົນ,ທ່ານ ສີຈິ້ນຜິງ,ປະທານປະເທດຈີນໄປຢ້ຽມຢາມປະເທດອັງກິດກໍພາໃຫ້ກຳເນີດໃບສັ່ງທີ່ມີຍອດມູນຄ່າ 400 ຕື້ປອນ,ເຊິ່ງກ່ຽວພັນເຖິງຂະແໜງການທົ່ວຄິດປະດິດສ້າງ,ການຄ້າຂາຍຍ່ອຍ,ພະລັງງານ,ການບໍລິການດ້ານການທະນາຄານ,ວິທະຍາສາດເຕັກໂນໂລຊີ,ການສຶກສາ ແລະ ອື່ນໆ,ນີ້ກໍ່ຈະສ້າງຫຼາຍກວ່າ 3900 ຕຳແໜ່ງວຽກງານໃຫ້ແກ່ອັງກິດ.

ການລິເລີ່ມສ້າງທະນາຄານພັດທະນາປະເທດ BRICKS,ການລິເລີ່ມສ້າງທະນາຄານລົງທຶນພື້ນຖານໂຄງລ່າງອາຊີ,ຮຽກຮ້ອງໃຫ້ປະຕິຮູບອົງການກອງທຶນ ແລະ ເງິນຕາສາກົນ,ຍົກເວັ້ນໜີ້ສິນໃຫ້ແກ່ປະເທດທີ່ດ້ອຍພັດທະນາທີ່ສຸດ...ໃນການພັດທະນາ ແລະ ການໝູນວຽນຂອງເສດຖະກິດໂລກ,ຈີນໄດ້ຕັ້ງໜ້າມີສ່ວນຮ່ວມເຂົ້າໃນການປັບປຸງເສດຖະກິດໂລກ,ພ້ອມທັງແບກຫາບໜ້າທີ່ ແລະ ພັນທະສາກົນຢ່າງຕັ້ງໜ້າ.

ທິດທາງກ້າວໜ້າທີ່ຈະແຈ້ງ

ວັນທີ 22 ກັນຍາ ປີ 2015,ໃນເວລາເຂົ້າຮ່ວມງານລ້ຽງຕ້ອນຮັບທີ່ຈັດຂຶ້ນໂດຍອົງການປົກຄອງລັດວໍຊິງຕັນ ແລະ ອົງການໄມຕີຈິດອາເມລິກາຢູ່ຊີອາໂຕຂອງອາເມລິກາ,ທ່ານປະທານ ສີຈິ້ນຜິງ ກ່າວວ່າ, "ຈີນຈະບໍ່ປຸດເຊົາການເປີດປະຕູສູ່ພາຍນອກຕະຫຼອດໄປ.ການເປີດປະຕູສູ່ພາຍນອກແມ່ນນະໂຍບາຍພື້ນຖານຂອງຈີນ,ຈີນກໍ່ຈະບໍ່ປ່ຽນແປງນະໂຍບາຍທີ່ນຳໃຊ້ທຶນຕ່າງປະເທດ,ຈະປົກປ້ອງສິດ ແລະ ຜົນປະໂຫຍດທີ່ຊອບດ້ວຍກົດໝາຍຂອງນັກລົງທຶນຕ່າງປະເທດຢ່າງບໍ່ປ່ຽນແປງ,ແລະ ຈະບໍ່ປ່ຽນແປງທິດທາງທີ່ສະໜອງການບໍລິການທີ່ດີກວ່າເກົ່າໃຫ້ແກ່ວິສາຫະກິດປະເທດຕ່າງໆທີ່ລົງທຶນ ແລະ ດຳເນີນທຸລະກິດຢູ່ຈີນ."

ກອງປະຊຸມຄັ້ງທີ 5 ສະໄໝທີ 18 ຂອງພັກຄອມມູນິດຈີນໄດ້ວາງແຜນການຕໍ່ການຂະຫຍາຍການເປີດປະຕູສູ່ພາຍນອກໃນ 6 ດ້ານ,ຄື: ປັບປຸງບູລະນະຍຸດທະສາດເປີດປະຕູສູ່ພາຍນອກ,ສ້າງກົນໄກໃໝ່ໃນການເປີດປະຕູສູ່ພາຍນອກ,ຊຸກຍູ້ການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ລົງເລິກການຮ່ວມມືລະຫວ່າງເຂດໃນຈີນກັບຮົງກົງ,ມາກາວ,ລະຫວ່າງແຜ່ນດິນໃຫຍ່ຈີນກັບໄຕ້ຫວັນ,ຕັ້ງໜ້າເຂົ້າຮ່ວມການປັບປຸງເສດຖະກິດໂລກ,ຕັ້ງໜ້າແບກຫາບໜ້າທີ່ຮັບຜິດຊອບ ແລະ ພັນທະສາກົນ.ໃນການວາງແຜນການທຸກດ້ານ,ລ້ວນແຕ່ມີມາດຕະການ ແລະ ຄວາມຮຽກຮ້ອງທີ່ລະອຽດຮອບຄອບກວ່າເກົ່າ ແລະ ສາມາດປະຕິບັດຢ່າງແທ້ຈິງ.

ໃຊ້ການເປີດປະຕູສູ່ພາຍນອກເພື່ອຊຸກຍູ້ການປະຕິຮູບ ແລະ ການພັດທະນາ,ເປັນບົດຮຽນຂອງການປະຕິຮູບ ແລະ ການພັດທະນາຂອງຈີນ.ໃນໄລຍະໃໝ່ແຫ່ງປະຫວັດສາດ,ໂດຍຍຶດໝັ້ນການເປີດປະຕູສູ່ພາຍນອກ ແລະ ການພັດທະນາ,ແລະ ບັນລຸການຮ່ວມມື ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ,ກຳປັ່ນໃຫຍ່ແຫ່ງປະເທດຈີນສາມາດກ້າວໄປສູ່ເຂດນ້ຳທີ່ກວ້າງຂວາງກວ່າເກົ່າ,ແລະ ເດີນຈາກໄຊຊະນະກ້າວໄປສູ່ໄຊຊະນະອັນໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.



ປະເທດຈີນທີ່ເປີດກວ້າງກຳລັງກາຍເປັນເປົ້າໝາຍສະຖານທີ່ເປັນເຈົ້າພາບຈັດວາງງານວາງສະແດງມະໂຫລານສາກົນເທື່ອລະກ້າວ.ພາບນີ້ແມ່ນສະຖານທີ່ເປີດພິທີງານແຂ່ງຂັນກິລາປະເພດແລ່ນ ແລະ ລານສາກົນຄັ້ງທີ 15
开放的中国正逐渐成为国际盛会的目标主办地，图为第 15 届国际田联田径世锦赛开幕式现场

图 / 新华社

# ທາງຜ່ານຢູ່ປະເທດຈີນຂອງນົກອົບພະຍົບທົ່ວໂລກ

## 全球候鸟迁徙的中国通道

在全球鸟类迁徙线上，中国有着不可忽视的作用。根据中国第二次湿地资源调查显示，中国有鸟类 1332 种，约占世界鸟类总数的 13.7%，其中候鸟 600 多种，占世界候鸟的 20%。在全球候鸟迁徙通道中，东亚—澳大利亚、中亚、西亚—东非这 3 条候鸟迁徙路线都与中国有着密切关系。作为全球重要的迁徙中转站，中国近年来在生态保护上的努力为全球生态多样性的保护做出了贡献。

ຜົນການຄົ້ນຄວ້າຫຼ້າສຸດສະແດງໃຫ້ເຫັນວ່າ,ປະຈຸບັນຢູ່ທົ່ວໂລກ,ມີເສັ້ນທາງ 9 ສາຍຂອງນົກອົບພະຍົບ,ຄື: ມະຫາສະໝຸດອັດລັງຕິກ-ທະວີບອາເມລິກາ,ທະເລດຳ-ທະເລເມດິເຕລານຽນ,ພາກຕາເວັນອອກຂອງມະຫາສະໝຸດອັດລັງຕິກ,ພາກກາງຂອງທະວີບອາເມລິກາ,ຮອບມະຫາສະໝຸດປາຊີຟິກ,ພາກກາງທະວີບອາຊີ,ອາຊີຕາເວັນອອກ-ອົສຕຼາລີ,ມະຫາສະໝຸດປາຊີຟິກ-ທະວີບອາເມລິກາ,ອາຊີຕາເວັນຕົກ-ອາຟຼິກາຕາເວັນອອກ.ທາງຜ່ານຂອງນົກອົບພະຍົບໄດ້ກວມລວມປ່າຟົນ,ດິນທາມເກືອບທັງໝົດໃນໂລກ,ສວນດິນທາມໃຫຍ່ແຫ່ງຊາດອາເມລິກາ,ສວນອຸທິຍານກາກາດູອົສຕຼາລີ,ເກາະກົສຕາລີກາ,ຮ່ອມພູໃຫຍ່ອາຟຼິກາຕາເວັນອອກ,ລ້ວນແຕ່ເປັນເສັ້ນທາງຂອງນົກອົບພະຍົບ,ເຊິ່ງມີມາດຕະຖານຢ່າງເຄັ່ງຄັດຕໍ່ສະພາບລະບົບນິເວດຂອງບ່ອນເພິ່ງພາອາໄສ.

ຢູ່ລຽບຕາມທາງຜ່ານຂອງນົກອົບພະຍົບ,ປະເທດຈີນມີບົດບາດທີ່ເບິ່ງຂ້າມບໍ່ໄດ້.ອີງຕາມຜົນການສຳຫຼວດຊັບພະຍາກອນດິນທາມຄັ້ງທີ 2 ຂອງຈີນ,ຈີນມີນົກ 1332 ປະເພດ,ກວມປະມານ 13,7% ຂອງຍອດລວມຈຳນວນປະເພດນົກຂອງໂລກ,ໃນນັ້ນມີນົກອົບພະຍົບ 600 ກວ່າປະເພດ,ກວມ 20% ຂອງຈຳນວນປະເພດນົກອົບພະຍົບຂອງໂລກ.ໃນທາງຜ່ານຂອງນົກອົບພະຍົບນັ້ນ,ເສັ້ນທາງອາຊີຕາເວັນອອກ-ອົສຕຼາລີ,ອາຊີກາງ,ອາຊີຕາເວັນຕົກ-ອາຟຼິກາຕາເວັນອອກ 3 ສາຍນີ້ລ້ວນແຕ່ມີການພົວພັນຢ່າງໃກ້ຊິດກັບປະເທດຈີນ.ໃນຖານະເປັນບ່ອນເຊື່ອມຕໍ່ທີ່ສຳຄັນໃນທາງຜ່ານຂອງນົກອົບພະຍົບທົ່ວໂລກນັ້ນ,ໃນຊຸມປີມໍ່ໆມານີ້,ຄວາມພະຍາຍາມຂອງຈີນໃນດ້ານການອະນຸລັກສິ່ງແວດລ້ອມນັ້ນໄດ້ປະກອບສ່ວນອັນສຳຄັນເຂົ້າໃນການອະນຸລັກຄວາມຫຼາກຫຼາຍຂອງຊີວະນານາພັນຂອງໂລກ.



ລະດູໃບໄມ້ຫລົ່ນ ແລະ ລະດູໜາວທຸກປີ,ເມື່ອເຖິງຄວາມໜາວຈັດຍ່ອງຍ້າຍເຂົ້າມາທາງໄກຊີເບລີຢາ ແລະ ນົກຂຽນຄໍດຳທີ່ຢູ່ພູພຽງຊິງໄຮຕີເບດ ແລະ ເຂດທີ່ມີລະດັບນ້ຳທະເລສູງໃນອ້ອມຂ້າງນັ້ນກໍໄດ້ຍົກຍ້າຍຖິ່ນຖານວຽນມາອີກປີລະເທື່ອ

每年秋冬季节，当严寒侵袭，远在西伯利亚的白鹤和青藏高原及其附近高海拔地区的黑颈鹤就开始了一年一度的迁徙

ເດືອນພະຈິກປີ 2015,ນົກຂຽນຄໍດຳ 48 ໂຕໄດ້ກັບຄືນສູ່ເຂດສະຫງວນແຫ່ງຊາດຕ້າຊ່ານປ່າວເມືອງຈາວທົງແຂວງຢຸນນານເພື່ອຜ່ານລະດູໜາວ,ເຊິ່ງໄວກວ່າປີ 2014 ສາມມື້.

ເມື່ອຮອດໄລຍະນີ້ໃນທຸກປີ,ໜ່ວຍງານຂອງທ່ານ ຢາງສ້ຽວຈຸ່ນ,ນັກຄົ້ນຄວ້າສະຖາບັນຄົ້ນຄວ້າສັດຄຸນມິງຂອງສະພາບັນດິດວິທະຍາສາດຈີນກໍ່ໄດ້ກຽມພ້ອມໄປດຳເນີນການຕິດຕາມສຳຫຼວດຢູ່ຕ້າຊ່ານປ່າວ.ແຕ່ປີ 2002,ໜ່ວຍງານດັ່ງກ່າວໄດ້ເລີ່ມປະຕິບັດການຕິດຕາມຄົ້ນຄວ້ານົກຂຽນຄໍດຳໂດຍຜ່ານດາວທຽມເປັນຄັ້ງທຳອິດພາຍໃນປະເທດຈີນເປັນຕົ້ນມາ,ແມ່ນໄດ້ດຳເນີນວຽກງານສັງເກດຄົ້ນຄວ້ານົກຂຽນຄໍດຳຕະຫຼອດມາ,ຂໍ້ມູນຕິດຕາມວັດແທກຂອງ10 ກວ່າປີຜ່ານມານີ້ໄດ້ສະແດງໃຫ້ເຫັນວ່າ,ໃນຊຸມ



ຫວຍເຈີຢຸນນານ: ຜູ້ອາສາສະໝັກຮ່ວມແຮງກອບກູ້ປິ່ນປົວນົກຫົງຄໍດຳ
云南会泽：志愿者合力救治黑颈鹤

ປີບໍ່ໆມານີ້,ຈຳນວນນົກຂຽນຄໍດຳທີ່ມາຜ່ານລະດູໜາວຢູ່ຕ້າຊ່ານປາວໄດ້ເພີ່ມຂຶ້ນຢ່າງໝັ້ນທ່ຽງ,ຈາກ 200 ກວ່າໂຕໃນປີ 1990,ເພີ່ມຂຶ້ນເປັນ 1186 ໂຕໃນວັນທີ 14 ມັງກອນປີ 2004,ວັນທີ 28 ພະຈິກປີ 2014,ຕົວເລກດັ່ງກ່າວໄດ້ເພີ່ມຂຶ້ນເປັນ 1269 ໂຕ.

ນົກຂຽນຄໍດຳເປັນນົກຂຽນປະເພດໜຶ່ງດຽວທີ່ອາໄສຢູ່ເຂດພູພຽງພາຍໃນນົກຂຽນທັງໝົດ 15 ປະເພດ,ກໍ່ແມ່ນໄດ້ຖືກຄົ້ນພົບຊ້າສຸດ,ແມ່ນທ່ານ ນີໂກລາ ພູເຢວານສະກີ,ນັກພະຈົນໄພຣັດເຊຍຄົ້ນພົບເປັນຄັ້ງທຳອິດຢູ່ໜອງຊິງໄຫຂອງຈີນໃນປີ 1876.ຫຼັງຈາກຖືກຄົ້ນພົບ ແລະ ຕັ້ງຊື່ມາເປັນເວລາ 100 ກວ່າປີນັ້ນ,ມະນຸດເຮົາມີຄວາມຮັບຮູ້ບໍ່ຫຼາຍປານໃດຕໍ່ນົກຂຽນຄໍດຳ.ມັນກໍ່ເປັນໜຶ່ງໃນສັດທີ່ໃກ້ຈະສູນພັນ ແລະ ໄດ້ຮັບຄວາມສົນໃຈໃນລະດັບສູງຈາກສາກົນ,ຈີນໄດ້ຈັດເປັນສັດປ່າທີ່ໃຫ້ອະນຸລັກເປັນພິເສດໃນລະດັບ 1 ແຫ່ງຊາດ.

ນົກຂຽນຄໍດຳແຈກຢາຍຢູ່ບໍລິເວນແຄບ,ນອກຈາກປະເທດຈີນແລ້ວ,ຍັງມີຈຳນວນໜ້ອຍໜຶ່ງຜ່ານລະດູໜາວຢູ່ບູຖານ ແລະ ອິນເດຍ.ໃນເມື່ອກ່ອນກໍ່ເຄີຍມີຈຳນວນໜ້ອຍໜຶ່ງຢູ່ມຽນມາ ແລະ ຫວຽດນາມ,ແຕ່ປະຈຸບັນໄດ້ຫາຍໄປໝົດແລ້ວ.ຢູ່ປະເທດຈີນ,ນົກຂຽນຄໍດຳກໍ່ອາໄສຢູ່ພູພຽງຊິງໄຫຕີເບດ ແລະ ພູພຽງຢຸນນານ-ກຸ້ຍໂຈ່ວເທົ່ານັ້ນ,ເຊິ່ງລວມທັງ 7 ແຂວງ ແລະ ເຂດປົກຄອງຕົນເອງ,ຄື: ແຂວງຊິງໄຫ,ເຂດຕີເບດ,ເຂດຊິນຈ່ຽງ,ແຂວງເສສວນ,ແຂວງກ່ານຊູ້,ແຂວງຢຸນນານ,ແລະ ເຂດກຸ້ຍໂຈ່ວ,ສະນັ້ນຈຶ່ງຖືເປັນແນວພັນທີ່ມີລັກສະນະຕົວແທນໃຫ້ແກ່ພູພຽງຊິງໄຫຕີເບດ,ກໍ່ເປັນນົກສັກສິດໃນໃຈຂອງປະຊາຊົນເຜົ່າຕີເບດ.

ໃນຖານະເປັນໜຶ່ງໃນສະຖານທີ່ອາໄສ ແລະ ຜ່ານລະດູໜາວຂອງຝູງນົກຂຽນຄໍດຳທີ່ມີຈຳນວນຫຼາຍທີ່ສຸດ,ໃນຊຸມປີບໍ່ໆມານີ້,ຕ້າຊ່ານປາວໄດ້ປະຕິບັດໂຄງການອະນຸລັກ ແລະ ຟື້ນຟູດິນທາມຫຼາຍໂຄງການ,ເຊັ່ນ,ຍົກຍ້າຍປະຊາຊົນໄປບ່ອນອື່ນ,ຟື້ນຟູດິນປູກຝັງຄືນເປັນປ່າໄມ້ ແລະ ທົ່ງຫຍ້າ,ຟື້ນຟູດິນປູກຝັງຄືນເປັນດິນທາມ,ແລະ ອື່ນໆ,ໄດ້ສ້າງສິ່ງແວດລ້ອມທີ່ດີໃຫ້ແກ່ນົກຂຽນຄໍດຳ.ຢູ່ໃນເຂດສະຫງວນທຳມະຊາດຕ້າຊ່ານປາວມີດິນທາມເຂດພູດອຍເປັນເນື້ອທີ່ 5958 ເຮັກຕາ,ເປັນບ່ອນຢູ່ອາໄສທີ່ສຳຄັນສຳລັບນົກຂຽນຄໍດຳ ແລະ ນົກອົບພະຍົບອື່ນໆ.ປະຈຸບັນ,ດິນທາມອັນສຳຄັນຂອງຕ້າຊ່ານປາວໄດ້ຮັບຈັດເຂົ້າໃນຈຸດທົດລອງໃຫ້ຄ່າຊົດເຊີຍເພື່ອອະນຸລັກລະບົບນິເວດເຂດດິນທາມຂອງລັດໃນປີ 2014,ການເງິນສູນກາງໄດ້ໃຊ້ງົບປະມານຈ່າຍຄ່າຊົດເຊີຍໃຫ້ແກ່ຊາວບ້ານທີ່ອາໄສຢູ່ອ້ອມຂ້າງເຂດດິນທາມ,ແລະ ດຳເນີນການປັບປຸງສິ່ງແວດລ້ອມຊີວະພາບຕາມກຸ່ມບ້ານ.

ແຕ່ລະປີ,ນົກຂຽນຄໍດຳເນີນການສືບພັນຢູ່ໂລເກໃນລະດູໃບໄມ້ຫຼົ່ນນັ້ນຈະພາລູກເດີນທາງຈາກບ່ອນສືບພັນໄປສູ່ຕ້າຊ່ານປາວແຂວງຢຸນນານເພື່ອຜ່ານລະດູໜາວ,ນັກວິທະຍາສາດໄດ້ເອີ້ນເສັ້ນທາງສາຍນີ້ເປັນເສັ້ນທາງອົບພະຍົບສາຍຕາເວັນອອກຂອງນົກຂຽນຄໍດຳ,ກໍ່ເປັນເສັ້ນທາງອົບພະຍົບທີ່ໄດ້ຮັບຜົນສະທ້ອນຈາກການກະທຳຂອງມະນຸດຫຼາຍທີ່ສຸດ.ນັບແຕ່ການເລີ່ມປະຕິບັດໂຄງການຟື້ນຟູດິນທາມຮວ່າຫູໃນເດືອນທັນວາປີ 2010 ເປັນຕົ້ນມາ,ນົກຂຽນຄໍດຳທີ່ອາໄສຢູ່ໂຣເກນັ້ນກໍ່ໄດ້ເພີ່ມຈາກ 600 ກວ່າໂຕຂຶ້ນເປັນ 1500 ກວ່າໂຕ,ເຊິ່ງເປັນແດນສະຫວັນສຳລັບນົກຂຽນຄໍດຳທີ່ອາໄສ ແລະ ສືບພັນຢູ່ນີ້.ການປັບປຸງຟື້ນຟູສະຖານທີ່ຜ່ານລະດູໜາວ ແລະ ສືບພັນນັ້ນໄດ້ສ້າງເງື່ອນໄຂເອື້ອອຳນວຍທີ່ດີໃຫ້ແກ່ການອະນຸລັກ ແລະ ເພີ່ມຈຳນວນຂອງນົກຂຽນຄໍດຳ.



ທະເລສາບຫຍ້າກວ້ຍໂຈວເປັນສະຖານທີ່ຂ້າມຜ່ານລະດູໜາວໃຫຍ່ສຸດໃນໂລກຂອງນົກຂຽນຄໍດຳ,ຖືກຂະໜານນາມເປັນໜຶ່ງໃນເຂດ "ຊົມນົກໃນດິນທາມດີທີ່ສຸດໃນໂລກ"
贵州草海是全球最大的黑颈鹤越冬地，被誉为“世界最佳湿地观鸟区”之一

图 / 新华社

# ຈີນຊ່ວຍວາງແຜນເພື່ອກະຕຸກຊຸກຍູ້ເສດຖະກິດຂອງອາຊີຕາເວັນອອກ




ຜູ້ຊົມກຳລັງຊົມເບິ່ງຜົນງານໃນງານວາງສະແດງຈີນ-ອາຊຽນຄົບຮອບ 10 ປີ
观众在中国－东盟博览会 10 周年成就展上参观

## 中国“出谋划策”盘活东亚经济

中国国务院总理李克强 2015 年 11 月 20 日抵达马来西亚吉隆坡，出席东亚合作领导人系列会议并对马来西亚进行正式访问。期间，李克强总理为东亚经济合作发展提出了多项建议。专家表示，长期以来，中国为推动东亚合作发展、经济增长提出了一系列务实合作的倡议，而随着这些倡议的逐渐落实，东亚经济正在且将不断从中受益。

ວັນທີ 20 ພະຈິກ 2015,ທ່ານ ຫຼີເຄີ່ຊຽງ,ນາຍົກລັດຖະມົນຕີຈີນໄດ້ເດີນທາງໄປຮອດນະຄອນຫຼວງກົວລາລຳເປີຂອງມະເລເຊຍ,ເຂົ້າຮ່ວມກອງປະຊຸມຜູ້ນຳຕ່າງໆກ່ຽວກັບການຮ່ວມມືຂອງອາຊີຕາເວັນອອກ ແລະ ຢ້ຽມຢາມມະເລເຊຍຢ່າງເປັນທາງການ.ໃນໄລຍະນີ້,ທ່ານນາຍົກ ຫຼີເຄີ່ຊຽງ ໄດ້ວາງຂໍ້ສະເໜີຫຼາຍຂໍ້ກ່ຽວກັບການພັດທະນາ ແລະ ການຮ່ວມມືຂອງອາຊີຕາເວັນອອກ.ຜູ້ຊ່ຽວຊານກ່າວວ່າ,ໃນເວລາດົນນານມານີ້,ຈີນໄດ້ວາງຂໍ້ລິເລີ່ມຕ່າງໆກ່ຽວກັບການຮ່ວມມືຕົວຈິງເພື່ອຊຸກຍູ້ການຮ່ວມມື ແລະ ການພັດທະນາຂອງອາຊີຕາເວັນອອກ,ແລະ ການເຕີບໂຕດ້ານເສດຖະກິດ,ຄຽງຄູ່ກັບການຈັດຕັ້ງປະຕິບັດຂໍ້ລິເລີ່ມເຫຼົ່ານີ້,ເສດຖະກິດຂອງອາຊີຕາເວັນອອກພວມຮັບ ແລະ ຈະສືບຕໍ່ໄດ້ຮັບຜົນປະໂຫຍດຈາກຂໍ້ລິເລີ່ມເຫຼົ່ານີ້.

### ມູນຄ່າການຄ້າເພີ່ມຂຶ້ນ 75 ເທົ່າພາຍໃນເວລາ 24 ປີ

ປີ 1991,ຈີນ ແລະ ອາຊຽນໄດ້ເລີ່ມດຳເນີນການສົນທະນາກັນ.ໃນ 24 ປີທີ່ຜ່ານມາ,ມູນຄ່າການຄ້າສອງຝ່າຍໄດ້ເພີ່ມຂຶ້ນ 75 ເທົ່າ,ຈີນກັບອາຊຽນໄດ້ກາຍເປັນຄູ່ການຄ້າທີ່ສຳຄັນຕໍ່ກັນ.ຕົວເລກສະແດງໃຫ້ເຫັນວ່າ,ປີ 2014,ມູນຄ່າການຄ້າຈີນ-ອາຊຽນໄດ້ຫຼາຍກວ່າ 480 ຕື້ໂດລາ,ເພີ່ມຂຶ້ນ 8,3% ເມື່ອທຽບກັບປີ 2013.ນັບຮອດທ້າຍປີ 2014,ມູນຄ່າການລົງທຶນຕໍ່ກັນລະຫວ່າງຈີນກັບອາຊຽນໄດ້ຫຼາຍກວ່າ 130 ຕື້ໂດລາ,ໃນນັ້ນ,ການລົງທຶນຂອງປະເທດອາຊຽນຢູ່ຈີນໄດ້ຫຼາຍກວ່າ 90 ຕື້ໂດລາ.ຈີນໄດ້ກາຍເປັນຄູ່ການຄ້າໃຫຍ່ອັນດັບໜຶ່ງຂອງອາຊຽນ,ອາຊຽນເປັນຄູ່ການຄ້າໃຫຍ່ອັນດັບ 3,ຕະຫຼາດສົ່ງອອກສິນຄ້າໃຫຍ່ທີ 4 ແລະ ແຫຼ່ງນຳເຂົ້າສິນຄ້າໃຫຍ່ທີ 2 ຂອງຈີນ.

ໃນເວລາໃຫ້ສຳພາດຕໍ່ນັກຂ່າວ,ທ່ານ ຫຼີຕ້າເວີຍ,ຮອງນັກຄົ້ນຄວ້າສະຖາບັນຄົ້ນຄວ້າເສດຖະກິດກັບຕ່າງປະເທດຂອງຄະນະກຳມະການພັດທະນາ ແລະ ປະຕິຮູບແຫ່ງລັດຈີນກ່າວວ່າ,"ການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງຈີນກັບອາຊຽນມີພື້ນຖານອັນໜັກແໜ້ນ.ໃນດ້ານໜຶ່ງ,ຈີນກັບອາຊຽນມີທ່າແຮງທີ່ຊ່ວຍຊູຍູ້ໝູນກັນ,ການປ່ຽນແປງດ້ານປັດໄຈການຜະລິດຂອງສອງຝ່າຍ ແລະ ການສ້າງຕັ້ງເຄືອຂ່າຍການຜະລິດຂອງອາຊີຕາເວັນອອກແມ່ນພະລັງແຮງອັນສຳຄັນທີ່ຊຸກຍູ້ການຮ່ວມມື ແລະ ການພັດທະນາດ້ານເສດຖະກິດການຄ້າ;ໃນອີກດ້ານໜຶ່ງ,ການຈັດສັນດ້ານກົນໄກລະຫວ່າງຈີນກັບອາຊຽນໄດ້ຫຼຸດຜ່ອນກຳແພງດ້ານການຄ້າ ແລະ ການລົງທຶນສອງຝ່າຍ,ແລະ ຫຼຸດຜ່ອນຕົ້ນທຶນດ້ານການຄ້າ."

ສຳລັບຄວາມໝາຍອັນຕັ້ງໜ້າຂອງການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງຈີນກັບອາຊຽນນັ້ນ,ທ່ານ ຫຼີຕ້າເວີຍ ກ່າວຕື່ມອີກວ່າ,ການພັດທະນາຢ່າງວ່ອງໄວຂອງການຄ້າສອງຝ່າຍມີຜົນດີຕໍ່ການຊຸກຍູ້ເສດຖະກິດອາຊີຕາເວັນອອກເຊື່ອມໂຍງເຂົ້າກັນ.ການຮ່ວມມືດ້ານເສດຖະກິດການຄ້າທີ່ຂະຫຍາຍຕົວເປັນຢ່າງດີນັ້ນກໍ່ຈະຊຸກຍູ້ຄູ່ການຄ້າສອງຝ່າຍພັດທະນາຂະແໜງການທີ່ມີທ່າແຮງຂອງຕົນ,ເຊິ່ງຈະຊ່ວຍຊຸກຍູ້ພັດທະນາຜະລິດຕະກຳຂອງປະເທດອາຊີຕາເວັນອອກ.

ປະຈຸບັນ,ຈີນ ແລະ ອາຊຽນພວມພະຍາຍາມເພື່ອບັນລຸເປົ້າໝາຍທີ່ມູນຄ່າການຄ້າສອງຝ່າຍບັນລຸເຖິງ 1000 ຕື້ໂດລາໃນປີ 2020.ຄຽງຄູ່ກັບປະຊາຄົມອາຊຽນໃກ້ຈະປະກາດສ້າງຕັ້ງຂຶ້ນນັ້ນ,ຂະບວນການເຊື່ອມໂຍງເຂົ້າກັນຂອງອາຊຽນຈະໄດ້ຮັບການຊຸກຍູ້ຕື່ມອີກ,ສະນັ້ນ,ຈີນຈະດຳເນີນການຮ່ວມມືດ້ານເສດຖະກິດການຄ້າກັບອາຊຽນໃນລະດັບສູງກວ່າເກົ່າ,ການຮ່ວມມືສອງຝ່າຍພວມປະເຊີນກັບກາລະໂອກາດອັນໃໝ່.

### ເສດຖະກິດໃນ"10 ປີຮອບໃໝ່"ຍັງເປັນ"ຈຸດເດັ່ນທີ່ສຸດ"

ຈີນກັບອາຊຽນໄດ້ຜ່ານ"10 ປີທອງຄຳ",ປະຈຸບັນ,ສອງຝ່າຍຈະເປີດ"10 ປີຮອບໃໝ່".ຊ່ຽວຊານຊີ້ອອກວ່າ,ຈີນ ແລະ ອາຊຽນໄດ້ດຳເນີນການຮ່ວມມືຮອບດ້ານໃນ 10 ປີຕໍ່ໜ້ານີ້,ເຊັ່ນ,ການເມືອງ,ເສດຖະກິດ,ວັດທະນະທຳ ແລະ ອື່ນໆ,ໃນນັ້ນການຮ່ວມມືດ້ານເສດຖະກິດຍັງຈະເປັນຈຸດເດັ່ນທີ່ສຸດໃນການຮ່ວມມືສອງຝ່າຍ.

ທ່ານ ຈົ່ງເຟີ່ຍເທີງ,ຫົວໜ້າຫ້ອງການຄົ້ນຄວ້າສາຍພົວພັນປະເທດໃຫຍ່ສະຖາບັນຄົ້ນຄວ້າຍຸດທະສາດອາຊີປາຊີຟິກ ແລະ ທົ່ວໂລກຂອງສະພາບັນດິດວິທະຍາສາດສັງຄົມຈີນຊີ້ອອກວ່າ,ໃນ 10 ປີຜ່ານມາ,ຈີນຕົ້ນຕໍແມ່ນເປີດກວ້າງຕະຫຼາດ ແລະ ຊຸກຍູ້ການຄ້າສິນຄ້າ,ສຳລັບການຮ່ວມມືດ້ານການຍົກລະດັບກຳລັງການຜະລິດ,ສົ່ງເສີມການເຊື່ອມຕໍ່ ແລະ ເຊື່ອມໂຍງນັ້ນຈະເປັນທິດທາງອັນສຳຄັນໃນອະນາຄົດ.ທ່ານກ່າວຕື່ມອີກວ່າ,ແຜນການເຊື່ອມຕໍ່ ແລະ ເຊື່ອມໂຍງພາຍໃນອາຊຽນໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດເປັນເວລາດົນແລ້ວ,ຂໍ້ລິເລີ່ມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ຂອງຈີນນັ້ນສາມາດເຊື່ອມໂຍງເຂົ້າກັນ,ເຊັ່ນ,ສ້າງທາງລົດໄຟຄວາມໄວສູງ,ສ້າງທ່າກຳປັ່ນ ແລະ ສິ່ງກໍ່ສ້າງອື່ນໆຢູ່ແຫຼມອິນໂດຈີນ ແລະ ລຽບຕາມເສັ້ນທາງສາຍໄໝທາງທະເລ.

ທ່ານ ຫຼີຕ້າເວີຍ ກ່າວວ່າ,"ໃນ 10 ປີຂ້າງໜ້ານີ້,ການຮ່ວມມືດ້ານເສດຖະກິດລະຫວ່າງຈີນກັບອາຊຽນຍັງມີຈຸດເດັ່ນຫຼາຍ.ກ່ອນອື່ນ,ຈີນ ແລະ ອາຊຽນລ້ວນແຕ່ມີຄວາມຕ້ອງການທີ່ຈະຍົກສູງຖານະຂອງຕົນໃນຕ່ອງໂສ້ຄຸນຄ່າໃນໂລກ,ເຊິ່ງຈະຊຸກຍູ້ໃຫ້ສອງຝ່າຍເພີ່ມທະວີການຮ່ວມມືດ້ານເສດຖະກິດ,ແລ້ວບັນລຸການຍົກລະດັບພ້ອມ

ກັນ;ສອງ,ຍ້ອນສາເຫດພາວະວິໄສໃນການພັດທະນາ, ການຮ່ວມມືດ້ານການຄ້າການບໍລິການລະຫວ່າງຈີນກັບອາຊຽນໃນເມື່ອກ່ອນຍັງບໍ່ທັນໄດ້ຮັບຜົນດີຕາມຄວາມຄາດໝາຍ,ໃນ 10 ປີຂ້າງໜ້ານີ້ກໍ່ຈະເປັນກາລະໂອກາດອັນສຳຄັນສຳລັບສອງຝ່າຍເພີ່ມທະວີການຮ່ວມມືດ້ານການຄ້າການບໍລິການ;ສາມ,ການຮ່ວມມືທາງທະເລຈະເປັນຈຸດເດັ່ນໃນການຮ່ວມມືໃນອະນາຄົດ,ໂດຍສະເພາະຢູ່ໃນດ້ານວຽກງານທາງທະເລ,ວິທະຍາສາດເຕັກໂນໂລຊີທາງທະເລ,ແລະ ອື່ນໆນັ້ນ,ຈະມີຊ່ອງຫວ່າງການຮ່ວມມືອັນກວ້າງຂວາງລະຫວ່າງສອງຝ່າຍ."ນັກວິເຄາະເຫັນວ່າ,ທັດສະນະ"ກຸ່ມຮ່ວມຊະຕາກຳຈີນ-ອາຊຽນ" ແລະ ຂອບຮ່ວມມື 2+7 ໄດ້ພົນລະນາອະນາຄົດແຫ່ງການຮ່ວມມືລະຫວ່າງຈີນກັບອາຊຽນໃນ"10 ປີຮອບໃໝ່".ພາຍໃຕ້ຂອບດັ່ງກ່າວ,ການເຈລະຈາກ່ຽວກັບການຍົກລະດັບເຂດການຄ້າເສລີຈີນ-ອາຊຽນ,ເສັ້ນທາງສາຍໄໝທາງທະເລສະຕະວັດທີ 21 ແລະ ຂໍ້ລິເລີ່ມທີ່ສຳຄັນອື່ນໆກໍ່ຈະກ້າວເຂົ້າສູ່ການເຈລະຈາລັກສະນະແທ້ຈິງ ແລະ ການຈັດຕັ້ງປະຕິບັດ.

ເຂດການຄ້າເສລີເຂົ້າສູ່"ຮູບແບບຍົກລະດັບ"

ໃນຖານະເປັນພາກສ່ວນອັນສຳຄັນໃນການຮ່ວມມືຈີນ-ອາຊຽນ,ເຂດການຄ້າເສລີຈີນ-ອາຊຽນມີຄວາມໝາຍທີ່ສຳຄັນ.ປີ 2002,ຈີນ ແລະ ອາຊຽນໄດ້ເລີ່ມດຳເນີນການເຈລະຈາ,ນີ້ແມ່ນເຂດການຄ້າເສລີແຫ່ງທຳອິດທີ່ຈີນເຈລະຈາກັບພາຍນອກ,ກໍ່ແມ່ນເຂດການຄ້າເສລີແຫ່ງທຳອິດທີ່ອາຊຽນເຈລະຈາກັບພາຍນອກໃນຖານະເປັນເອກະພາບດຽວ.ປີ 2010,ເຂດການຄ້າເສລີຈີນ-ອາຊຽນໄດ້ສ້າງສຳເລັດຢ່າງຮອບດ້ານຕາມເວລາກຳນົດ,ເຊິ່ງເປັນເຂດການຄ້າເສລີໃຫຍ່ກວ່າໝູ່ລະຫວ່າງປະເທດທີ່ພວມພັດທະນາ.

ຄຽງຄູ່ກັບການໄປມາຫາສູ່ກັນດ້ານການຄ້າ ແລະ ການແລກປ່ຽນບຸກຄະລາກອນກ້າວສູ່ລວງເລິກຢ່າງບໍ່ຢຸດຢັ້ງ,ຈີນ ແລະ ອາຊຽນເລີ່ມສະແຫວງຫາຍົກລະດັບເຂດການຄ້າເສລີຈີນ-ອາຊຽນ.ນັບແຕ່ການເລີ່ມເຈລະຈາກ່ຽວກັບການຍົກລະດັບເຂດການຄ້າເສລີເປັນຕົ້ນມາ,ຈີນ ແລະ ອາຊຽນໄດ້ຮັບຄວາມຄືບໜ້າທີ່ຕັ້ງໜ້າໃນຂົງເຂດການຄ້າສິນຄ້າ,ການຄ້າການບໍລິການ,ການລົງທຶນ,ການຮ່ວມມືເຕັກນິກເສດຖະກິດ ແລະ ອື່ນໆ.

ທ່ານ ຫຼີຕ້າເວີຍ ກ່າວຕື່ມອີກວ່າ, "ການຍົກລະດັບເຂດການຄ້າເສລີຈີນ-ອາຊຽນຈະນຳເອົາຜົນປະໂຫຍດຫຼາຍດ້ານໃຫ້ແກ່ການພັດທະນາເສດຖະກິດຂອງອາຊີຕາເວັນອອກ.ໜຶ່ງ,ຈະຫຼຸດຜ່ອນກຳແພງດ້ານການຄ້າລະຫວ່າງປະເທດອາຊີຕາເວັນອອກ,ຫຼຸດຕົ້ນທຶນການຄ້າໃຫ້ຕ່ຳລົງ; ສອງ,ປະເທດອາຊີຕາເວັນອອກຕ້ອງການສັນຍາການຄ້າທີ່ເໝາະສົມກັບສະພາບຕົນເອງ,ສັນຍາສາຍພົວພັນຄູ່ຮ່ວມຂ້າມປາຊີຟິກຫຼື TPP ບໍ່ສອດຄ່ອງກັບຮູບການພັດທະນາເສດຖະກິດຂອງອາຊີຕາເວັນອອກ,ແຕ່ຫາກແມ່ນເຂດການຄ້າເສລີແບບຍົກລະດັບທີ່ສ້າງຂຶ້ນຕາມຄວາມຕ້ອງການຂອງປະເທດອາຊີຕາເວັນອອກ;ສາມ,ນີ້ຈະຊຸກຍູ້ການຂະຫຍາຍຕົວຂອງສັນຍາການຄ້າພາກພື້ນຕ່າງໆ,ເຊັ່ນ,ສາຍພົວພັນຄູ່ຮ່ວມເສດຖະກິດແບບກວມລວມໃນພາກພື້ນຫຼື RCEP,ອາຊຽນ+3 ແລະ ອື່ນໆ,ແລ້ວຊຸກຍູ້ໃຫ້ເສດຖະກິດອາຊີຕາເວັນອອກເຕີບໂຕຢ່າງໝັ້ນທ່ຽງ. "



文 / 赛巴妮 图 / 白 艳

# ຄວາມຊົງຈຳທີ່ຍາກຈະລືມ

## 难忘的记忆

我们一行 10 人于 2015 年 8 月 15 日上午 10 时乘机到达昆明长水机场。当我们到达目的地时，受到《占芭》杂志社杨云总编及编辑部工作人员的热情接待，并在云南度过了令人难以忘怀的一段美丽时光。



ພວກເຮົາມາຮອດສະໜາມບິນຊາງຊວຍຄູນມິງໃນວັນທີ 15 ສິງຫາ 2015 ເວລາ 10 ໂມງ ແລະ ໄດ້ຕື່ນຕາຕື່ນໃຈກັບຄວາມອາລັງການ ແລະ ທັນສະໄໝຂອງສະໜາມບິນດັ່ງກ່າວ.ຄູນມິງເປັນເມືອງເອກຂອງແຂວງຢຸນນານທີ່ເປັນໜຶ່ງໃນບັນດາເມືອງປະຫວັດສາດ ແລະ ວັດທະນະທຳທີ່ມີຊື່ສຽງຂອງ ສປ ຈີນ,ໄດ້ຂະໜານນາມວ່າເມືອງລະດູບານໃໝ່ຕະຫລອດການຊຶ່ງມີອຸນຫະພູມສະເລ່ຍ 15 ອົງສາຕໍ່ປີເປັນເມືອງທີ່ໜ້າຢູ່ທີ່ສຸດ.ແຂວງຢູນນານຕັ້ງຢູ່ທິດຕາເວັນຕົກສ່ຽງໃຕ້ຂອງ ສປ ຈີນມີຊາຍແດນຕິດກັບປະເທດຫວຽດນາມ,ລາວ ແລະ ມຽນມ່າ.

ຢູ່ສະໜາມບິນ,ພວກເຮົາໄດ້ຮັບການຕ້ອນຮັບຈາກເຈົ້າພາບ ທ່ານ ຢາງຢູນ ບັນນາທິການໃຫຍ່ວາລະສານຈຳປາ ແລະ ທີມງານຂອງເພິ່ນທີ່ໄດ້ຕ້ອນຮັບພວກເຮົາຖານເພື່ອນມິດສະຫາຍ.ຂ້າພະເຈົ້າຊາບຊຶ້ງໃນຄວາມເປັນມິດສະຫາຍ ແລະ ການຕ້ອນຮັບຢ່າງອົບອຸ່ນແບບຄອບຄົວທີ່ຍາກທີ່ຈະອະທິບາຍ.

ຫຼັງຈາກນັ້ນ,ພວກເຮົາຂີ່ລົດໄປຊົມປ່າຫີນກ່ອນ,ເມື່ອເວລາຊົມປ່າຫີນທີ່ປະກອບໄປດ້ວຍພູຫີນນ້ອຍໃຫຍ່ຢັ້ງຢາຍຢ່າງເດຍລະດາດທີ່ນັບບໍ່ຖ້ວນ.ພວກເຮົາເກືອບບໍ່ເຊື່ອສາຍຕາຕົນເອງກັບທິວທັດທຳມະຊາດຄວາມອາລັງການຂອງປ່າດົງຫີນອັນແສນງາມຕາແຫ່ງນີ້.ພວກເຮົາໄດ້ແຕ່ຢືນອ້າປາກເບິ່ງຄວາມງາມທີ່ໜ້າຕື່ນໃຈຕື່ນຕາທີ່ທຳມະຊາດມອບໃຫ້ເປັນຂອງຂວັນ.

ກາງຄືນ,ພວກເຮົາໄດ້ເຂົ້າໄປພັກທີ່ໂຮງແຮມສິບສອງພັນນາຢູ່ທີ່ນັ້ນເຈົ້າພາບຂອງພວກເຮົາທ່ານຢາງຢູນກໍໄດ້ຮັບຕ້ອນພວກເຮົາດ້ວຍອາຫານຄ່ຳທີ່ຍິ່ງໃຫຍ່ອັນແຊບຊ້ອຍທີ່ເປັນເອກກະລັກຂອງຊາວຢຸນນານ.ໃນໂຕະອາຫານມີເຍື່ອງກິນຫລາຍກວ່າ 10 ຊະນິດທີ່ເຮັດໃຫ້ພວກເຮົາຮູ້ສຶກເປັນກຽດ ແລະ ເຫັນໄດ້ເຖິງສັນຍາລັກຂອງຄວາມໂອບເອື້ອອາລີທີ່ມີເອກະລັກຂອງຊາວຈີນ.

ວັນທີ16 ສິງຫາ,ພວກເຮົາກໍໄດ້ຂີ່ລົດອອກເດີນທາງໄປເມືອງຕ້າຫລີ,ເມືອງດັ່ງກ່າວມີເນື້ອທີ່ 29,459 ກິໂລແມັດມົນທົນ ແລະ ມີປະຊາກອນຫລາຍກວ່າ 3,5 ລ້ານຄົນທີ່ຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງແຂວງຢູນນານ.ເມືອງນີ້ເຕັມໄປດ້ວຍແຫລ່ງປະຫວັດສາດຊຶ່ງຫ່າງຈາກນະຄອນຄູນມິງ 350 ກິໂລແມັດ.ຫລັງຈາກການເດີນທາງໄດ້ປະມານ 4 ຊົ່ວໂມງ,ພວກເຮົາກໍໄດ້ປະທັບໃຈກັບ





ຄວາມງາມຂອງເມືອງທີ່ເຕັມໄປດ້ວຍອະນຸສອນສະຖານ ແລະ ວັດວາອາລາມທີ່ເກົ່າແກ່ນັບເປັນພັນປີ.

ເມືອງຕ້າຫລີເປັນເມືອງເກົ່າແກ່ມີອາຍຸປະມານ 738 ປີ,ເຄີຍເປັນເມືອງຫລວງຂອງອານາຈັກນານເຈົ້າຫລີຖ້າ ເອີ້ນພາສາລາວເດີມເຮົານັ້ນກໍ່ຄືອານາຈັກໜອງແສນັ້ນເອງ.

ໃນທ່າມກາງນັກທ່ອງທ່ຽວຊາວຈີນ ແລະ ພະສົງສໍາມະເນນອາຊີ,ພວກເຮົາໄດ້ຍ່າງຊົມເມືອງເກົ່າແກ່ຕ້າຫລີທີ່ຕັ້ງຢູ່ທາງພາກຕາເວັນອອກຂອງທະເລສາບເອີ້ຫາຍຫລືໃນພາສາລາວເຮົາກໍ່ໄດ້ຂະໜານນາມກັນວ່າເປັນໜອງແສນັ້ນເອງ.

ເມືອງເກົ່າແກ່ຕາຫລີຍັງຮັກສາເອກະລັກທາງປະເພນີຍ້ອນມີໂຄງການອະນຸລັກຂອງລັດຖະບານຈີນ.ລົດບໍ່ໄດ້ຮັບອະນຸຍາດໃຫ້ແລ່ນໃນຕົວເມືອງເກົ່າແກ່ເພື່ອໃຫ້ນັກທ່ອງທ່ຽວສາມາດຍ່າງຕາມແຄມທາງທີ່ເຕັມໄປດ້ວຍຮ້ານກາເຟ ແລະ ຮ້ານຂາຍເຄື່ອງທີ່ລະນຶກທີ່ຢັ້ງຢາຍກັນຢູ່ຢ່າງລະເນລະນາດກັນຈົນນັບບໍ່ຖ້ວນ.

ວັນທີ 17 ສິງຫາ,ພວກເຮົາໄດ້ທ່ຽວຊົມວັດຈົງແຊງຫລື ວັດແຫ່ງເຈດີທັງສາມອັນໝາຍເຖິງພຣະໄຕປີດົກທີ່ມີປະຫວັດຄວາມເປັນມາຫລາຍກວ່າ 1800 ປີ ແລະເປັນຈຸດສໍາຄັນຂອງການພັດທະນາພຸດທະສາດສະໜາຂອງພາກພື້ນອາຊີປາຊີຟິກຂອງພວກເຮົາ.ວັດດັ່ງກ່າວຫ່າງຈາກເມືອງຕາຫລີໄປທາງທິດຕາເວັນຕົກສ່ຽງເໜືອໜຶ່ງກິໂລແມັດ.ວັດທີ່ໃຫຍ່ກວ່າໝູ່ໃນຈໍານວນສາມວັດນັ້ນໄດ້ແກ່ວັດກວານຊູນມີຄວາມສູງ 69,31 ແມັດປະກອບມີ 16 ຊັ້ນ,ສ່ວນສອງວັດນັ້ນມີຄວາມສູງ 43 ແມັດ.ເຈດີທັງສາມລອດຈາກແຜ່ນດິນໄຫວຫລາຍຄັ້ງມາໄດ້ກໍຍ້ອນຄວາມພະຍາຍາມຂອງເມືອງຈຶ່ງເຮັດໃຫ້ສະຖາປັດສະນີຍະກໍາສະໄໝລາດສະວົງຖັງໄດ້ຮັບການອະນຸລັກໄວ້ຈົນມາເຖິງທຸກວັນນີ້.

ພວກເຮົາສືບຕໍ່ໄປຢ້ຽມຊົມເມືອງລີຈຽງ.ເມືອງລີຈຽງຕັ້ງຢູ່ທາງພາກຕາເວັນຕົກສ່ຽງເໜືອຂອງແຂວງຢູນນານຫ່າງຈາກນະຄອນຄູນມິງ 540 ກິໂລແມັດ.ພວກເຮົາໃຊ້ເວລາປະມານ 3 ຊົ່ວໂມງກໍມາຮອດເມືອງດັ່ງກ່າວ.

ພວກເຮົາໄດ້ຖືກຕ້ອນຮັບດ້ວຍອາຫານຄໍ່າທີ່ເປັນອາຫານໃນລັກສະນະດຽວກັບທີ່ຜ່ານມາທີ່ຈັດໂດຍຄະນະກໍາມະການໂຄສະນາຂອງເມືອງ ແລະ ເປັນຜູ້ຮັບຜິດຊອບມໍລະດົກຂອງເມືອງທີ່ນໍາພາພວກເຮົາທ່ຽວຊົມເມືອງເກົ່າລີຈຽງ,ຊຶ່ງກາຍເປັນເມືອງມໍລະດົກໂລກຂອງອົງການອູຍແນສໂກໃນປີ 1997.ເມືອງເກົ່າລີຈຽງຊຶ່ງໄດ້ຂະໜານນາມວ່າເປັນເມືອງແຫ່ງຄອງນໍ້າໃສທີ່ເຕັມໄປດ້ວຍຂົວ ແລະ ສະພານອັນສວຍສົດງົດງາມຈົນຫາອັນປຽບບໍ່ໄດ້.ເມື່ອງດັ່ງກ່າວນີ້ມີຄວາມແຕກຕ່າງກັບເມືອງເກົ່າອື່ນໆຂອງສປຈີນເນື່ອງຈາກມີລັກສະນະສະເພາະຂອງໂຄງສ້າງຂອງເທດສະບານເມືອງເນື່ອງມາຈາກສະພາບແວດລ້ອມທາງທໍາມະຊາດແຕ່ວ່າມີຄວາມກົມກືນກັນທາງດ້ານສະຖາປັດສະນີຍະກໍາອັນລໍ້າລຶກຂອງອາລິຍະທໍາຊາວນາຊີມາແຕ່ຍາວນານ.

ພວກເຮົາຂ້າມຖະໜົນທີ່ແໜ້ນໜາໄປດ້ວຍການສັນຈອນ ແລະ ແສງໄຟທີ່ອາລັງການ ແລະ ຄວາມຊົງຈໍາທີ່ຫລາກຫລາຍທີ່ນໍາເອົາບັນຍາກາດຂອງບຸນທີ່ມີຊື່ສຽງ,ປະຫວັດຄວາມເປັນມາຂອງຊົນເຜົ່ານາຊີມາສູ່ເມືອງດັ່ງກ່າວ.ມື້ຕໍ່ມາ,ພວກເຮົາຂີ່ລົດອູ່ລອຍຟ້າຊຶ່ງມີໄລຍະທາງຍາວ 2968 ແມັດເພື່ອຮັບຊົມຄວາມງາມຂອງພູຫິມະມັງກອນຫຍົກ (Yulongxueshan) ທີ່ມີຄວາມສູງ 4500 ແມັດ.ໃນລະດູດັ່ງກ່າວພວກເຮົາເຫັນຫິມະພຽງແຕ່ໃນຈອມພູເທົ່ານັ້ນແຕ່ວ່າມີຝົນຝອຍຄ່ອຍໆຕົກລົງມາຣໍາໃບໜ້າຂອງພວກເຮົາຢ່າງຊຸ່ມເຢັນ.

ພວກເຮົາຟ້າວລົງຈາກພູເພື່ອໄປຊົມການສະແດງກາງແຈ້ງຢູ່ໃນສວນສາທາລະນະໃຫຍ່ເບື້ອງຫລັງຂອງພູ,ທ່ານ ຫຼິວ ເຢີນເທົ່ ຫົວໜ້ານັກແປພາສາອາວຸດໂສໄດ້ອະທິບາຍໃຫ້ພວກເຮົາຟັງວ່ານັກສະແດງຈໍານວນ 1000 ຄົນທີ່ມາສະແດງນັ້ນແມ່ນຊາວກະສິກອນຂອງອົງເຂດນັ້ນ,ພວກເຂົາເຈົ້າໄດ້ເອົາອຸປະກອນ ແລະ ມ້າຂອງຕົນມາທໍາການສະແດງຊຶ່ງສະທ້ອນໃຫ້ເຫັນເຖິງປະເພນີ ແລະ ວິຖີການດໍາລົງຊີວິດຂອງຊົນເຜົ່ານາຊີ.ພວກເຮົາບໍ່ເຄີຍເຫັນການສະແດງຂອງຈີນທີ່ຍິ່ງໃຫຍ່ອາລັງການເທົ່ານີ້ມາກ່ອນ.

ຕົກມາຮອດກາງຄືນພວກເຮົາກໍໄດ້ຊົມການສະແດງອັນຍິ່ງໃຫຍ່ທີ່ພວກເຮົາບໍ່ເຄີຍເຫັນມາກ່ອນໃນໂຮງລະຄອນທີ່ນໍາສະແດງໂດຍກຸ່ມນັກສະແດງຊົງເສິງ Song cheng. ການຫລິ້ນໄຟ,ນັກຟ້ອນ ແລະ ນັກສະແດງໄດ້ເຜີຍໃຫ້ເຫັນຄວາມເປັນມືອາຊີບນອກຈາກເຕັກໂນໂລຊີສິລະປະລະດັບສູງ.ຈາກນັ້ນພວກເຮົາກໍໄດ້ຮັບຮູ້ປະເພນີການຕໍ່ສູ້ ແລະ ຄວາມກ້າຫານຂອງຊົນເຜົ່ານາຊີໃນການສະແດງລະຄອນ.

ພວກເຮົາສິ້ນສຸດການເດີນທາງດ້ວຍການຢ້ຽມຊົມບ້ານຊົນເຜົ່າຢູນານທີ່ຕັ້ງຢູ່ແຄມໜອງຕ່ຽນຊື.ພວກເຮົາຢ້ຽມຊົມເຮືອນທີ່ເປັນຕົວແທນໃຫ້ແກ່ຊົນເຜົ່າລີ້,ບາຍ,ອີ,ນາຊີ.ເນື່ອງຈາກວ່າບ້ານຊົນເຜົ່ານີ້ມີເນື້ອທີ່ 100.000 ແມັດມົນທົນພວກເຮົາຈຶ່ງບໍ່ສາມາດເບິ່ງໝົດທຸກເຮືອນທີ່ເປັນຕົວແທນໃຫ້ກັບຊົນເຜົ່ານັ້ນໄດ້.ຈາກຄວາມຊົງຈໍາທີ່ຍາກຈະລືມເລືອນໃນດິນແດນແຫ່ງນີ້ທີ່ພວກເຮົາໄດ້ຮັບຊົມຫລາຍສິ່ງຫລາຍຢ່າງ ແລະ ຈາກອໍານາດແຫ່ງຄວາມງາມດັ່ງກ່າວຈຶ່ງເຮັດໃຫ້ພວກເຮົາຄິດຢາກມາຢ້ຽມຢາມ ແລະ ສໍາພັດກັບດິນແດນແຫ່ງນີ້ອີກຕໍ່ໆໄປ.



# ຢູນນານເລັ່ງລັດການກໍ່ສ້າງທາງລົດໄຟສ້າງ ເຄືອຂ່າຍທາງລົດໄຟທີ່ໄປຮອດແມ່ນ້ຳ ແລະ ທະເລ

## 云南加速推进铁路建设 构建通江达海铁路网

目前，云南省正全力推进出境铁路建设，沪昆、云桂高铁建设，以及昆明新火车南站等基础设施建设，构建通江达海、连接周边、方便快捷的铁路网格局，使云南由原来的铁路网末梢，逐步转变成面向东南亚南亚的国际大通道前沿。

ປະຈຸບັນ,ແຂວງຢູນນານພວມພະຍາຍາມຊຸກຍູ້ການກໍ່ສ້າງທາງລົດໄຟອອກເມືອງ,ການກໍ່ສ້າງທາງລົດໄຟຄວາມໄວສູງຊຽງໄຮ-ຄຸນມິງ,ທາງລົດໄຟຄວາມໄວສູງຢູນນານ-ກວາງຊີ,ສະຖານີລົດໄຟພາກໃຕ້ຄຸນມິງແຫ່ງໃໝ່ ແລະ ສິ່ງກໍ່ສ້າງພື້ນຖານໂຄງລ່າງອື່ນໆ,ເຮັດໃຫ້



ທາງລົດໄຟອີຊີຢູນນານຫາມົງຈື່ໄດ້ປູລາງລົດໄຟທົ່ວທາງສາຍແລ້ວ —ເປັນສ່ວນປະກອບທີ່ສຳຄັນຂອງສາຍຕາເວັນອອກທາງລົດໄຟຂ້າມຜ່ານອາຊີ
泛亚铁路东线的重要组成部分——云南玉溪至蒙自铁路全线铺通　新华社 图

ຢູນນານໄດ້ສ້າງເຄືອຂ່າຍທາງລົດໄຟທີ່ໄປຮອດແມ່ນ້ຳ ແລະ ທະເລ,ແລະ ເຊື່ອມຕໍ່ກັບເຂດອ້ອມຂ້າງຢ່າງສະດວກວ່ອງໄວ,ຫັນຈາກປາຍສຸດທ້າຍໃນເຄືອຂ່າຍລົດໄຟກາຍເປັນແນວໜ້າຂອງທາງຜ່ານສາກົນທີ່ມຸ່ງໜ້າໄປສູ່ອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້.

ເລັ່ງລັດກໍ່ສ້າງທາງລົດໄຟອອກເມືອງ

ຄຽງຄູ່ການວາງສີລາຈາລຶກຂອງທາງລົດໄຟຈີນລາວ ແລະ ຈີນໄທ,ສາຍກາງຂອງທາງລົດໄຟພາກພື້ນອາຊີໄດ້ເປັນຮູບເປັນຮ່າງຂຶ້ນໃນຂັ້ນເບື້ອງຕົ້ນ,ແຂວງຢູນນານອາໄສທ່າແຮງດ້ານພູມສາດ,ຈາກແຂວງໜຶ່ງທີ່ຢູ່ເຂດໃນຈີນ,ຫັນເປັນທ່າທາງບົກເຂດໃນທີ່ສາມາດໄປຮອດແມ່ນ້ຳ ແລະ ທະເລ,ຈາກປາຍສຸດທ້າຍໃນການຂົນສົ່ງທາງລົດໄຟຫັນເປັນສູນຂຸມທາງຂອງທາງລົດໄຟ.

ທ່ານ ເສີນອີຊີ,ເຈົ້າໜ້າທີ່ຫ້ອງການແຜນການ ແລະ ສະຖິຕິພະແນກທາງລົດໄຟຄຸນມິງໃຫ້ຮູ້ວ່າ,ໃນທາງລົດໄຟອອກເມືອງ 5 ສາຍຄື: “ຈີນ-ຫວຽດນາມ,ຈີນ-ລາວ,ຈີນ-ມຽນມາ,ຈີນ-ມຽນມາ-ອິນເດຍ”ທີ່ຢູນນານກຳລັງກໍ່ສ້າງນັ້ນ,ຕອນພາຍໃນປະເທດຈີນຂອງທາງລົດໄຟສາກົນຈີນ-ຫວຽດນາມ,ເລີ່ມຈາກຄຸນມິງ,ແວ່ອີຊີ ແລະ ເມືອງຈື,ເຊື່ອມຈອດກັບເຫີໂຂວທີ່ຢູ່ດ່ານເຂົ້າອອກເມືອງຈີນຫວຽດນາມ,ໄດ້ເລີ່ມເປີດບໍລິການໃນເດືອນທັນວາ ປີ 2014.


ໃນວັນທີ 19 ທັນວາ ປີ 2015,ໂຄງການຮ່ວມມືທາງລົດໄຟຈີນ-ໄທໄດ້ເລີ່ມຕົ້ນຢ່າງເປັນທາງການ
2015 年 12 月 19 日，中泰铁路合作项目正式启动　新华社 图

ທາງລົດໄຟສາກົນຈີນ-ລາວຕອນພາຍໃນປະເທດຈີນ,ເລີ່ມຈາກຄຸນມິງ,ຜ່ານອີຊີ,ພູເອີ,ຊຽງຮຸ່ງ,ເຊື່ອມຈອດກັບບໍ່ຫານທີ່ດ່ານເຂົ້າອອກເມືອງຈີນ-ລາວ,ທາງລົດໄຟອີຊີ-ບໍ່ຫານໄດ້ເລີ່ມການກໍ່ສ້າງໃນເດືອນສິງຫາປີ 2015. ໂຄງການປັບປຸງເສີມສ້າງພາກສ່ວນລວມໃນທາງລົດໄຟຈີນ-ຫວຽດນາມ ແລະ ຈີນ-ລາວນັ້ນຄືທາງລົດໄຟຄຸນມິງ-ອີຊີໄດ້ສຳເລັດການລົງທຶນ 4,9 ຕື້ຢວນ,ກວມ 96,5% ໃນຍອດມູນຄ່າການລົງທຶນ.

ທາງລົດໄຟສາກົນຈີນ-ມຽນມາຕອນພາຍໃນປະເທດຈີນ,ເລີ່ມຈາກຄຸນມິງ,ຜ່ານຕ້າລີ,ລິນຊ່າງ,ເຊື່ອມຈອດກັບຊິ່ງສຸຍເຫີຢູ່ດ່ານເຂົ້າອອກເມືອງຈີນ-ມຽນມາ.ໃນນັ້ນ,ທາງລົດໄຟຕ້າລີ-ລິນຊ່າງໄດ້ເລີ່ມລົງມືກໍ່ສ້າງໃນວັນທີ 6 ທັນວາ ປີ 2015,ຕອນລິນຊ່າງ-ຊິ່ງສຸຍເຫີພວມພະຍາຍາມຮ້ອງຂໍໃຫ້ຈັດເຂົ້າໃນແຜນການພັດທະນາເຄືອຂ່າຍທາງລົດໄຟຂອງລັດ.

ທາງລົດໄຟສາກົນຈີນ-ມຽນມາ-ອິນເດຍ,ເລີ່ມຈາກຄຸນມິງ,ຜ່ານປາວສ່ານ (ເມືອງມາງຊື່)ໄປຮອດໂຫວຊຽວທີ່ເປັນດ່ານເຂົ້າອອກເມືອງຈີນ-ມຽນມາ.ທາງລົດໄຟສາກົນຈີນ-ມຽນມາ,ຈີນ-ອິນເດຍຕອນພາຍໃນປະເທດຈີນທີ່ເປັນທາງລົດໄຟໄປກັບລະຫວ່າງກວາງທົ່ງ-ຕ້າລີທີ່ມີຄວາມໄວ 200 ກິໂລແມັດຕໍ່ຊົ່ວໂມງນັ້ນໄດ້ສຳເລັດການລົງທຶນ 8,58 ຕື້ຢວນ,ກວມ 61,9% ໃນຍອດມູນຄ່າການລົງທຶນ.ທາງລົດໄຟຕອນປາວສ່ານ(ເມືອງມາງຊື່)-ໂຫວຊຽວໄດ້ຈັດເຂົ້າໃນແຜນການພັດທະນາເຄືອຂ່າຍທາງລົດໄຟຂອງລັດ.

ປີນີ້ຢູນນານກ້າວເຂົ້າສູ່ຍຸກສະໄໝທາງລົດໄຟຄວາມ



ປັດຈຸບັນນີ້, ໂຄງການວິສະວະກຳກໍ່ສ້າງລັກສະນະພື້ນຖານຂອງສະຖານີລົດໄຟສາຍໃຕ້ອັນໃໝ່ຄຸນໝິງໄດ້ເຮັດສຳເລັດແລ້ວ
昆明火车新南站目前基础性工程已完成 CFP 图

ໄວສູງ

ທ່ານ ເສິນອີຊີ ໃຫ້ຮູ້ວ່າ,ປະຈຸບັນ,ການກໍ່ສ້າງທາງລົດໄຟຄວາມໄວສູງຢູ່ຢູນນານກຳລັງກ້າວໜ້າຢ່າງວ່ອງໄວ,ທາງລົດໄຟຊຽງໄຮ-ຄຸນມິງຕອນຢູນນານ,ທາງລົດໄຟຢູນນານ-ກວາງຊີໄດ້ສຳເລັດການລົງທຶນຫຼາຍກວ່າ 70% ໃນຍອດມູນຄ່າການລົງທຶນ,ປີນີ້ຈະເປີດບໍລິການ. ຮອດເວລານັ້ນ,ຢູນນານຈະກ້າວເຂົ້າສູ່ຍຸກສະໄໝທາງລົດໄຟຄວາມໄວສູງຢ່າງເປັນທາງການ.



ຄຽງຄູ່ກັບທາງລົດໄຟຄວາມໄວສູງຊຽງໄຮ-ຢູນນານຕອນຢູນນານ,ທາງລົດໄຟຢູນນານ-ກຸຍລິນເປີດການດຳເນີນທຸລະກິດໄດ້ເຂົ້າສູ່ການນັບເວລາຖອຍຫລັງ,ໃນປີ 2016,ຢູນນານຈະກ້າວເຂົ້າສູ່ຍຸກສະໄໝທາງລົດໄຟຄວາມໄວສູງ.ພາບນີ້ແມ່ນ "ອ້າຍເອື້ອຍບໍລິການລົດໄຟຄວາມໄວສູງ" ຊຸດທຳອິດຢູນນານໄດ້ເຂົ້າສູ່ການຝຶກອົບຮົມຕົວຈິງ
随着沪昆高铁云南段、云桂铁路开通运营进入倒计时，2016 年云南将迈入高铁时代，图为云南首批高铁“动哥动姐”进入实训 新华社 图

ທາງລົດໄຟໂດຍສານຊຽງໄຮ-ຄຸນມິງຕອນຢູນນານມີໄລຍະຍາວທັງໝົດ 184,7 ກິໂລແມັດ,ຄວາມໄວໃນການອອກແບບແມ່ນ 250-350 ກິໂລແມັດຕໍ່ຊົ່ວໂມງ. ລັງຈາກການເປີດບໍລິການແລ້ວ,ການໃຊ້ເວລາໃນການເດີນທາງຈາກຄຸນມິງໄປຊຽງໄຮຈະຈາກ 40 ກວ່າຊົ່ວໂມງໃນປະຈຸບັນຫຼຸດຕ່ຳລົງເປັນປະມານ 10 ຊົ່ວໂມງ,ເຊິ່ງຈະກາຍເປັນທາງຜ່ານໂດຍສານທີ່ສະດວກວ່ອງໄວ ແລະ ສາມາດຂົນສົ່ງຜູ້ໂດຍສານເປັນຈຳນວນຫຼວງຫຼາຍລະຫວ່າງພາກຕາເວັນຕົກສ່ຽງໃຕ້ກັບພາກກາງ ແລະ ພາກຕາເວັນອອກຂອງຈີນ.



ທາງລົດໄຟຢູນນານ-ກວາງຊີຕອນຢູນນານມີໄລຍະຍາວ 434 ກິໂລແມັດ,ຄວາມໄວໃນການອອກແບບແມ່ນ 200 ກິໂລແມັດຕໍ່ຊົ່ວໂມງ,ເຊິ່ງໄດ້ຈັ່ງຊ່ອງຫວ່າງທີ່ສາມາດຂຶ້ນເປັນ 250 ກິໂລແມັດຕໍ່ຊົ່ວໂມງ. ຫຼັງຈາກສ້າງສຳເລັດແລ້ວ,ຈາກຄຸນມິງຮອດນານນິງຈະໃຊ້ເວລາພຽງແຕ່ 4 ຊົ່ວໂມງເທົ່ານັ້ນ,ຈາກຄຸນມິງໄປຮອດກວາງໂຈ່ວໃຊ້ເວລາ 7 ຊົ່ວໂມງ.

ສະຖານີລົດໄຟພາກໃຕ້ຄຸນມິງແຫ່ງໃໝ່ຈະເປີດບໍລິການໃນທ້າຍເດືອນທ້າຍປີ 2016

ປະຈຸບັນ,ສະຖານີລົດໄຟພາກໃຕ້ຄຸນມິງທີ່ກຳລັງກໍ່ສ້າງຢູ່ແມ່ນຊຸມທາງອັນສຳຄັນຂອງແຂວງຢູນນານ,ກໍ່ແມ່ນສິ່ງກໍ່ສ້າງພື້ນຖານໂຄງລ່າງອັນສຳຄັນທີ່ມຸ່ງໜ້າສູ່ອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້ໃນຍຸດທະສາດ “ໜຶ່ງແລວທາງ ໜຶ່ງເສັ້ນທາງ”.

ສະຖານີລົດໄຟພາກໃຕ້ຄຸນມິງມີເນື້ອທີ່ກໍ່ສ້າງທັງໝົດ 334.700 ຕາແມັດ,ໃນສະຖານີມີ 30 ແຫ່ງ ແລະ 30 ສາຍ,ປະລິມານຂົນສົ່ງຜູ້ໂດຍສານສາມາດບັນລຸເຖິງ 128.000 ເທື່ອຄົນຕໍ່ມື້,ຫຼາຍສຸດສາມາດບັນລຸ 12.000 ຄົນ,ການກໍ່ສ້າງໂຄງການດັ່ງກ່າວຈະຈັດເຂົ້າໃນໂຄງການທາງລົດໄຟຢູນນານ-ກວາງຊີ.ຫຼັງຈາກສ້າງສຳເລັດແລ້ວ,ຕົ້ນຕໍແມ່ນປະຕິບັດໜ້າທີ່ຂົນສົ່ງລະຫວ່າງຢູນນານ-ກວາງຊີ,ຄຸນມິງ-ອີຊີ,ຈຸງກິງ-ຄຸນມິງ,ເສິງຕູ່-ຄຸນມິງ,ຊຽງໄຮ-ຄຸນມິງ.ທິດເໜືອຂອງສະຖານີລົດໄຟເຊື່ອມຈອດກັບທາງລົດໄຟຂອງລົດໄຟໂດຍສານຊຽງໄຮ-ຄຸນມິງ,ຈຸງກິງ-ຄຸນມິງ,ເສັ້ນທາງລົດໄຟໂດຍສານຊຸມທາງ,ທາງເຂົ້າອອກຂອງລົດໄຟຄວາມໄວສູງ,ທິດໃຕ້ເຊື່ອມຈອດກັບທາງລົດໄຟຢູນນານ-ກວາງຊີ ແລະ ທາງລົດໄຟຄຸນມິງ-ອີຊີ.

ນອກນີ້,ສະຖານີລົດໄຟດັ່ງກ່າວຍັງເປັນຊຸມທາງຄົມມະນາຄົມສັງລວມຂະໜາດໃຫຍ່ທີ່ກອມລວມທາງລົດໄຟ,ລົດໄຟໃຕ້ດິນ,ລົດເມ ແລະ ລົດແທັກຊີ,ຜູ້ໂດຍສານສາມາດຕໍ່ລົດຫຼາຍຊະນິດໂດຍກົງພາຍໃນສະຖານີ.



ພາບວິວທາງໃນອຸໂມງທີ່ຊື່ວ່າຄວາມສຸກຂອງເສັ້ນທາງລົດໄຟຢູນນານ-ກຸຍລິນ
云桂铁路幸福隧道内景 新华社 图

# ການທ່ອງທ່ຽວຂອງແຂວງຢຸນນານ ເຊື່ອມໂຍງກັບໂລກເປັ່ງສະເໜ່ຢ່າງສົດໃສ

## 云南旅游接轨世界 绽放魅力

无论是出云南，还是进云南，能直飞的地方越来越多，来云南的游客逐年增加，旅游产品更丰富，景区颜值更高，因旅游而致富的人越来越多……“十二五”期间，云南旅游业不断增长。在这 5 年时间里，云南旅游转型升级，不断走出去、引进来让云南旅游融入世界，让更多的海内外游客读懂美丽云南。

ບໍ່ວ່າແມ່ນເດີນທາງຈາກຢຸນນານໄປນອກ,ຫຼື ເຂົ້າໄປສູ່ຢຸນນານ,ສາມາດຂີ່ບິນໄປສູ່ຈຸດໝາຍປາຍທາງໂດຍກົງນັບມື້ນັບຫຼາຍຂຶ້ນ,ນັກທ່ອງທ່ຽວທີ່ມາທ່ຽວຢຸນນານເພີ່ມຂຶ້ນທຸກປີ,ການບໍລິການດ້ານການທ່ອງທ່ຽວກໍ່ມີຄວາມອຸດົມສົມບູນຫຼາຍຂຶ້ນ,ແຫຼ່ງທ່ອງທ່ຽວມີທິວທັດທີ່ສວຍງາມກວ່າເກົ່າ,ປະຊາຊົນຜູ້ມີຄວາມຮັ່ງມີຂຶ້ນຍ້ອນການທ່ອງທ່ຽວກໍ່ນັບມື້ນັບເພີ່ມຂຶ້ນ.ໃນໄລຍະປະຕິບັດແຜນການ 5 ປີ ຄັ້ງທີ 12,ການທ່ອງທ່ຽວຂອງແຂວງຢຸນນານມີການເຕີບໂຕຢ່າງບໍ່ຢຸດຢັ້ງ.ໃນ 5 ປີຜ່ານມາ,ການທ່ອງທ່ຽວຂອງແຂວງຢຸນນານໄດ້ຫັນປ່ຽນຮູບການພັດທະນາ ແລະ ຍົກລະດັບໃຫ້ສູງຂຶ້ນ,ເຮັດໃຫ້ການທ່ອງທ່ຽວຂອງຢຸນນານເຊື່ອມໂຍງເຂົ້າກັບໂລກໂດຍຜ່ານການກ້າວສູ່ພາຍນອກ ແລະ ນໍາເຂົ້າສູ່ພາຍໃນ,ເຮັດໃຫ້ນັກທ່ອງທ່ຽວຈີນ ແລະ



楚 然 图

ຕ່າງປະເທດຫຼາຍກວ່າເກົ່າມາຮັບຮູ້ກ່ຽວກັບຢຸນນານທີ່ສວຍງາມ.

ຊຸກຍູ້ການເຊື່ອມໂຍງກັບຕະຫຼາດສາກົນຢ່າງຮອບດ້ານ

ການເປີດປະຕູສູ່ພາຍນອກຂອງການທ່ອງທ່ຽວຢຸນນານມີເປົ້າໝາຍອັນໃໝ່,ຄື: ສ້າງຢຸນນານໃຫ້ເປັນຈຸດໝາຍປາຍທາງດ້ານການທ່ອງທ່ຽວທີ່ເປັນອັນດັບໜຶ່ງພາຍໃນປະເທດຈີນ ແລະ ມີຊື່ສຽງໃນໂລກ,ສ້າງເປັນສູນບໍລິການທ່ອງທ່ຽວພາກພື້ນກໍຄືສາກົນ,ທັງເປັນທາງຜ່ານອັນສໍາຄັນທີ່ມຸ່ງໜ້າສູ່ທິດຕາເວັນຕົກສ່ຽງໃຕ້.ໃນຊຸມປີມໍ່ໆມານີ້,ການທ່ອງທ່ຽວຢຸນນານໄດ້ເລັ່ງບາດກ້າວທີ່ເຊື່ອມໂຍງກັບໂລກ.ຄວາມມີສະເໜ່ຂອງຢຸນນານທີ່ເປັນແຫຼ່ງທ່ອງທ່ຽວທີ່ມີສີສັນພິເສດນັ້ນໄດ້ຍົກສູງຂຶ້ນຕື່ມອີກໃນສາກົນ.



楚 然 图



楚 然 图

ປະຈຸບັນ,ຢຸນນານພວມເລັ່ງລັດການກໍ່ສ້າງວົງເສດຖະກິດຕົວເມືອງຢູ່ພາກກາງແຂວງຢຸນນານ,6 ກຸ່ມຕົວເມືອງໃຈກາງ,8 ເຂດເສດຖະກິດລຽບຕາມຊາຍແດນ, ແລະ 4 ແລວທາງເສດຖະກິດ,ສ້າງເຄືອຂ່າຍຄົມມະນາຄົມທີ່ສະດວກວ່ອງໄວກວ່າເກົ່າໂດຍມຸ່ງໜ້າສູ່ທິດຕາເວັນຕົກສ່ຽງໃຕ້ ແລະ ເຊື່ອມຕໍ່ກັບເຂດໃນຈີນ,ພະຍາຍາມໄດ້ຮັບຄວາມຄືບໜ້າອັນໃໝ່ໃນດ້ານຕ່າງໆ,ເຊັ່ນ,ການກໍ່ສ້າງແຫຼ່ງຜະລິດຕະກໍາທີ່ມີສີສັນພິເສດ,ອະນຸພາກພື້ນລຸ່ມແມ່ນ້ໍາຂອງ,ເຂດການຄ້າເສລີຈີນ-ອາຊຽນ,ກົນໄກຮ່ວມມືບັງກາລະເດັດ-ຈີນ-ອິນເດຍ-ມຽນມາ ແລະ ອື່ນໆ, ເຮັດໃຫ້ຢຸນນານຫັນຈາກ“ຊາຍແດນຂອງເຂດໃນ”ກາຍເປັນ“ແນວໜ້າໃນການເປີດປະຕູສູ່ພາຍນອກ”.ການທ່ອງທ່ຽວໄດ້ອາໄສທ່າແຮງດ້ານພູມີພາກທີ່ຢຸນນານເຊື່ອມຈອດກັບຕະຫຼາດອາຊີຕາເວັນອອກ,ອາຊີໃຕ້ ແລະ ເຂດໃນຈີນ,ຊຸກຍູ້ການເຊື່ອມໂຍງກັບຕະຫຼາດສາກົນຢ່າງຮອບດ້ານ,ໄດ້ຮັບຊ່ອງຫວ່າງພັດທະນາຢ່າງກວ້າງຂວາງກວ່າເກົ່າ.

ຄຽງຄູ່ກັບລົງເລິກຊຸກຍູ້ການກໍ່ສ້າງແຂວງທົດລອງການປະຕິຮູບ ແລະ ພັດທະນາແບບສັງລວມດ້ານການທ່ອງທ່ຽວ,ແຂວງຢຸນນານໄດ້ສະຫຼຸບບົດຮຽນທີ່ເຜີຍແຜ່ເຂດທົດລອງການປະຕິຮູບດ້ານການທ່ອງທ່ຽວ,ຊຸກຍູ້ການປະດິດສ້າງໃໝ່ດ້ານລະບຽບການຄຸ້ມຄອງການທ່ອງທ່ຽວຢ່າງຮອບດ້ານ,ຕັ້ງໜ້າຊອກຄົ້ນກົນໄກໃໝ່ດ້ານການນໍາໃຊ້ທີ່ດິນເຂົ້າໃນການທ່ອງທ່ຽວ,ຮ້ອງຂໍການສະໜັບສະໜູນດ້ານນະໂຍບາຍຈາກລັດຖະບານຕື່ມອີກ,ແກ້ໄຂຄວາມຂັດແຍ່ງ ແລະ ບັນຫາຕົ້ນຕໍຢ່າງແທ້ຈິງໃນການເລັ່ງລັດພັດທະນາການທ່ອງທ່ຽວຂອງແຂວງຢຸນນານ,



半清图

ບໍ່ພຽງແຕ່ໄດ້ສ້າງເງື່ອນໄຂພາຍນອກທີ່ດີໃຫ້ແກ່ການພັດທະນາການທ່ອງທ່ຽວຂອງແຂວງຢຸນນານເທົ່ານັ້ນ, ແຕ່ຍັງໄດ້ເພີ່ມກຳລັງແຮງພາຍໃນທີ່ເຂັ້ມແຂງໃຫ້ແກ່ການເລັ່ງລັດພັດທະນາການທ່ອງທ່ຽວຂອງແຂວງຢຸນນານ,ເຊິ່ງໄດ້ຊຸກຍູ້ການທ່ອງທ່ຽວຂອງແຂວງຢຸນນານພັດທະນາຢ່າງວ່ອງໄວ ແລະ ຕໍ່ເນື່ອງ.

ຄົມມະນາຄົມຊ່ວຍຊຸກຍູ້ການທ່ອງທ່ຽວ

ອີງຕາມສະຖິຕິ,ປີ 2010,ສະໜາມບິນພົນລະເຮືອນຂອງຢຸນນານມີຈຳນວນ 12 ແຫ່ງ,ໃນນັ້ນ,ສະໜາມບິນສາຂາ 11 ແຫ່ງລ້ວນແຕ່ຢູ່ແຫຼ່ງທ່ອງທ່ຽວທີ່ສຳຄັນ,ຈຳນວນສະໜາມບິນຢູ່ອັນດັບທີ 2 ຂອງຈີນ;ໃນທົ່ວແຂວງຢຸນນານໄດ້ເປີດເສັ້ນທາງການບິນທັງພາຍໃນ ແລະ ສາກົນ 236 ສາຍ,ມີເສັ້ນທາງການບິນເປັນວົງຮອບພາຍໃນແຂວງ 6 ສາຍ,ມີຖ້ຽວບິນໄປສູ່ 98 ຕົວເມືອງທັງພາຍໃນປະເທດ ແລະ ຕ່າງປະເທດ.ເສັ້ນທາງການບິນພາຍໃນປະເທດໄດ້ເຊື່ອມຕໍ່ກັບຕົວເມືອງເທສະບານແຂວງທັງໝົດ,ຕົວເມືອງທີ່ເສດຖະກິດຈະເລີນຮຸ່ງເຮືອງ,ແລະຕົວເມືອງທ່ອງທ່ຽວທີ່ສຳຄັນ.ຄຽງຄູ່ກັບສະໜາມບິນທີ່ເປັນຊຸມທາງໃນພາກພື້ນ ແລະ ສາກົນແຫ່ງໃໝ່ຂອງຄຸນມິງ,ພ້ອມດ້ວຍສະໜາມບິນສາຂາຫຼາຍແຫ່ງສ້າງສຳເລັດ ແລະ ເປີດບໍລິການ,ໄດ້ຈໍ່ຕົວເປັນເຄືອຂ່າຍຄົມມະນາຄົມທາງອາກາດທີ່ສາມາດໄປສູ່ຕົວເມືອງສຳຄັນຂອງປະເທດອາຊຽນ ແລະ ປະເທດອ້ອມຂ້າງ,ຕົວເມືອງທ່ອງທ່ຽວ ແລະ ແຫຼ່ງທີ່ມານັກທ່ອງທ່ຽວທີ່ສຳຄັນພາຍໃນປະເທດຈີນ,ພ້ອມດ້ວຍເສັ້ນທາງການບິນທ່ອງທ່ຽວຮອບແຂວງ. ປະຈຸບັນ,ຢຸນນານໄດ້ມີສະໜາມບິນ 13 ແຫ່ງ, ໃນນັ້ນ,ມີສະໜາມບິນລະດັບຊາດ 1 ແຫ່ງ,ສະໜາມບິນລະດັບອະນຸພາກພື້ນ 3 ແຫ່ງ,ສະໜາມບິນຂະໜາດກາງ 3 ແຫ່ງ ແລະ ສະໜາມບິນຂະໜາດນ້ອຍ 6 ແຫ່ງ.

ໃນຊຸມປີມໍ່ໆມານີ້,ຄຽງຄູ່ກັບເສດຖະກິດສັງຄົມພັດທະນາຢ່າງວ່ອງໄວ,ການເປີດປະຕູສູ່ພາຍນອກກ້າວສູ່ລວງເລິກຢ່າງບໍ່ຢຸດຢັ້ງ,ແລະ ການຮ່ວມມືດ້ານເສດຖະກິດພາກພື້ນເພີ່ມຂຶ້ນຕື່ມອີກ,ການໄປມາຫາສູ່ກັນດ້ານບຸກຄະລາກອນເພີ່ມຂຶ້ນ,ການຂົນສົ່ງວັດສະດຸດຳເນີນໄປດ້ວຍຄວາມຖີ່ສູງ,ຄວາມຕ້ອງການແຫ່ງການຂົນສົ່ງທາງອາກາດຂອງຢຸນນານຍ່ອມຈະເພີ່ມຂຶ້ນຢ່າງວ່ອງໄວ ແລະ ຕໍ່ເນື່ອງ.ປີ 2015,ຢຸນນານໄດ້ສຸມໃສ່ເລັ່ງລັດການກໍ່ສ້າງ "5 ເຄືອຂ່າຍ",ຄືເຄືອຂ່າຍທາງຫຼວງ,ທາງອາກາດ,ທາງພະລັງງານ,ທາງນ້ຳ,ແລະ ທາງອິນເຕີເນັດ,ເຊິ່ງປະກອບເປັນລະບົບພື້ນຖານໂຄງລ່າງສັງລວມທີ່ເປັນການຄ້ຳຊູຕໍ່ການພັດທະນາຂອງຢຸນນານຢ່າງມີປະສິດທິຜົນ, ແລະຮັບໃຊ້ຍຸດທະສາດແຫ່ງຊາດໃຫ້ດີກວ່າເກົ່າ.

ແຂວງຢຸນນານຢູ່ເຂດຊາຍແດນທາງຕາເວັນຕົກສ່ຽງໃຕ້ຂອງຈີນ,ເປັນແຂວງພຽງໜຶ່ງດຽວຂອງຈີນທີ່ສາມາດຜ່ານອາຊີຕາເວັນອອກສ່ຽງໃຕ້ແລ້ວໄປສູ່ປະເທດທີ່ຢູ່ແຄມມະຫາສະໝຸດອິນເດຍໂດຍກົງ,ແລະ ມີຊັບພະຍາກອນດ້ານການທ່ອງທ່ຽວຢ່າງອຸດົມສົມບູນ,ທັງເປັນແຂວງໃຫຍ່ດ້ານກະສິກຳ ແລະ ປ່າໄມ້,ອັນທີ່ມີຄວາມຕ້ອງການພິເສດຕໍ່ການບິນພົນລະເຮືອນ.ປະຈຸບັນ,ແຂວງຢຸນນານພວມພັດທະນາເຄືອຂ່າຍການບິນ 3 ລະດັບທີ່ເຊື່ອມຕໍ່ສາກົນ,ພາຍໃນປະເທດຈີນ ແລະ ພາຍໃນແຂວງຢຸນນານ,ເຊິ່ງຖືສະໜາມບິນຄຸນມິງເປັນໃຈກາງ,ສະໜາມບິນລີ້ຈ່ຽງ,ສິບສອງພັນນາ ແລະ ເມືອງມາງຊື້ເປັນຫຼັກແຫຼ່ງ,ສະໜາມບິນອື່ນໆເປັນສຳຮອງ.ພ້ອມກັນນັ້ນ,ພວມພະຍາຍາມສ້າງສາເຄືອຂ່າຍການບິນທີ່ "ຖືເຄືອຂ່າຍການບິນດ້ານການທ່ອງທ່ຽວທີ່ດີເລີດເປັນຫົວຈັກ,ຖືເຄືອຂ່າຍການບິນທາງທຸລະກິດສາຍດ່ວນ ແລະ ການຈໍລະຈອນສິນຄ້າເປັນປີກສອງເບື້ອງ,ຖືເຄືອຂ່າຍການບິນທີ່ມີຕົ້ນທຶນຕ່ຳເປັນພື້ນຖານ,ຖືເຄືອຂ່າຍການບິນທາງທຸລະກິດທົ່ວໄປເປັນສຳຮອງ".



半清图



半清图



半清图

## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຢິວູ, ເມືອງນານນິງ, ເມືອງພິງຊຽງ, ເມືອງຄຸນໝີງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່າວຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢຸ່ນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຂຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້

-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ

-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965

ໂທລະສັບລາວ: 020 98000013

ພາສາລາວ: 020 98209598

EMAIL: ocean@transgz.com

ເວບໄຊ:www.transgz.com



广州共成运输代理有限公司

## 中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：

——中国广州到老挝万象4天汽车快运

——中国广州经曼谷到万象的海陆联运服务

——老挝出口到中国等国家的物流服务

中国热线：86 20 36517965

老挝热线：020-98000013

老挝文： 020-28140016

EMAIL:ocean@transgz.com

网址：www.transgz.com




ລາວກາເຟ ™

老咖啡

LAO COFFEE



ແກ່ນກາເຟດີທີ່ສຸດ ຜະລິດຈາກສວນກາເຟ ແຂວງຜົ້ງສາລີ ສປປ ລາວ

## 咖啡豆源自老挝丰沙里精品咖啡庄园



## 咖啡改变生活

## ——昌胜达“替代种植“扶贫成效显著

在老挝北部这片土地上，禁毒、扶贫是一种大爱；对于昌胜达而言，这更是一份伟大的事业。如今，这份凝聚大爱的事业已经在悄然改变着这里。

昌胜达18万亩咖啡种植项目，如今已完成了5万余亩的种植面积，涉及130个村庄，带动老挝人口超过30000人，有超过1500个农户从中得到收益。昌胜达在老挝境内修路超过100余公里，而公司雇佣的员工中，有70%是老挝人。

**云南昌胜达投资有限公司**

文、图/云南建工集团有限公司

# ຊ່ວງຊີງເວລາເອົາຊະນະຄວາມຫຍຸ້ງຍາກນາໆປະການ ຈຶ່ງນຳເອົານ້ຳໃສມາເພື່ອຊີວິດການເປັນຢູ່ຂອງປະຊາຊົນ

## —ໂຄງການຂະຫຍາຍໂຮງງານນ້ຳປະປາດົງໝາກຄາຍ ໄລຍະທີ 2 ນະຄອນວຽງຈັນລາວໄດ້ສຳເລັດການກໍ່ສ້າງ

## 争分夺秒克万难 引来清泉惠民生

### ——云南建工老挝万象东马凯水处理厂二期改扩建项目施工侧记

“感谢云南建工集团、感谢高原铁军，向老挝人民交出一份满意答卷。”2015 年 12 月 28 日，由老挝公共工程及运输部及万象自来水公司等单位组成的竣工验收小组，对由云南建工承建的老挝万象东马凯水处理厂改扩建二期项目进行竣工验收，住房与规划司长康塔威代表验收小组高兴地宣布：云南建工集团严格执行了相关技术规范和法定程序，符合设计文件要求、符合施工合同要求、竣工资料符合要求，各项技术参数满足有关规范要求，设备运行稳定、可靠，满足竣工验收的条件，质量评定为优秀。

“ຂອບອົກຂອບໃຈນຳກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ຂອບອົກຂອບໃຈນຳກອງທັບເຫຼັກພູພຽງໄດ້ມອບໜັງສືຄຳຕອບທີ່ເພິ່ງພໍໃຈສະບັບໜຶ່ງໃຫ້ແກ່ປະຊາຊົນລາວ.”ໃນວັນທີ 28 ເດືອນ 12 ປີ 2015,ໜ່ວຍງານກວດຮັບການກໍ່ສ້າງທີ່ສຳເລັດພົນເຊິ່ງປະກອບດ້ວຍກະຊວງໂຍທາທິການ ແລະ ຂົນສົ່ງລາວ ແລະ ບໍລິສັດນ້ຳປະປານະຄອນຫຼວງວຽງຈັນດຳເນີນການກວດຮັບໂຄງການໄລຍະທີ 2 ຂອງໂຮງງານນ້ຳປະປາດົງໝາກຄາຍວຽງຈັນລາວເຊິ່ງແມ່ນກຸ່ມບໍລິສັດສະວະກຳກໍ່ສ້າງຢຸນນານເປັນຜູ້ຮັບເໝົາກໍ່ສ້າງ,ທ່ານ ຄຳທະວີ ຫົວໜ້າກົມເຄຫາສະຖານ ແລະ ແຜນການຕາງໜ້າໜ່ວຍງານກວດຮັບປະກາດໂດຍຄວາມດີໃຈວ່າ: ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ປະຕິບັດຕາມມາດຕະຖານດ້ານເຕັກນິກ ແລະ ລຳດັບດ້ານກົດໝາຍລະບຸໄວ້ທີ່ກ່ຽວຂ້ອງຢ່າງເຂັ້ມງວດ,ສອດຄ່ອງກັບຄວາມຮ້ອງຂໍຂອງສັນຍາວ່າດ້ວຍການກໍ່ສ້າງ,ຂໍ້ມູນສຳເລັດການກໍ່ສ້າງສອດຄ່ອງກັບຄວາມຮ້ອງຂໍ,ຕົວເລກຄົ້ນຄວ້າຖືກຕ້ອງທາງເຕັກນິກທຸກປະການ,ຕອບສະໜອງຄວາມຮຽກຮ້ອງຕ້ອງການມາດຕະຖານທີ່ກ່ຽວຂ້ອງ,ການໝູນວຽນຂອງເຄື່ອງປະກອບໝັ້ນທ່ຽງ,ເຊື່ອໃຈໄດ້,ຕອບສະໜອງເງື່ອນໄຂແຫ່ງການກວດຮັບສຳເລັດການກໍ່ສ້າງ,ປະເມີນຄຸນນະພາບເປັນລະດັບດີເລີດ.

ການປະກາດຢ່າງເປັນທາງການດັ່ງກ່າວນີ້ບໍ່ພຽງແຕ່ແມ່ນຜົນງານອັນດີງາມອີກອັນໜຶ່ງຂອງໂຄງການວິສະວະກຳກໍ່ສ້າງທີ່ເປັນຈຸດສຸມຢູ່ຕ່າງປະເທດຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທີ່ເປັນເວລາ 2 ປີທີ່ຜ່ານມານີ້.ກໍ່ແມ່ນບາດກ້າວທີ່ໜັກແໜ້ນບາດໜຶ່ງຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຕັ້ງໜ້າຕອບສະໜອງຄວາມຮຽກຮ້ອງແນວທາງນະໂຍບາຍ“ໜຶ່ງແລວທາງໜຶ່ງເສັ້ນທາງ”ຂອງລັດ,ລົງເລິກປະຕິບັດຍຸດທະສາດ“ອອກໄປຕ່າງປະເທດ”,ທັງເປັນພາກປະຕິບັດຕົວຈິງທີ່ມີຊີວິດຊີວາອີກຄັ້ງໜຶ່ງຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທາງດ້ານໂຄງການ“ດີເລີດທັງ 2 ”ຢູ່ໃຕ້ການສະໜັບສະໜູນຢ່າງແຂງແຮງຈາກທະນາຄານຂາເຂົ້າຂາອອກຂອງຈີນ,ເພື່ອກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຕັ້ງໜ້າເປີດກວ້າງແນວຄວາມຄິດບຸກເບີກຂະຫຍາຍທຸລະກິດລະດັບສູງ,ຍິ່ງແມ່ນເປັນຂອງຂວັນໃຫຍ່ຫຼວງອັນໜຶ່ງຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານເອົາໃຈໃສ່ການພັດທະນາເສດຖະກິດຂອງລາວ,ຕັ້ງໜ້າມີສ່ວນຮ່ວມການສ້າງສາເສດຖະກິດຂອງລັດ ແລະ ຊີວິດການເປັນຢູ່ຂອງປະຊາຊົນລາວເພື່ອຖວາຍແກ່ວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ.

ເພີ່ມທະວີການສຳຫລວດ,ຊຸກຍູ້ການປະຕິບັດໂຄງການຢ່າງສະດວກດີ

ກ່ອນປະຕິບັດໂຄງການ,ຂະໜາດໂຄງການສະໜອງນ້ຳຂອງໂຮງງານນ້ຳປະປາດົງໝາກຄາຍວຽງຈັນລາວພຽງແຕ່ແມ່ນ 180.600 ແມັດກ້ອນ,ປະລິມານການຜະລິດຕໍ່ມື້ 20.000 ແມັດກ້ອນ,ລັດຖະບານລາວໄດ້ຊີ້ອອກໃຫ້ເຫັນໃນ《ແຜນແມ່ບົດຍຸດທະສາດນະຄອນຫຼວງວຽງຈັນ》ເວົ້າວ່າ,ຫວັງຢ່າງຍິ່ງວ່າ, ໂດຍຜ່ານການກໍ່ສ້າງໂຄງລ່າງພື້ນຖານ,ສະໜັບສະໜູນ ແລະ ເປັນການຊຸກຍູ້ການພັດທະນາເສດຖະກິດສັງຄົມ ແລະ ການສ້າງສາໂຄງລ່າງພື້ນຖານນະຄອນຫຼວງວຽງຈັນ,ເພື່ອຕອບສະໜອງການໃຊ້ນ້ຳໃນຊີວິດປະຈຳວັນ ແລະ ການໃຊ້ນ້ຳໃນການຜະລິດຢູ່ເຂດພັດທະນາກວມລວມນະຄອນຫລວງວຽງຈັນທີ່ຢູ່ຫຼັກ km21 ວຽງຈັນ ແລະ ສະໜອງນ້ຳໃຫ້ແກ່ນະຄອນຫຼວງວຽງຈັນ,ເພື່ອເພີ່ມເຕີມຄວາມບໍ່ພຽງພໍໃນການສະໜອງນ້ຳໃຊ້ ແລະ ແກ້ໄຂຄວາມຂັດແຍ້ງລະຫວ່າງການສະໜອງນ້ຳໃນໂຕເມືອງ ແລະ ການພັດທະນາໂຕເມືອງ,ລັດຖະບານລາວ ແລະ ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ຕົກລົງເຊັນສັນຍາເຊິ່ງແມ່ນກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດປະຕິບັດການກໍ່ສ້າງໂຄງການຂະຫຍາຍໂຮງງານບຳບັດນ້ຳເສຍດົງໝາກຄາຍວຽງຈັນລາວໄລຍະທີ 2.ຫລັງຈາກໄດ້ຮັບພາລະໜ້າທີ່ແລ້ວ,ການນຳຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໃຫ້ຄວາມເອົາໃຈໃສ່ຢ່າງສູງ,ໄດ້ຈັດວາງພາກສ່ວນວິສະວະກຳກໍ່ສ້າງສາກົນທີ່ມີບົດຮຽນຄຸ້ມຄອງອຸດົມສົມບູນຢູ່ຕ່າງປະເທດຕາງໜ້າກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານເປັນຜູ້ຮັບຜິດຊອບລວມການກໍ່ສ້າງຄວການດັ່ງກ່າວນີ້.

“ໂຄງການດັ່ງກ່າວນີ້ແມ່ນສິ່ງປຸກສ້າງໂຮງງານອຸດສາຫະກຳໂດຍແມ່ນສະນ້ຳເປັນຫຼັກ,ສິ່ງປຸກສ້າງຄົບວົງຈອນ, ໂຄງສ້າງເຫຼັກເສັ້ນ ແລະ ທໍ່ເຫຼັກເປັນສຳຮອງ,ເປັນຕົ້ນແມ່ນໂຮງງານນ້ຳສະອາດ,ປາກດູດເອົານ້ຳ, ແລະ ສາຍທໍ່ປະກອບເດີນສາມພາກສ່ວນ.ຫລັງຈາກໂຄງການສ້າງສຳເລັດແລ້ວ,ປະລິມານການຜະລິດນ້ຳຕໍ່ມື້ຈະຍົກສູງຂຶ້ນ 120.000 ແມັດກ້ອນ,ຂະໜາດສະໜອງນ້ຳແມ່ນ 280.600 ແມັດກ້ອນ.ສາມາດຕອບສະໜອງການນຳໃຊ້ນ້ຳໃນຊີວິດປະຈຳວັນ ແລະ ການໃຊ້ນ້ຳໃນການຜະລິດຢູ່ເຂດໃໝ່ພັດທະນາກວມລວມວຽງຈັນທີ່ຢູ່ຫຼັກ km21 ວຽງຈັນ.ປະລິມານນ້ຳໃຊ້ເຫຼືອໄວ້ນັ້ນສາມາດສະໜອງໃຫ້ໂຕເມືອງນະຄອນວຽງຈັນໄດ້”,ຄວາມຮັບຜິດຊອບໜັກກວ່າພູໄທຊານ.ສຳລັບພາລະໜ້າທີທີ່ສຳຄັນດັ່ງກ່າວນີ້,ຄະນະນຳພາກສ່ວນວິສະວະກຳກໍ່ສ້າງສາກົນບໍ່ໄດ້ລົດລະຈັກເມັດ,ໄດ້ດຳເນີນການຈັດການຈຸດສຸມ ແລະ ຈຸດຫຍຸ້ງຍາກຂອງວຽກງານຢ່າງຮອບດ້ານ,ດ້ານໜຶ່ງ

ຄັດເລືອກພະນັກງານທຳງານໃນພາກສະໜາມຈາກພາຍໃນປະເທດໃນເວລາທີ 1,ຈັດຕັ້ງຈຸຊ່ຽວຊານທີ່ມີບົດຮຽນສົມບູນຈຸໜຶ່ງສົມທົບກັບຄະນະອຳນວຍການລົງເລິກພາກສະໜາມສຳຫລວດເກັບກຳຂໍ້ມູນຮັບຮູ້ສະພາບ; ອີກດ້ານໜຶ່ງ,ໃນໄລຍະຜ່ານການສຳຫລວດນັ້ນ,ພະຍາຍາມສ້າງຄວາມເຂົ້າໃຈກັນ ແລະ ປະສານງານກັບຝ່າຍລາວ,ປັບປຸງການຈັດສັນ,ກຳຈັດໄພພິບັດທີ່ແອບແຝງທາງດ້ານຄວາມປອດໄພ.

ເນື່ອງຈາກວ່າ,ນ້ຳເດີມຂອງໂຮງງານນ້ຳປະປາເອົາມາຈາກນ້ຳງື່ມ,ວິສະວະກຳດູດເອົານ້ຳແມ່ນນຳໃຊ້ປ້ານ້ຳໄຫລຄົງທີ່,ຈະຖືກການກະທົບຂອງລະດັບນ້ຳມີການປ່ຽນແປງ,ນ້ຳເດີມທີ່ມີຂີ້ຊາຍຫຼາຍ,ເຮັດໃຫ້ການບຳບັດນ້ຳເສຍມີຄວາມຫຍຸ້ງຍາກຫຼາຍ ແລະ ຕົ້ນທຶນເພີ່ມຂຶ້ນ,ນ້ຳໃຊ້ລະບາຍນ້ຳ ແລະ ນ້ຳເດີນຂອງໂຮງງານນ້ຳປະປາດົງໝາກຄາຍລວມກັນໃຊ້ເໝືອງຝາຍເປີດສາຍໜຶ່ງ,ຈະເກີດເຫດການເປື້ອນເປີໄດ້ງ່າຍ.ຈະດຳເນີນການສາລະເວກອດກາຕາມກຳນົດເວລາໄດ້ຍາກ.ເພື່ອເຮັດໃຫ້ວິສະວະກຳກໍ່ສ້າງຍິ່ງມີລັກສະນະວິທະຍາສາດ,ເສດຖະກິດ,ສົມເຫດສົມຜົນ,ສອດຄ່ອງກັບສະພາວະດຽວນີ້ ແລະ ແຜນພັດທະນາໃນການສະໜອງນ້ຳໃນທ້ອງຖິ່ນ ແລະ ຮັບປະກັນສະໜອງນ້ຳມີຄວາມປອດໄພ,ຈຸຊ່ຽວຊານດຳເນີນການສຳຫລວດພາກສະໜາມຫຼາຍເທື່ອ,ເກັບກຳຂໍ້ມູນຂອງນ້ຳແຕ່ລະແຫ່ງດຳເນີນການວັດແທກແຫຼ່ງນ້ຳ,ເກັບກຳຂໍ້ມູນທໍລະນີສາດ,ອຸທົກກະສາດ ແລະ ທໍລະນີວິສະວະກຳລະອຽດລຽບຕາມທໍ່ນ້ຳກຳນົດຕົວເລກຄົ້ນຄວ້າຄິດໄລ່ໃນການອອກແບບຂອງສິ່ງປຸກສ້າງທີ່ກ່ຽວຂ້ອງຢ່າງມີວິທະຍາສາດ ແລະ ຄວາມຮ້ອງຂໍໃນການອອກແບບ,ໄດ້ຮັບຄຳຄິດເຫັນລັກສະນະຜົນສຸດທ້າຍຢ່າງຄັກແນ່,ສະເໜີເອກະສານຄົບວົງຈອນຂອງຕາໜ່າງທໍ່ນ້ຳ,ລະບົບສົ່ງນ້ຳ, ໂຮງງານບຳບັດນ້ຳອອກມາ.

ອີກດ້ານໜຶ່ງ,ຄະນະອຳນວຍການຜ່ານການວັດແທດພາກສະໜາມຕົວຈິງຫຼາຍເທື່ອ,ສົມທົບກັບຄວາມຄິດເຫັນຂອງສະຖາບັນອອກແບບ,ຈັດສັນຕໍ່ກັບສິ່ງປຸກສ້າງຕ່າງໆ,ດັດແກ້ແຜນວາດການກໍ່ສ້າງຫຼາຍຫຼີບຫຼາຍຕ່າວ,ວາງແຜນຄຸ້ມຄອງ ແລະ ແຜນວາດການກໍ່ສ້າງຢ່າງລະອຽດຂອງໂຄງການ,ແນ່ໃສ່ວິສະວະກຳກໍ່ສ້າງຈຸດໜັກ ແລະ ຈຸດຍາກລາຍດຽວຍັງວາງແຜນສະເພາະອອກມາ,ແລະ ເຊື້ອເຊີນນັກຊ່ຽວຊານດຳເນີນການກວດຮັບຢືນຢັນ,ເພື່ອສະໜອງຄວາມຮັບປະກັນແກ່ການກໍ່ສ້າງໂຄງການ.

### ກຳແໜ້ນແຫຼ່ງຕົ້ນນ້ຳ,ຊວງຊິງກາລະເວລາເພື່ອຮັບປະກັນຄວາມປອດໄພ

ໃນປີ 2014,ເລີ່ມກໍ່ສ້າງໂຄງການປາກດູດນ້ຳ,ທີ່ຕັ້ງພູມມີປະເທດການກໍ່ສ້າງແມ່ນຄັບແຄບທີ່ສຸດ,ໄດ້ຖືກການຈຳກັດດັ່ງນີ້,ຄວາມຫຍຸ້ງຍາກການກໍ່ສ້າງເພີ່ມຂຶ້ນຫຼາຍ,ບວກກັບຄວາມຫຍຸ້ງຍາກພົບກັບຜາຫີນແຂງໃນໄລຍະຜ່ານກະບອກເຫຼັກສາງຈົມລົງ.ພ້ອມກັນນັ້ນ,ສາຍນ້ຳງື່ມເປັນສາຍນ້ຳລັກສະນະລະດູການສາຍໜຶ່ງ,ປະເຊີນໜ້າຍາມຝົນສືບຕໍ່ກັນທີ່ຈະມາເຖິງ,ຈະພາໃຫ້ນ້ຳຂຶ້ນ,ຄວາມກົດດັນດ້ານປອດໄພຈະເພີ່ມຂຶ້ນເປັນຫຼາຍເທົ່າຕົວ."ເວລານັ້ນ,ພວກເຮົາຮ້ອນຮົນຄືໂຕມົດໃນໝໍ້ຮ້ອນ,ແຕ່ວ່າ,ພວກເຮົາບໍ່ສາມາດພາໃຫ້ເກີດອຸປະຕິເຫດ."ທ່ານໂຈວຈິຕຸງຜູ້ຈັດການໂຮງງານນ້ຳປະປາດົງໝາກຄາຍເວົ້າເຖິງສະພາບການກັບທີ່ນັ້ນ,ຍັງຄົງພາໃຫ້ຄົນຮູ້ສຶກໜ້າໃຈຫາຍ.

ປະເຊີນໜ້າຄວາມຫຍຸ້ງຍາກຢ່າງໜັກໜ່ວງດັ່ງກ່າວນີ້,ຄະນະອຳນວຍການສົມມຸດຢ່າງໃຈກ້າວ່າ,ສະແຫວງຫາຢັ້ງຢືນໃຫ້ຖືກຕ້ອງຢ່າງລະມັດລະວັງ.ໂດຍຜ່ານການຢັ້ງຢືນຈາກຫຼາຍຝ່າຍ,ຄະນະອຳນວຍການຕົກລົງປະຕິບັດແບ່ງເປັນ 3 ບາດກ້າວ:ໜຶ່ງແມ່ນວິທີຈົ່ງປາກຮູສາງຈຸ່ມລົງໄວ້ຢ່າງລະອຽດ,ຮັບປະກັນຄວາມໝັ້ນຂອງສາງຈຸ່ມລົງ; ສອງແມ່ນຕໍ່ກັບບັນຫາລະບາຍນ້ຳ,ຫລຸດຜ່ອນນ້ຳ,ຢຸດນ້ຳໄວ້ໃນໄລຍະຜ່ານສາງຈຸ່ມລົງ ແລະ ມາດຕາການແກ້ຜິດພາດໄດ້ເຮັດວຽກລັກສະນະສົມມຸດຢ່າງຫຼວງຫຼາຍ,ວາງມາດຕະການສຸກເສີນເປັນຢ່າງດີ;ສາມແມ່ນນຳໃຊ້ວິທີຊຸກຍູ້ຫຼາຍດ້ານເພື່ອເພີ່ມທະວີຄວາມເຂັ້ມແຂັງພື້ນຢຸດນ້ຳ.ໄດ້ພະຍາຍາມຢ່າງບໍ່ລົດລະຂອງພະນັກງານພະລາກອນທັງໝົດ ແລະ ຂອງຄະນະອຳນວຍການ,ສຸດທ້າຍ,ໄດ້ເອົາກະບອກສາງຈຸ່ມລົງຮອດພື້ນຢ່າງສະດວກ,ເຮັດສຳເລັດວຽກງານອັດພື້ນຢ່າງຈົບງາມ.

ຕໍ່ມາ,ແມ່ນການກໍ່ສ້າງທໍ່ນ້ຳເຂົ້າສູ່ທາງນ້ຳທີ່ຍິ່ງຫຍຸ້ງຍາກຫຼາຍກວ່ານີ້ອີກ.ອາຍຸການກໍ່ສ້າງບໍ່ລໍຖ້າຄົນດອກ, ໂມງເວລາຊົ່ວກະພິບຕາກໍລ່ວງໄປແລ້ວ,.ລະດູຝົນລາວໃກ້ຈະມາເຖິງນີ້,ເຖິງເວລານັ້ນ,ນ້ຳຂຶ້ນຫຼາຍ,ບໍ່ພຽງແຕ່ນຳເອົາໄພພິບັດແອບແຝງດ້ານຄວາມປອດໄພແຮງຫຼາຍ,ແລະ ຍັງຈະຕ້ອງເພີ່ມຕື່ມຄວາມຫຍຸ້ງຍາກຫຼາຍແກ່ການກໍ່ສ້າງອີກ.ໃຕ້ສະພາບການດັ່ງກ່າວນີ້,ຂົງເຂດ ແລະ ຄະນະອຳນວຍການຈະຈັດກອງປະຊຸມສະເພາະສຳລັບຕໍ່ໄລຍະການກໍ່ສ້າງຂໍ້ຕໍ່ສຳຄັນ,ປຸກລະດົມຜູ້ທີ່ເຂົ້າຮ່ວມການກໍ່ສ້າງໝົດທຸກຄົນຈະຕ້ອງເບິ່ງເຫັນສະພາບການຢ່າງຈະແຈ້ງ,ປັບປຸງສະພາວະເປັນຢ່າງດີ,ຈະຕ້ອງຮັບປະກັນຄຸນນະພາບ ແລະ ຮັບປະກັນປະລິມານໃຫ້ສຳເລັດໜ້າທີ່ການກໍ່ສ້າງ ແລະ ການຜະລິດພາຍໃນໄລຍະການກໍ່ສ້າງຂໍ້ຕໍ່ສຳຄັນຢ່າງແນ່ນອນ.ຄະນະອຳນວຍການໝົດທຸກຄົນຈະຕ້ອງພ້ອມກັນພະຍາຍາມໂດຍຜ່ານການດັດແກ້ແຜນວາດຕັ້ງຫຼາຍເທື່ອ,ຕິດຕາມວັດແທດນ້ຳໄຫລ,ເອົາກິດຈະການຍົກຂຶ້ນປະກອບຕິດຕັ້ງປະສານສົມທົບກັບກິດຈະການດິນຢ່າງແໜ້ນ,ທຳໃຫ້ກົນຈັກຂະໜາດໃຫຍ່ຄ່ອຍລົງມາຈາກລະດັບສູງ 168 ແມັດຮອດລະດັບ 153 ແມັດ...ຄະນະອຳນວຍການກໍ່ສ້າງໝົດທຸກຄົນປະຕິບັດສັດທາ"ກອງທັບເຫຼັກພູພຽງ"ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ໄດ້ກໍ່ກະແສສູງແຫ່ງການກໍ່ສ້າງຂຶ້ນອີກຮອບໜຶ່ງ."ເຮັດວຽກທັງເວັນທັງຄືນ","ເຮັດສາມຜ່ຽນຜັດປ່ຽນກັນ",ຊວງຊິງເວລາສູ້ກັບລະດູຮ້ອນອົບເອົ້າ,ໃນທ້າຍທີ່ສຸດ,ຍາດໄດ້ເວລາອັນລ້ຳຄ່າ,ເຮັດໃຫ້ທໍ່ນ້ຳເຂົ້າສູ່ແມ່ນ້ຳຢ່າງສຳເລັດໂດຍຄວາມປອດໄພກ່ອນລະດູຝົນຈະມາເຖິງ,ໄດ້ຮັບການຕີລາຄາຈາກເຈົ້າຂອງໂຄງການຝ່າຍລາວເປັນຢ່າງດີ.

### ຜ່ານຜ່າຄວາມຫຍຸ້ງຍາກ,ຮ່ວມກັນປະກອບເປັນຊຸດ

ອຸກດັນສະຖານະການທັງປວງນັບຕັ້ງແຕ່ເດືອນ 3 ປີ 2013 ເປັນຕົ້ນມາ,ເລີ່ມກໍ່ສ້າງໂຮງງານນ້ຳປະປາຢ່າງເປັນທາງການ, ໂຄງການນີ້ເປັນຕົ້ນແມ່ນປະກອບມີ:ນ້ຳສ້າງປະກອບນ້ຳ,ສະກະຕັງນ້ຳໄຫຼພຽງ,ສະນ້ຳໃສ,ຕຶກກວມລວມ,ຫ້ອງຕື່ມນ້ຳຢາ,ຫ້ອງຈັກຊຸລ້າງຫ້ອງປ້ານ້ຳ ແລະ ຫ້ອງສູບລົມ,ຫ້ອງສົ່ງນ້ຳປ້ານ້ຳ ແລະ ອື່ນໆ.ໃນການກໍ່ສ້າງດິນຂອງໂຮງງານນ້ຳສະອາດນັ້ນ,ສະຕອງນ້ຳແບບ V ເປັນພາກສ່ວນແກ່ນສານຂອງໂຮງງານບຳບັດນ້ຳ,ທັງເປັນຈຸດສຸມ ແລະ ທັງເປັນຈຸດຍາກ.

“ໂດຍສະເພາະແມ່ນໃນການກໍ່ສ້າງໂຄງປະກອບຂອງສະຕອງນ້ຳ ແລະ ວຽກງານຕິດຕັ້ງນັ້ນ,ຍ້ອນວ່າ,ເຕັກໂນໂລຊີຂອງໂຮງງານສະຕອງນ້ຳແບບ V ອ້ອນອ້າງມີຄວາມຮຽກຮ້ອງຕ້ອງການສູງ,ຮູບແບບໂຄງປະກອບດິນສັບສົນ.ລະດັບສູງ,ຄວາມພຽງປັບດິນ,ຈຸດຕິດຕັ້ງຄາດຄະເນຝັ່ງໄວ້ສະລັກຕາປູຄວງເຫຼັກບໍ່ຈັບຂີ້ມ້ຽງໃນຄານຕອງ,ແລະ ການຕິດຕັ້ງແປ້ນຕອງຫລັງເສີມເບຕົງຄານຕອງ,ຖົມຊ່ອງຫວ່າງແປ້ນຕອງ,ຄວາມຮ້ອງຂໍແຜນວາດທົ່ວຕອງໃນແປ້ນຕອງນັ້ນ,ເວລາຕິດຕັ້ງນັ້ນ,ຕ້ອງການມີລະດັບສູງເປັນເອກະພາບກັນ,ທົ່ວຕອງທຸກແຖວຕ້ອງຢູ່ເທິງເສັ້ນດຽວກັນ.ມີແຕ່ອະນຸມັດໃຫ້ພາດກັນ ±2 MM ເທົ່ານັ້ນ,ອັນນີ້ກໍໝາຍວ່າ,ມາດຕາຖານເຕັກໂນໂລຊີການກໍ່ສ້າງອ່າວສູງຂອງໂຄງການດັ່ງກ່າວນີ້.ຖ້າຫາກວ່າ,ບໍ່ສາມາດສຳເລັດໜ້າທີ່ເນື້ອໃນວຽກງານທີ່ກ່ຽວຂ້ອງຕາມການອອກແບບແຜນວາດ,ກໍບໍ່ສາມາດຜະລິດນ້ຳດື່ມທີ່ຖືກມາດຕາຖານອອກໄດ້”.ທ່ານ ໂຈວຈີຕຸງ ໄດ້ແນະນຳສະພາບການໃນເວລານັ້ນຢ່າງລະອຽດ. “ໃຈກ້າ,ເຮັດວຽກລະອຽດກໍເປັນສະພາວະຈິດໃຈຂອງກຳມະກອນກໍ່ສ້າງຂອງພວກເຮົາໃນເວລານັ້ນ”.

ຕໍ່ກັບເລື່ອງນີ້,ພາກສ່ວນຄຸ້ມຄອງໂຄງການຂອງພວກເຮົາໄດ້ວາງມາດຕາການສອງຂໍ້: ໜຶ່ງແມ່ນພາກສ່ວນໂຄງການໄດ້ເນັ້ນໜັກຄວາມສຳຄັນໃນການກໍ່ສ້າງສະຕອງນ້ຳແກ່ຜູ້ຄຸ້ມຄອງທີ່ກ່ຽວຂ້ອງໃນການກໍ່ສ້າງສະຕອງນ້ຳ ແລະ ກຳມະກອນທີ່ເຮັດວຽກຢູ່ພາກສະໜາມກ່ອນຈະເລີ່ມກໍ່ສ້າງ; ສອງແມ່ນຮ້ອງຂໍການກໍ່ສ້າງດິນ ແລະ ການຕິດຕັ້ງຈະຕ້ອງປະສານສົມທົບຢ່າງແໜ້ນໃນໄລຍະທຳການກໍ່ສ້າງ.

ທ້າຍສຸດນີ້,ພາກສ່ວນໂຄງການໝົດທຸກຄົນພະຍາຍາມຜ່ານຜ່າຄວາມຫຍຸ້ງຍາກເຊັ່ນ:ເວລາຮີບດ່ວນ,ໜ້າທີ່ໜັກໜາ,ອາກາດອົບຮ້ອນ,ແສງແດດ ແລະ ອາກາດອົບຮ້ອນ,ຈັດຕັ້ງການກໍ່ສ້າງຢ່າງລະອຽດລະອໍ,ສະຕອງນ້ຳໄດ້ສຳເລັດຄານຕອງການເສີມເບຕົງເປັນຮູບຮ່າງຂຶ້ນແລ້ວ,ການຕິດຕັ້ງຄາດຄະເນຝັ່ງໄວ້ສະລັກຕາປູຄວງເຫຼັກບໍ່ຈັບຂີ້ມ້ຽງ,ການຕິດຕັ້ງແປ້ນຕອງ ແລະ ອື່ນໆ,ໄດ້ຮັບປະກັນການອອກແບບມາດຖານສູງ,ການກໍ່ສ້າງທີ່ມີຄຸນນະພາບສູງຂອງໂຄງການ,ໄດ້ຮັບໜ່ວຍງານ ແລະ ນັກວິສະວະກຳກວດກາຝ່າຍລາວຮັບຮອງເອົາເປັນເອກະສັນກັນ.

ເພື່ອນຳເອົາຜົນປະໂຫຍດແກ່ຊີວິດການເປັນຢູ່ຂອງປະຊາຊົນ

ຕົ້ນປີ 2014,ສາຍທໍ່ສົ່ງນ້ຳໂຄງການປະກອບກັນເປັນຊຸດການກໍ່ສ້າງຂະຫຍາຍໂຮງງານນ້ຳປະປາດົງໝາກຄາຍໄລຍະ 2 ໄດ້ເລີ່ມຕົ້ນທຳການກໍ່ສ້າງ.ເພື່ອຊຸກຍູ້ການກໍ່ສ້າງສາຍທໍ່ສົ່ງນ້ຳຢ່າງສະດວກ,ພາກສ່ວນໂຄງການໂດຍຜ່ານການບຸກແຂງແກ່ນ ແລະ ໃຫ້ດີເລີດ,ພະຍາຍາມກຳຈັດ ແລະ ແກ້ໄຂຄວາມຫຍຸ້ງຍາກທີ່ປະເຊີນໜ້າໃນການກໍ່ສ້າງໂຄງການນັ້ນ,ວາງແຜນວາດ ແລະ ມາດຕາການຕົວຈິງທີ່ປະຕິບັດໄດ້.

ໂດຍຜ່ານການຈັດສົມມາດຕາການເຕັກນິກທຸກປະການ ແລະ ລັກສະນະໂຄງການຕໍ່ກັບທຸກສາຍທີ່ຕ່າງໆກຳນົດຈຸດຄວບຄຸມທີ່ສຳຄັນ,ຈັດແບ່ງຜູ້ຮັບຜິດຊອບຢ່າງຈະແຈ້ງ,ຜ່ານການແບ່ງວຽກຢ່າງລະອຽດ,ຈັດສົມຄວາມຮັບຜິດຊອບຢ່າງຈະແຈ້ງ,ດັດແກ້ວິທີການຄຸ້ມຄອງເຕັກນິກ ແລະ ໃຫ້ຄົບຖ້ວນສົມບູນຕື່ມອີກກ້າວໜຶ່ງ.ໃນຂະນະສ້າງຕັ້ງກົນໄກກວດສອບ ແລະ ໃຫ້ລາງວັນຫຼືປັບໄໝດ້ານວິຊາສະເພາະ ແລະ ການດັດສ້າງເຕັກນິກໃຫ້ສົມບູນແບບນັ້ນ,ແມ່ນພາກສ່ວນຄຸ້ມຄອງໂຄງການຂອງຂົງເຂດ ແລະ ພາກສ່ວນໂຄງການຮຽກເປີດກອງປະຊຸມປະສານງານໂຄງການສັບປະດາໜຶ່ງ 1-2 ເທື່ອ,ປະສານງານ ແລະ ແກ້ໄຂບັນຫາຕ່າງໆທີ່ຄົງຄ້າງຢູ່ໃນໄລຍະຜ່ານການປະຕິບັດໂຄງການຢ່າງທັນກັບເວລາ.

ໃນໄລຍະປະຕິບັດໂຄງການນັ້ນ,ທ່ານ ເຊີນເວີນຊານ ເລຂາພັກ,ປະທານບໍລິສັດ,ທ່ານ ຫຼີວຢົ້ງ ຮອງເລຂາພັກ,ຜູ້ອຳນວຍການໃຫຍ່ບໍລິສັດ,ທ່ານມ້າເຕີຮອງຜູ້ອຳນວຍການໃຫຍ່ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄປສຳຫຼວດຄົ້ນຄ້ວາໂຄງການນ້ຳປະປາດົງໝາກຄາຍຕັ້ງຫຼາຍເທື່ອ,ແລະ ເນັ້ນໜັກວ່າ:ຈຳຕ້ອງກໍ່ສ້າງໂຄງການດັ່ງກ່າວນີ້ເປັນໂຄງການທີ່ຍອດຢ້ຽມຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທີ່ປະຕິບັດຍຸດທະສາດ“ອອກໄປຕ່າງປະເທດ”ອີກປະການໜຶ່ງ.ສ້າງສາເປັນແບບຢ່າງສຳເລັດຜົນແບບ“ສອງດີເລີດ”,ດຳເນີນທຸລະກິດທີ່ມີລະດັບສູງ.ທ່ານ ເຊີນຮວາລິນ ຜູ້ຮັບຜິດຊອບໂຄງການສາຍທໍ່ນ້ຳທີ່ກ່ຽວຂ້ອງບອກນັກຂຽນວ່າ: ໃນການກໍ່ສ້າງທໍ່ນ້ຳທາງນອກ,ພູມມີປະເທດລຽບຕາມສາຍທໍ່ນ້ຳຂຶ້ນໆລົງໆບໍ່ຮາບພຽງ,ສະພາບແວດລ້ອມທໍລະນີສາດສັບສົນ,ເສັ້ນທາງຄັບແຄບ,ບໍ່ພຽງແຕ່ບໍ່ມີຈຸດກອງໄວ້ອຸປະກອນສາຍທໍ່ນ້ຳເທົ່ານັ້ນ,ຕໍ່ກັບການກໍ່ສ້າງມີຄວາມຫຍຸ້ງຍາກແລ້ວຫຍຸ້ງຍາກອີກ,ປູທໍ່ເຫຼັກໃຕ້ເສັ້ນທາງທີ່ແອອັດ,ຍັງຈະຕ້ອງຮັບປະກັນເສັ້ນທາງໂລ່ງຫາກັນ,ແລ່ນລົດມີຄວາມປອດໄພ.ມີສາຍທໍ່ນ້ຳຈຳນວນໜຶ່ງຈົນກະທັ້ງຕ້ອງລອດຜ່ານປ່າດົງ,ສິ່ງປຸກສ້າງ.ເຮັດໃຫ້ອຳນາດການປົກຄອງທຸກຂັ້ນ ແລະ ກົມກອງຕ່າງໆຂອງລາວປະສານສົມທົບກັນກາຍເປັນວຽກງານປະຈຳວັນທີ່ຂາດເຂີນບໍ່ໄດ້.ຕົວຢ່າງເກນເອົາທີ່ດິນ,ດຳເນີນການກໍ່ສ້າງ,ວຽກງານປະສານງານທີ່ສັບສົນ,ການກໍ່ສ້າງສາຍທໍ່ສົ່ງນ້ຳຕໍ່ພາຍນອກລ້ວນແລ້ວແຕ່ເປັນການທົບສອບຢ່າງເຕັມທີ່.ຕໍ່ເລື່ອງນີ້,ທ່ານຫວາງຢຸນຊວນຜູ້ຈັດການຂົງເຂດລາວ,ທ່ານ ຈາງກົວຊິນ ຮອງຜູ້ຈັດການຂົງເຂດເປັນຜູ້ນຳພາຈັດຕັ້ງພາກສ່ວນໂຄງການໄປຢ້ຽມຢາມພາກສ່ວນຕ່າງໆເກັບກຳຂໍ້ມູນຫຼາຍຫຼືບຫຼາຍຕ່າວ,ໃຕ້ການສະໜັບສະໜູນຈາກລັດຖະບານລາວ ແລະ ໄດ້ຮັບຄວາມເຂົ້າອົກເຂົ້າໃຈຈາກບໍລິສັດອື່ນອງທ້ອງຖິ່ນ,ຈຶ່ງຈະດຳເນີນການກໍ່ສ້າງສາຍທໍ່ນ້ຳຕາມລຳດັບ.

ນັບແຕ່ເລີ່ມຕົ້ນກໍ່ສ້າງໂຮງງານນ້ຳປະປາເປັນຕົ້ນມາ,ເພື່ອເປັນການຊຸກຍູ້ຄວາມຄືບໜ້າຂອງໂຄງການຈົນສຸດຄວາມສາມາດ,ເຈົ້າຂອງໂຄງການ,ຝ່າຍອອກແບບ,ຝ່າຍກວດກາ,ຝ່າຍກໍ່ສ້າງທຸກຝ່າຍໃນວຽກງານກໍ່ສ້າງໄດ້ເພີ່ມທະວີຄວາມເຂົ້າໃຈກັນ,ເພີ່ມທະວີມິດຕະພາບຢ່າງເລິກເຊິ່ງ,ຖືເອົາການກໍ່ສ້າງໂຮງງານນ້ຳປະປາເປັນກິດຈະກຳຮ່ວມກັນ,ຊ່ວຍເຫຼືອເຊິ່ງກັນ ແລະ ກັນ,ປະສານງານກັນ ແລະ ກັນ,ຂົງເຂດລາວຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ແລະ ພາກສ່ວນອຳນວຍການໄດ້ຜ່ານຜ່າຄວາມຫຍຸ້ງຍາກທີ່ທົນຮອນບໍ່ພຽງພໍ,ປຸກລະດົມປັດໃຈຫ້າວຫັນທັງໝົດ,ການຈັດຕັ້ງເຖິງທີ່ຕັ້ງ,ມາດຕາການເຖິງສະຖານທີ່,ເຕັກນິກແຂງແກ່ນ,ໄດ້ສະທ້ອນໃຫ້ເຫັນນ້ຳໃຈວິສາຫະກິດ“ກອງທັບເຫຼັກພູພຽງ,ໄປເຖິງທົ່ວໂລກ,ບາກບັ່ນສູ້ຊົນ”ຢ່າງເຖິງອົກເຖິງໃຈ.

图 / 新华社

# ໄປທ່ຽວພູທີ່ມີຊື່ສຽງ 4 ແຫ່ງໃນລະດູໜາວ

## 冬天去游四大名山

进入冬季，江西庐山、吉林长白山、四川西岭雪山和峨眉山便纷纷披上了雪白的外套，此时去游这四大名山，定会有一个全新的发现。

ຖ້າວ່າໄປທ່ຽວພູດອຍທີ່ມີຊື່ສຽງ 4 ແຫ່ງໃນລະດູໜາວ,ຈະໄດ້ເຫັນທິວທັດອັນໃໝ່ຢ່າງແນ່ນອນ.

ພູລູ່ສານ:ທຳມະຊາດແບບບໍ່ມີການຕົບແຕ່ງ

ພູລູ່ສານເປັນສະຖານທີ່ທີ່ດີສຳລັບການຫຼີກຄວາມອົບເອົ້າ,ແຕ່ພູລູ່ສານໃນໄລຍະລະດູໜາວກໍ່ມີຄວາມສວຍງາມອີກແບບໜຶ່ງ.ປະຊາຊົນຢູ່ເຈດພູລູ່ສານກ່າວດ້ວຍຄວາມພາກພູມໃຈວ່າ:“ມີແຕ່ພູລູ່ສານພວກເຮົາແຫ່ງດຽວ,ລະດູບານໃໝ່ດຸດດັ່ງຄວາມຝັນ,ລະດູຮ້ອນເໝືອນກັບຢອດນ້ຳ,ລະດູໃບໄມ້ຫຼົ່ນເຮັດໃຫ້ຄົນຫຼົງໄຫຼ,ລະດູໜາວເໝືອນດັ່ງຢົກບໍລິສຸດ.”ແມ່ນແທ້,ພູລູ່ສານໃນລະດູໜາວ,ດຸດດັ່ງປະດັບປະດາດ້ວຍຢົກບໍລິສຸດ,ແລະ ເຕັມໄປດ້ວຍສີຄຳຢ່າງສົດໃສ.ສຳລັບຄົນຢູ່ພາກໃຕ້ຈີນແລ້ວ,ນີ້ຈະເປັນທິວທັດທີ່ໜ້າສົນໃຈ ແລະ ຫຼົງໄຫຼທີ່ສຸດ,ຈຶ່ງຖືວ່າເປັນສະຖານທີ່ທີ່ເປັນຕາໄປທ່ຽວຊົມຫຼາຍ.


ໜອງລູຫຼິນພູລູຊານຂອງແຂວງຈ່ຽງຊີທີ່ເມກໝອກກຸ້ມກ້ອ
云雾缭绕的江西庐山芦林湖

ການຊົມທິວທັດຫິມະຢູ່ພູລູ່ສານ,ອັນທີ່ພາດບໍ່ໄດ້ແມ່ນທິວທັດຂອງພູກູລິງ,ຖະໜົນລອຍຟ້າດຸດດັ່ງຄົນຢູ່ໃນຄວາມໃຝ່ຝັນ,ຫໍໂຮງສາລາທີ່ກໍ່ດ້ວຍເສົາສີແດງ ແລະ ຫຼັງຄາສີເຫຼືອງປະສົມປະສານກັບຫິມະສີຂາວໃນຈອມພູ 99 ໜ່ວຍ.ຫິມະຕິດຢູ່ເທິງເຕັມຕົ້ນໄມ້,ຕົ້ນນ້ຳກ້ານ ແລະ “ທາດຫິມະ”,ມີຄວາມງາມເໝືອນດັ່ງຢູ່ໃນແດນສະຫວັນ;ໄປຊອກບໍ່ນ້ຳອຸ່ນຢູ່ເມືອງຊິ່ງຈື,ຊົມວິວພູຫິມະ,ອາບນ້ຳໃນບໍ່ນ້ຳອຸ່ນ,ຈຶ່ງແມ່ນມີຄວາມສະບາຍໃຈຫຼາຍ.

ສາຍພູສາງໄບ: ດິນກັບຟ້າອັນກວ້າງຂວາງທີ່ເປັນສີຂາວ

ການຊົມວິວຫິມະໃນລະດູໜາວ,ສາຍພູສາງໄບກໍ່ເປັນບ່ອນໜຶ່ງທີ່ເປັນຕາໄປທ່ຽວຊົມແທ້.ເມື່ອຮອດລະດູໜາວ,ຫິມະກໍ່ຈະປະດັບປະດາສາຍພູສາງໄບໃຫ້ເປັນສີຂາວແບບບໍລິສຸດຜຸດຜ່ອງ,ນ້ຳຕົກຕາດກາຍເປັນນ້ຳກ້ານຢ່າງໂປ່ງໃສ,ຢູ່ເທິງຕົ້ນໄມ້ກໍ່ເຕັມໄປດ້ວຍຫິມະ,ມີຄວາມງາມທີ່ໜ້າສະເທືອນໃຈ ແລະ ມີລັກສະນະໂຣແມນຕິກ.ໄປທ່ຽວສາຍພູສາງໄບໃນຍາມນີ້,ບໍ່ພຽງແຕ່ສາມາດຫຼິ້ນສະເກັດຢ່າງມ່ວນຊື່ນ,ຍັງສາມາດຊົມໜອງທຽນຊືທີ່ເປັນນ້ຳກ້ານຢ່າງສະຫງ່າຜ່າເຜີຍ ແລະ ຮ່ອມພູສາງໄບທີ່ມີສີສັນຢ່າງຫຼາກຫຼາຍພາຍໃຕ້ການປະດັບປະດາຂອງຫິມະ.

ຈາກຫິມະຕົກເປັນຄັ້ງທຳອິດໃນທ້າຍເດືອນກັນຍາຢູ່ຈອມພູຮອດຫິມະເສດເຫຼືອລະລາຍໄປໝົດໃນກາງເດືອນມິຖຸນາໃນປີຕໍ່ມາ,ໃນນັ້ນຈາກເດືອນພະຈິກຮອດເດືອນມີນາຂອງປີຕໍ່ມາ,ລ້ວນແຕ່ເປັນໄລຍະທີ່ດີທີ່ສຸດສຳລັບການຊົມວິວຫິມະ ແລະ ຫຼິ້ນສະເກັດຢູ່ສາຍພູສາງໄບ.


ພູເອີເໝີຍທີ່ມີຫິມະນ້ຳກ້ານປົກຄຸມ
冰雪峨眉山

ພູຫິມະຊີ່ລິງ:ເຄີຍໄດ້ຮັບການຍ້ອງຍໍໃນບົດກະວີຂອງທ່ານ ດູ້ຝູ ທີ່ເປັນນັກກະວີທີ່ມີຊື່ສຽງໃນສະໄໝບູຮານຈີນ

ພູຫິມະຊີ່ລິງມີທິວທັດຫິມະທີ່ສວຍງາມໃນລະດູໜາວ,ມີປ່າໄມ້ດຶກດຳບັນ,ຜາຊັນ,ດອກຫຍ້າທີ່ອັດສະຈັນ,ນົກ ແລະ ສັດທີ່ລ້ຳຄ່າ,ນ້ຳຕົກຕາດທີ່ຫຼັ່ງໄຫຼແຮງສົມຄວນ,ທະເລຂີ້ເຝື້ອ,ຕາເວັນອອກ,ແສງລັດສະໝີທີ່ອັດສະຈັນໃນປ່າໄມ້,ແສງຕາເວັນສ່ອງແສງໃສ່ພູຄຳ,ແລະ ທິວທັດທີ່ອັດສະຈັນອື່ນໆ.ຢູ່ແຫຼ່ງທ່ອງທ່ຽວດັ່ງກ່າວຍັງມີສະໜາມສະເກັດຂະໜາດໃຫຍ່ຢູ່ເຂດພູດອຍ,ສວນສະໜຸກເທິງຫິມະຂະໜາດໃຫຍ່,ແລະ ສະໜາມໄຕ່ຫຍ້າຂະໜາດໃຫຍ່,ສວນສະໜຸກກິລາທົ່ງຫຍ້າເຂດພູດອຍ.

ພູເອີເມີຍ:ທິວທັດສາມຊັ້ນໃນຕົ້ນລະດູໜາວ

ຕາເວັນອອກ,ທະເລຂີ້ເຝື້ອ,ແສງລັດສະໝີພະເຈົ້າ,ແສງທອງຄ້ອຍຄ່ຳເປັນທິວທັດອັດສະຈັນ 4 ຢ່າງຂອງພູເອີເມີຍ,ອັນໄດ້ດຶງດູດນັກທ່ອງທ່ຽວຢ່າງຫຼວງຫຼາຍ.ໃນເດືອນພະຈິກທຸກປີ,ພູເອີເມີຍກໍ່ຈະປ່ຽນທິວທັດໃໝ່ໃນຕົ້ນລະດູໜາວສຳລັບນັກທ່ອງທ່ຽວ.ຢູ່ເທິງຈອມພູເອີເມີຍໃນໄລຍະທີ່ອາກາດປອດໂປ່ງ,ຈະເປັນສະຖານອັນດີທີ່ສຸດສຳລັບການເບິ່ງຊົມທິວທັດອັດສະຈັນ 4 ຢ່າງໃນລະດູໜາວ.

ພູເອີເມີຍໃນຕົ້ນລະດູໜາວມີທິວທັດ 3 ຊັ້ນ: ຢູ່ຕາມສັນພູ,ສີສັນຂອງໃບໄມ້ໄດ້ປ່ຽນຈາກສີຂຽວເປັນສີແດງ;ສູງກວ່າໜ້ານ້ຳທະເລ 2000 ແມັດຂຶ້ນໄປ,ຈະເປັນໂລກທີ່ເຕັມໄປດ້ວຍສີເງິນ,ເໝືອນດັ່ງແດນສະຫວັນ;ເມື່ອຂຶ້ນສູ່ຈອມພູຈິ່ນຕິງທີ່ຢູ່ລະດັບສູງກວ່າໜ້ານ້ຳທະເລ 3077 ແມັດແລ້ວ,ກໍ່ຢູ່ທ່າມກາງທະເລຂີ້ເຝື້ອ.ຢູ່ເທິງຈອມພູຈິ່ນຕິງ,ຮູບປັ້ນພະໂພທິສັດທີ່ສູງທີ່ສຸດໃນໂລກປະສົມປະສານກັບທິວທັດທີ່ອັດສະຈັນຂອງພູເອີເມີຍ,ໄດ້ປະກອບເປັນໂລກສີເງິນທີ່ມີຄວາມສັກສິດ ແລະ ສະຫງົບຜາສຸກ.

图 /CFP

# 24 ລະດູການ: ສຸລິຍະຄະຕິໃນຫນັງສືປະຕິທິນໃຊ້ດ້ານການກະເສດ

二十四节气：农历中的“阳历”

二十四节气是中国农历中特有的一种划分法，是不折不扣的“中华遗产”。

24 ລະດູການແມ່ນວິທີຂີດແບ່ງເວລາແບບພິເສດໃນໜັງສືປະຕິທິນໃຊ້ດ້ານການກະເສດຈີນ,ເປັນມໍລະດົກວັດທະນະທຳຂອງຈີນ.

ໜັງສືປະຕິທິນໃຊ້ດ້ານການກະເສດແມ່ນເຄົ້າມາຈາກການສັງເກດທຳມະຊາດຂອງປະຊາຊົນ.ສຸລິຍະຄະຕິກຳນົດເວລາທີ່ໜ່ວຍໂລກໝູນອ້ອມດວງຕາເວັນຮອບໜຶ່ງ (ເອີ້ນວ່າ“ປີໝູນຮອບ”,ເປັນເວລາປະມານ 365 ແລະ ອີກ 1 ສ່ວນ 4 ມື້)ເປັນປີໜຶ່ງ.ແຕ່ໜັງສືປະຕິທິນໃຊ້ດ້ານການກະເສດຂອງຈີນຫາກບໍ່ແມ່ນແນວນີ້,ໃນພື້ນເມືອງມັກເອີ້ນເປັນ“ຈັນທະຄະຕິ”.ຄວາມຈິງແລ້ວ,ໜັງສືປະຕິທິນໃຊ້ດ້ານການກະເສດຂອງຈີນແມ່ນປະຕິບັດຕາມວິທີຂີດແບ່ງເວລາຕາມຈັນທະຄະຕິ(ສ່ອງແສງເຖິງການປ່ຽນແປງຂອງດວງຈັນ),ແຕ່ໜັງສືປະຕິທິນໃຊ້ດ້ານການກະເສດຈີນຫາກບໍ່ແມ່ນ“ຈັນທະຄະຕິ”ແທ້ໆ.ຈັນທະຄະຕິແທ້ໆ,ຕົວຢ່າງວ່າ,ໜັງສືປະຕິທິນໃຊ້ດ້ານການກະເສດຈີນຂອງສາສະໜາອິສລາມ,ຖື 12 ເດືອນຕາມຈັນທະຄະຕິເປັນປີໜຶ່ງ,ໃນແຕ່ລະເດືອນສະເລ່ຍແລ້ວມີເວລາ 29,5 ມື້,12 ເດືອນມີປະມານ 355 ມື້,ເຊິ່ງໜ້ອຍກວ່າປີໜຶ່ງຕາມສຸລິຍະຄະຕິປະມານ 10 ມື້.ຖ້າວ່າຢູ່ຈີນກໍ່ຄິດໄລ່ຕາມວິທີແບບນີ້,ບຸນກຸດຈີນໃນທຸກປີກໍ່ຈະວຽນມາເຖິງໄວກວ່າປີຜ່ານມາ 10-11 ມື້,ດັ່ງນັ້ນ,16 ປີຜ່ານໄປ,ຊາວຈີນກໍ່ຈະຫຼິ້ນບຸນກຸດຈີນໃນລະດູຮ້ອນແລ້ວ.

ເພື່ອຫຼີກເວັ້ນກໍລະນີແບບນີ້,ໃນໜັງສືປະຕິທິນໃຊ້ດ້ານການກະເສດຈີນ,ທຸກ 3 ປີກໍ່ຈະເພີ່ມເດືອນອະທິກະມາດເດືອນໜຶ່ງ,ເພື່ອຮັກສາຄວາມເປັນເອກະພາບກັນກັບເວລາປີໜຶ່ງຕາມສຸລິຍະຄະຕິ.ກໍ່ແມ່ນຍ້ອນວ່າໄດ້ເພີ່ມເດືອນອະທິກະມາດເລື້ອຍໆ,ສະນັ້ນໜັງສືປະຕິທິນໃຊ້ດ້ານການກະເສດຂອງຈີນຈຶ່ງມີການນຳໃຊ້ຈັນທະຄະຕິ ແລະ ສຸລິຍະຄະຕິທັງສອງ-ຄິດໄລ່ຕາມຈັນທະຄະຕິ,ພ້ອມທັງເພີ່ມເດືອນອະທິກະມາດເພື່ອຮັບປະກັນໄລຍະຍາວສະເລ່ຍຂອງປີໜຶ່ງເທົ່າກັບປີໜຶ່ງຕາມສຸລິຍະຄະຕິ.

ຖ້າວ່າຄິດໄລ່ຢ່າງລະອຽດແລ້ວຈະສັງເກດເຫັນເຖິງກໍລະນີພິເສດໃນຈັນທະຄະຕິຈີນ,ຄື:ໄລຍະຍາວປົກກະຕິຈະສັ້ນກວ່າປີໜຶ່ງໃນສຸລິຍະຄະຕິ,ມີປະມານ 355 ມື້,ແຕ່ປີໜຶ່ງທີ່ມີເດືອນອະທິກະມາດນັ້ນຫາກມີ 13 ເດືອນ,ປີໜຶ່ງກໍ່ຈະເພີ່ມຂຶ້ນເປັນ 384 ມື້.ແຕ່ວ່າ,ປີໝູນວຽນທີ່ສ່ອງແສງເຖິງ 4 ລະດູນັ້ນຈະບໍ່ຫ່ອນມີການປ່ຽນແປງຄືແນວນີ້,ການປ່ຽນແປງຂອງສີ່ລະດູໃນທຳມະຊາດແມ່ນມີໄລຍະຮອບໝູນວຽນຕາມ 365 ແລະ ອີກ 1 ສ່ວນ 4 ມື້,ສະນັ້ນໝາຍເລກເດືອນຕາມຈັນທະຄະຕິຈີນຈະບໍ່ສາມາດປ່ຽນແປງຕາມ 4 ລະດູໄດ້ໃນທຸກປີ.ຕົວຢ່າງວ່າ,ຢູ່ບໍລິເວນປັກກິ່ງ,ແມ່ນຫວ່ານແກ່ນປູກເຂົ້າເປູໃນເດືອນ 10 ຕາມຈັນທະຄະຕິຈີນໃນທຸກປີ,ສົມມຸດວ່າປີກາຍແມ່ນຢູ່ຕົ້ນເດືອນ 10,ປີນີ້ກໍ່ແມ່ນກາງເດືອນ 10 ຈຶ່ງເໝາະສົມ,ຮອດປີໜ້າກໍ່ຕ້ອງເລື່ອນເວລາຮອດທ້າຍເດືອນ 10,ໃນປີຕໍ່ໄປອີກກໍ່ຈະເພີ່ມເດືອນອະທິກະມາດ,ສະນັ້ນກໍ່ກັບຄືນສູ່ຕົ້ນເດືອນ 10 ອີກ.

ຄວາມຈິງແລ້ວ,ໜັງສືປະຕິທິນໃຊ້ດ້ານການກະເສດແບບນີ້ມັນບໍ່ສະດວກຕໍ່ການຊີ້ນຳການເຄື່ອນໄຫວກະສິກຳ,ຈຳເປັນມີວິທີຂີດແບ່ງເວລາທີ່ສ່ອງແສງລະດູການຕາມສຸລິຍະຄະຕິອັນທີ່ໄປຄູ່ກັບຈັນທະຄະຕິ,ເຮັດໃຫ້ລະດູ,ດິນຟ້າອາກາດ,ວຽກໄຮ່ການນາມີສາຍສຳພັນທີ່ໝັ້ນຄົງກັບວິທີຂີດແບ່ງເວລາແບບນີ້,ໜັງສືປະຕິທິນໃຊ້ດ້ານການກະເສດຈຶ່ງຈະມີປະສິດທິຜົນອັນແທ້ຈິງ,ດັ່ງນັ້ນ,24 ລະດູການຈຶ່ງໄດ້ກຳເນີດເກີດຂຶ້ນ.

ສຸລິຍະຄະຕິສ່ອງແສງເຖິງການໝູນວຽນຂອງດວງຕາເວັນໃນກາງຫາວ(ຄວາມຈິງແລ້ວແມ່ນໜ່ວຍໂລກໝູນອ້ອມດວງຕາເວັນ,ແຕ່ພວກເຮົາສັງເກດຈາກໜ່ວຍໂລກຈະເຫັນວ່າແມ່ນດວງຕາເວັນໝູນອ້ອມໜ່ວຍໂລກຮອບໜຶ່ງໃນກາງຫາວ).ເມື່ອດວງຕາເວັນໄປຮອດພາກໃຕ້ທີ່ສຸດ,ເວລາກາງເວັນສັ້ນທີ່ສຸດ,ເວລາຄ່ຳຄືນຍາວທີ່ສຸດ,ໃນຕອນທ່ຽງກໍ່ຈະເຫັນດວງຕາເວັນເປັນມູມຕ່ຳທີ່ສຸດ,ເຊິ່ງມື້ນັ້ນກໍ່ເອີ້ນວ່າ “ຕົ່ງຈີ້”;ເມື່ອດວງຕາເວັນໄປຮອດພາກເໜືອທີ່ສຸດ,ເວລາກາງເວັນຍາວທີ່ສຸດ,ເວລາຄ່ຳຄືນສັ້ນທີ່ສຸດ,ໃນຕອນທ່ຽງກໍ່ຈະເຫັນດວງຕາເວັນເປັນມູມສູງທີ່ສຸດ,ມື້ນັ້ນເອີ້ນວ່າ“ເຊ້ຍຈີ້”;ສຳລັບ“ຊຸ່ນເຟິ່ນ”ແລະ “ຊິວເຟິ່ນ”,ດວງຕາເວັນພໍດີຜ່ານເສັ້ນສູນສູດ,ເວລາກາງເວັນກັບຄ່ຳຄືນເທົ່າທຽມກັນ.ໃນຂະບວນການປ່ຽນແປງຂອງ 4 ລະດູນັ້ນ,“ຊຸ່ນເຟິ່ນ”“ເຊ້ຍຈີ້”“ຊິວເຟິ່ນ” ແລະ “ຕົ່ງຈີ້” ກໍ່ເປັນ 4 ຈຸດທີ່ເໝາະສົມທີ່ສຸດໃຫ້ແກ່ການຂີດແບ່ງ 4 ລະດູ,ແຕ່ມີແຕ່ 4 ຈຸດນີ້ຍັງບໍ່ພໍ,ໃນວຽກໄຮ່ການນາ,ຕົວຢ່າງວ່າ,ການຫວ່ານແກ່ນ,ການດຳກ້າ,ການໄຖນາ,ການເກັບກ່ຽວ ແລະ ອື່ນໆຕ້ອງການກຳນົດໃນໄລຍະເວລາທີ່ລະອຽດແມ່ນຢຳໃນທຸກໆປີ,ບໍ່ໃຫ້ຜິດໂຕນກັນເປັນເວລາ 10 ວັນເຖິງເຄິ່ງເດືອນ,ສະນັ້ນ,ນອກຈາກ 4 ລະດູການດັ່ງກ່າວແລ້ວ,ຍັງຕ້ອງແບ່ງລະອຽດຕື່ມອີກ,ສະນັ້ນ,ໃນແຕ່ລະລະດູກໍ່ແບ່ງອອກເປັນ 6 ພາກສ່ວນໂດຍສະເລ່ຍ,ໃນທົ່ວປີແບ່ງອອກເປັນ 24 ລະດູການ,ໃນແຕ່ລະລະດູການມີເວລາປະມານ 15 ມື້,ການຂີດແບ່ງຄືແນວນີ້ມີຄວາມເໝາະສົມສຳລັບການນຳໃຊ້,ແລະ ໄດ້ສືບທອດມາທຸກເຊັ່ນຄົນ.


ຊຸນເຟີນ "ຕັ້ງໄຂ່" (ໝາຍເຖິງລະດູບານໃໝ່ມາເຖິງຢ່າງເປັນທາງການ)
春分“立蛋”

ຊື່ຂອງ 24 ລະດູການທີ່ຄົບຖ້ວນແມ່ນມີການບັນທຶກກ່ອນໝູ່ໃນປຶ້ມ“ຮວຍນານຈື່ທ່ຽນເວີນຊຸ້ນ”ໃນລາຊະວົງຮັ່ນຂອງຈີນ,ຄື:ລີ້ຊຸ່ນ,ອີສຸຍ,ຈິ່ງເຈີ,ຊຸ່ນເຟິ່ນ,ຊິ່ງມິງ,ກູອີ,ລີ້ເຊ້ຍ,ສ້ຽວມານ,ມາງຈົ່ງ,ເຊ້ຍຈີ້,ສ້ຽວຊູ,ຕ້າຊູ,ລີ້ຊິວ,ຈູ້ຊູ,ໄປລູ້,ຊິວເຟິ່ນ,ຫານລູ້,ຊ່ວງຈ້ຽງ,ລີ້ຕົ່ງ,ສ້ຽວເຊ,ຕ້າເຊ,ຕົ່ງຈີ້,ສ້ຽວຫານ,ຕ້າຫານ.

ດັ່ງນັ້ນ,ພວກເຮົາຈະເຫັນໄດ້ວ່າ,24 ລະດູການບໍ່ມີສ່ວນກ່ຽວພັນຫຍັງກັບຈັນທະຄະຕິ,ແມ່ນເປັນລະບົບຂອງຕົນ,ຂຶ້ນກັບພາກສ່ວນສຸລິຍະຄະຕິໃນໜັງສືປະຕິທິນໃຊ້ດ້ານການກະເສດອັນເປັນມູນເຊື້ອຂອງຈີນ.ປະຊາຊົນພື້ນເມືອງມັກຖື 24 ລະດູການຂຶ້ນກັບຈັນທະຄະຕິຈີນ,ແມ່ນຍ້ອນວ່າໄດ້ຫຼົງຜິດວ່າ,ຈັນທະຄະຕິກວມສ່ວນຫຼາຍໃນໜັງສືປະຕິທິນໃຊ້ດ້ານການກະເສດ(ກາລະວິທະຍາ)ຂອງຈີນ.

ຫຼັງຈາກການປະຕິຮູບຊິ່ງໄຮ້ໂຄ່ນລົ້ມລະບອບລາຊາສັກດີນາແລ້ວ,ໜັງສືປະຕິທິນໃຊ້ດ້ານການກະເສດໄດ້ປ່ຽນມາເປັນປະຕິທິນສາກົນ,ເຊິ່ງເປັນສຸລິຍະຄະຕິ,ຕັ້ງແຕ່ນັ້ນມາ,24 ລະດູການຈຶ່ງໄດ້ຜູກສາຍສຳພັນຢ່າງໃກ້ຊິດກັບວັນເວລາຕາມປະຕິທິນສາກົນ.

文/楚然

# ມະຫາວິທະຍາໄລເສິ່ນເຈິ້ນ

## 深圳大学

深圳大学创办于 1983 年。建校 32 年来，深圳大学紧随特区，锐意改革、快速发展，形成了从学士、硕士到博士的完整人才培养体系以及多层次的科学研究和社会服务体系，已经成为一所学科齐全、设施完善、师资优良、管理规范的综合性大学。

ມະຫາວິທະຍາໄລເສິ່ນເຈິ້ນສ້າງຕັ້ງຂຶ້ນໃນປີ 1983. ນັບແຕ່ການສ້າງຕັ້ງຂຶ້ນເປັນເວລາ 32 ປີມານີ້,ມະຫາວິທະຍາໄລເສິ່ນເຈິ້ນໄດ້ພັດທະນາຄຽງຄູ່ກັບເຂດພິເສດເສິ່ນເຈິ້ນ,ປະຕິຮູບຢ່າງກ້າຫານ,ໄດ້ມີລະບົບອົບຮົມນັກວິຊາການຢ່າງຄົບຖ້ວນເຊິ່ງລວມທັງປະລິນຍາຕີ,ປະລິນຍາໂທ ແລະ ປະລິນຍາເອກ,ພ້ອມດ້ວຍລະບົບບໍລິການສັງຄົມ ແລະ ຄົ້ນຄວ້າວິທະຍາສາດທີ່ມີຫຼາຍລະດັບ,ໄດ້ກາຍເປັນມະຫາວິທະຍາໄລແບບສັງລວມທີ່ມີຫຼັກສູດວິຊາຢ່າງຄົບຖ້ວນ,ມີສິ່ງກໍ່ສ້າງຢ່າງຄົບຊຸດ,ແລະ ຖັນແຖວອາຈານສອນທີ່ດີເດັ່ນ,ແລະ ມີການຄຸ້ມຄອງບໍລິຫານທີ່ເປັນລະບຽບຮຽບຮ້ອຍ.

ປະຈຸບັນ,ມະຫາວິທະຍາໄລເສິ່ນເຈິ້ນມີສອງເຂດໂຮງຮຽນ,ຄື,ເຂດໂຮ້ວໄຫ ແລະ ເຂດຊີລີ່. ໂຮງຮຽນມີຫຼັກສູດວິຊາຢ່າງຄົບຖ້ວນ ແລະ ມີລັກສະນະສັງລວມຢ່າງເຂັ້ມແຂງ,ໄດ້ກວມລວມ 11 ປະເພດວິຊາ,ເຊັ່ນ,ປັດຊະຍາ,ວັນນະຄະດີ,ເສດຖະສາດ,ນິຕິສາດ,ສຶກສາສາດ,ວິທະຍາສາດ,ການຊ່າງ,ການບໍລິຫານ,ການແພດ,ປະຫວັດສາດ,ແລະ ສິລະປະກໍາ. ໂຮງຮຽນມີ 28 ວິທະຍາໄລ,ແລະ 84 ວິຊາໃນລະດັບປະລິນຍາຕີ.

ມະຫາວິທະຍາໄລເສິ່ນເຈິ້ນມີກໍາລັງດ້ານຖັນແຖວອາຈານສອນຢ່າງເຂັ້ມແຂງ.ນັບມາຮອດວັນທີ 30 ກັນຍາ ປີ 2015,ພະນັກງານການສອນໃນທົ່ວໂຮງຮຽນມີຈໍານວນ 3380 ຄົນ,ອາຈານອາຊີບສະເພາະມີ 1937 ຄົນ,ພະນັກງານວິຊາການ 870 ຄົນ(ເໜືອປະລິນຍາເອກ 302 ຄົນ),ພະນັກງານບໍລິຫານ 573 ຄົນ.

ໂຮງຮຽນໄດ້ຕັ້ງໜ້າເປີດກວ້າງການແລກປ່ຽນ ແລະ ການຮ່ວມມືກັບສາກົນ,ໄດ້ສ້າງສາຍພົວພັນແລກປ່ຽນ ແລະ ຮ່ວມມືກັບໂຮງຮຽນຊັ້ນສູງ 156 ແຫ່ງຂອງຕ່າງປະເທດ.ໃນໂຮງຮຽນມີຊັບພະຍາກອນການສຶກສາຢ່າງອຸດົມສົມບູນ,ມີສິ່ງກໍ່ສ້າງ ແລະ ອຸປະກອນການຄົ້ນຄວ້າວິທະຍາສາດຢ່າງຄົບຊຸດ. ໂຮງຮຽນໄດ້ລົງເລິກການປະຕິຮູບລະບຽບການຄົ້ນຄວ້າວິທະຍາສາດຢ່າງບໍ່ຢຸດຢັ້ງ, ໂຄງການຄົ້ນຄວ້າ ແລະ ງົບປະມານຄົ້ນຄວ້າວິທະຍາສາດມີການເຕີບໂຕຢ່າງພົ້ນເດັ່ນ.

ມະຫາວິທະຍາໄລເສິ່ນເຈິ້ນຈະສືບຕໍ່ຕັ້ງຈຸດຢືນຢູ່ນະຄອນເສິ່ນເຈິ້ນ,ອາໄສການພັດທະນາເສດຖະກິດສັງຄົມຂອງຮົງກົງ,ມາກາວ ແລະ ເຂດສາມຫຼ່ຽມແມ່ນ້ຳຈູ່ຈ່ຽງ,ມຸ່ງໜ້າສູ່ສາກົນ,ປະຕິບັດຕາມນ້ຳໃຈການປະຕິຮູບ ແລະ ປະດິດສ້າງໃໝ່,ອົບຮົມຜູ້ມີຄວາມຮູ້ຄວາມສາມາດທີ່ມີຄຸນນະພາບສູງ,ເປັນຜູ້ນໍາໜ້າໃຫ້ແກ່ຄວາມກ້າວໜ້າ ແລະ ການພັດທະນາຂອງສັງຄົມ,ຂັບລຸການພັດທະນາທີ່ກົມກຽວ,ການພັດທະນາທີ່ມີສີສັນພິເສດ,ການພັດທະນາແບບເປີດກວ້າງ,ການພັດທະນາແບບກ້າວກະໂດດ,ເລັ່ງລັດພັດທະນາເປັນມະຫາວິທະຍາໄລທີ່ມີລະດັບສູງ,ມີສີສັນພິເສດ ແລະ ມີຄວາມທັນສະໄໝ.





文/楚然 图/新华社

# "ບຸນຊາມາ"ຂອງເຜົ່າຕົງ

### 侗族“萨玛节”

侗族萨玛节，是侗族人民对女性祖先的祭祀活动，是祖先崇拜的一种形式。作为中国非物质文化遗产名录的“萨玛节”，保留着很浓郁的母系氏族社会遗风。

ບຸນຊາມາຂອງເຜົ່າຕົງ,ແມ່ນກິດຈະກຳບູຊາບັນພະບຸລຸດເພດຍິງຂອງປະຊາຊົນເຜົ່າຕົງ,ເປັນຮູບການໜຶ່ງໃນການກາບໄຫວ້ບູຊາບັນພະບຸລຸດ.ບຸນຊາມາຢູ່ໃນບັນຊີລາຍຊື່ມໍລະດົກວັດທະນະທຳທີ່ບໍ່ແມ່ນດ້ານວັດຖຸຂອງຈີນ,ອັນທີ່ຮັກສາລັກສະນະອັນເຂັ້ມຂຸ້ນຂອງສັງຄົມລະບອບມານດາທິລາດ.ໃນໄລຍະວັນບຸນ,ແມ່ຍິງທັງຫຼາຍຂອງເຜົ່າຕົງຈະພັກວຽກ,ເພື່ອເຂົ້າຮ່ວມການກາບໄຫວ້ບູຊາ ແລະ ກິດຈະກຳມ່ວນຊື່ນ.ວຽກບ້ານການເຮືອນທັງໝົດຈະໃຫ້ຜູ້ຊາຍເຮັດ,ສະນັ້ນ,ບຸນຊາມາກໍ່ຖືກເອີ້ນວ່າ "ງານສະໜຸກຂອງເພດຍິງ" ແລະ"ວັນແມ່ຍິງດຶກດຳບັນ".

ບຸນຊາມາເຜົ່າຕົງເຜີຍແຜ່ຢູ່ເຂດຊຸມນຸມຂອງເຜົ່າຕົງຢູ່ເມືອງລີຜິງ,ເມືອງຣົງຈ່ຽງ,ເມືອງຊົງຈ່ຽງພ້ອມບໍລິເວນອ້ອມຂ້າງໃນແຂວງກຸ້ຍ ໂຈ່ວ,ຕົ້ນຕໍແມ່ນຖືບຸນຊາມາຂອງເຜົ່າຕົງຢູ່ເຊີ່ຈ່ຽງເມືອງຣົງຈ່ຽງເປັນຕົວແທນ.ຕາມເລົ່າລືກັນວ່າ,ໃນປະຫວັດສາດຂອງເຜົ່າຕົງຢູ່ກົ່ງແຂວງຊຽນຕົ່ງນານ,ເຄີຍມີວິລະສະຕີຄົນໜຶ່ງຊື່ "ຊົ້ງນີ",ປະຊາຊົນນັບຖືເພິ່ນ ແລະ ເອີ້ນວ່າ "ຊາມາ". "ຊາມາ"ແມ່ນເອີ້ນຕາມສຽງພາສາເຜົ່າຕົງ,"ຊາ"ແປວ່າແມ່ຍ່າ,"ມາ"ແປວ່າໃຫຍ່,"ຊາມາ"ກໍແປວ່າ "ແມ່ຍ່າໃຫຍ່",ເປັນຕົວແທນໃຫ້ແກ່ວິນຍານຂອງບັນພະບຸລຸດລວມຂອງທົ່ວເຜົ່າຕົງ.ປະຊາຊົນເຜົ່າຕົງຖືວ່າ,ບັນພະບຸລຸດມີຄວາມສັກສິດອັນໃຫຍ່ຫຼວງ,ມີຖານະທີ່ສູງສົ່ງ,ບໍ່ພຽງແຕ່ຈະມອບກຳລັງແຮງໃຫ້ແກ່ປະຊາຊົນເພື່ອເອົາຊະນະສັດຕູ,ທຳມະຊາດ ແລະ ໄພພິບັດເທົ່ານັ້ນ,ຍັງສາມາດເຮັດໃຫ້ບ້ານເມືອງມີຄວາມຜາສຸກ,ການປູກຝັງໄດ້ຮັບຜົນເກັບກ່ຽວຢ່າງອຸດົມສົມບູນ,ມະນຸດ ແລະ ສັດລ້ຽງມີຄວາມຈະເລີນ,ສະນັ້ນ,ຈຶ່ງມີຄວາມສັດທາໃນການກາບໄຫວ້ບູຊາ,ຖືເປັນເທວະດາປົກປ້ອງເຜົ່າຕົງ.ພ້ອມກັນນັ້ນ,ຊາມາກໍ່ເປັນວິລະສະຕີ (ວິລະຊົນເພດຍິງ)ໃນສະໄໝບູຮານຕາມເລື່ອງເລົ່າລືຂອງເຜົ່າຕົງ,ມີຖານະອັນສຳຄັນໃນດ້ານການເມືອງ,ການທະຫານ,ວັດທະນະທຳ ແລະ ດ້ານອື່ນໆໃນສັງຄົມບູຮານຂອງເຜົ່າຕົງ.ຢູ່ໃກ້ກັບຫໍກອງທີ່ຢູ່ໃຈກາງຂອງກຸ່ມບ້ານເຜົ່າຕົງທຸກແຫ່ງ,ລ້ວນແຕ່ມີເຮືອນຫຼັງໜຶ່ງທີ່ບໍ່ມີຫຼັງຄາ,ນີ້ກໍ່ເປັນຫໍໄຫວ້ຊາມາ,ໃນພາສາເຜົ່າຕົງເອີ້ນວ່າ "ຖາງຊາ".ໃນຂະນະທີ່ເກີດເຫດການສຳຄັນ,ເຊັ່ນ,ສົງຄາມ,ລ່າເນື້ອ,ບຸກພູຜາ,ປູທາງ,ປຸກເຮືອນ,ເກີດລູກ ແລະ ເດີນທາງຫາເງິນ,ແລະ ອື່ນໆ,ປະຊາຊົນເຜົ່າຕົງລ້ວນແຕ່ຈະໄປກາບໄຫວ້ບູຊາທີ່ຫໍໄຫວ້ຊາມາ,ອະທິຖານຂໍການປົກປ້ອງຈາກຊາມາ.ຖ້າວ່າເກີດມີກໍລະນີທີ່ຄອບຄົວບໍ່ປອງດອງກັນ,ມີຄວາມຂັດແຍ່ງລະຫວ່າງໝູ່ບ້ານໃກ້ຄຽງ,ການລະເມີດລະບຽບການໃນບ້ານ ແລະ ອື່ນໆ,ກໍຈະໄປສາບານຕົວຢູ່ຫໍໄຫວ້ຊາມາ,ໃຫ້ຊາມາເປັນຜູ້ຕັດສິນ; ຖ້າວ່າລູກເປັນພະຍາດ,ຫຼືເກີດອຸບັດຕິເຫດ,ຢູ່ໃນບ້ານເກີດໄຟໄໝ້,ຫຼື ໄພທຳມະຊາດທີ່ຫຼີກເວັ້ນບໍ່ໄດ້ນັ້ນ,ກໍ່ຈະໄປຂໍຄວາມຊ່ວຍເຫຼືອນຳຫໍໄຫວ້ຊາມາ,ເພື່ອອະທິຖານໃຫ້ມີຄວາມປອດໄພ.

ເດືອນຈຽງ ແລະ ເດືອນ 2 ຕາມຈັນທະຄະຕິຈີນໃນທຸກປີ,ກຸ່ມບ້ານເຜົ່າຕົງຈະເລືອກມື້ງາມຍາມດີ,ໃຫ້ໜໍພອນຈັດພິທີບູຊາຢ່າງໃຫຍ່ ໂຕມະ ໂຫລານ,ເຊິ່ງເປັນສະພາບເຫດການທີ່ສະຫງ່າຜ່າເຜີຍ,ບາງເທື່ອກຸ່ມບ້ານຕ່າງໆຈະຈັດພິທີດ້ວຍຕົນເອງ,ບາງເທື່ອກຸ່ມບ້ານຈຳນວນໜຶ່ງທີ່ຢູ່ໃກ້ຄຽງຈະຮ່ວມກັນຈັດພິທີບູຊາ.ຫຼັງຈາກສືບທອດກັນມາຕາມທຸກເຊັ່ນຄົນ,ຈຶ່ງໄດ້ກາຍເປັນບຸນຊາມາໃນປະຈຸບັນ.ພິທີບູຊາຊາມາຂອງເຜົ່າຕົງຢູ່ກົ່ງແຂວງຊຽນຕົ່ງນານຂອງແຂວງກຸ້ຍ ໂຈ່ວ,ປົກກະຕິແມ່ນຈັດຂຶ້ນໃນລະດູໃບໄມ້ຫຼົ່ນ.ບຸນຊາມາເປັນບຸນປະເພນີອັນສຳຄັນທີ່ປະຊາຊົນເຜົ່າຕົງອວຍພອນໃຫ້ບ້ານມີຄວາມປອດໄພ ແລະ ຈະເລີນຮຸ່ງເຮືອງ, ປະຊາຊົນມີຄວາມຜາສຸກ ແລະ ສີລິມຸງຄຸນ.

ວັດທະນະທຳ"ຊາມາ"ຂອງເຜົ່າຕົງມີປະຫວັດສາດມາເປັນເວລາດົນນານແລ້ວ,ມີເນື້ອໃນອັນອຸດົມສົມບູນ,ມີບົດບາດອັນເລິກເຊິ່ງຕໍ່ຊີວິດປະຈຳວັນໃນສັງຄົມເຜົ່າຕົງ.ບຸນຊາມາມີຜົນສະທ້ອນອັນເລິກເຊິ່ງໃນທັດສະນະ ແລະ ແນວຄິດຂອງປະຊາຊົນເຜົ່າຕົງ,ຄຸນສົມບັດທີ່ດີງາມຂອງບັນພະບຸລຸດໄດ້ເສີມຂະຫຍາຍບົດບາດອັນສຳຄັນທີ່ສຸດໃນການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງເຜົ່າຕົງ.ສະນັ້ນ,ການນັບຖືຜູ້ສູງອາຍຸ ແລະ ປະເພນີອື່ນໆໄດ້ກາຍເປັນມູນເຊື້ອອັນດີງາມຂອງປະຊາຊົນເຜົ່າຕົງທຸກຮຸ່ນຄົນ.ຊາມາເປັນເທວະດາທີ່ປົກປ້ອງ,ສ້າງຄວາມສາມັກຄີໃຫ້ແກ່ບ້ານເຜົ່າຕົງ,ພ້ອມທັງນຳເອົາຄວາມມ່ວນຊື່ນໃຫ້ແກ່ປະຊາຊົນ.



# ຖ້າຢາກກຳຈັດຝ້າ ເຊີນດື່ມນ້ຳອະງຸ່ນເດີ

## 想淡斑 喝葡萄汁吧

很多人误以为，想要美白就只能吃富含维生素 C 的水果如奇异果。其实，能帮助肌肤净白的成分不只一种，喝葡萄汁就是一个好办法！

ຫຼາຍຄົນຫຼົງຜິດວ່າ,ຖ້າຢາກໃຫ້ຜິວຂາວງາມກໍ່ມີແຕ່ກິນໝາກໄມ້ທີ່ມີທາດວິຕາມິນ C ຫຼາຍ,ເຊັ່ນ,ໝາກກີວີ ແລະ ອື່ນໆ.ຄວາມຈິງແລ້ວ,ສິ່ງທີ່ສາມາດຊ່ວຍໃຫ້ຜິວຂາວງາມນັ້ນບໍ່ແມ່ນມີແຕ່ຢ່າງດຽວເທົ່ານັ້ນ!

ໝາກອະງຸ່ນມີທາດ resveratrol ອັນຈະສາມາດຫຼຸດຜ່ອນ melanin

ໃນໝາກອະງຸ່ນມີ anthocyanidin ແລະ resveratrol,ອັນທີ່ຈະມີຜົນດີຕໍ່ການຕ້ານການກະທົບປ່ອຍອົກຊີພາຍໃນຮ່າງກາຍ, ໂດຍສະເພາະແມ່ນຜົນການຄົ້ນຄວ້າຫຼາຍຢ່າງທັງພາຍໃນ ແລະ ຕ່າງປະເທດໄດ້ພິສູດແລ້ວວ່າ, resveratrol ມີຜົນຄ້າຍຄື Tyrosinase ທີ່ສາມາດສະກັດກັ້ນການກຳເນີດຂອງ melanin,ເຊິ່ງສາມາດຫຼຸດຜ່ອນການກຳເນີດຂອງ melanin,ແລະ ຈະຫຼຸດຜ່ອນຄວາມອາດເປັນໄປໄດ້ທີ່ເຮັດໃຫ້ຜິວກາຍເປັນສີກໍ່າດໍາ.

ປີ 2012,ຜົນການຄົ້ນຄວ້າຮ່ວມຢ່າງໜຶ່ງຂອງຈີນ ແລະ ອາເມລິກາສະແດງໃຫ້ເຫັນວ່າ,resveratrol ສາມາດຫຼຸດປະລິມານຝ້າແດງຍ້ອນການສ່ອງແສງລັດສະໝີກາຍອິດ.ການຄົ້ນຄວ້າຍັງຊອກເຫັນວ່າ,ຖ້າວ່ານຳໃຊ້ resveratrol ພ້ອມກັບສານຕ້ານການປ່ອຍອົກຊີ,ຈະມີຜົນດີກວ່າເກົ່າໃນການຫຼຸດປະລິມານຝ້າດຳ ແລະ ຝ້າແດງ. ສານຕ້ານການປ່ອຍອົກຊີທີ່ນຳໃຊ້ໃນການຄົ້ນຄວ້າດັ່ງກ່າວກໍລວມທັງວິຕາມິນ C ແລະ ວິຕາມິນ E.

ປະສານກັບວິຕາມິນ C ຈະມີຜົນດີກວ່າເກົ່າ,ໃນຊີວິດປະຈຳວັນກໍ່ຕ້ອງກັນແດດໃຫ້ດີ


丰清 图

ໃນໝາກອະງຸ່ນມີ resveratrol ກໍ່ມີວິຕາມິນ C,ອັນທີ່ມີຜົນດີອັນພົ້ນເດັ່ນຕໍ່ການຈຳກັດການກຳເນີດຂອງ melanin.ແຕ່ກໍຕ້ອງລະວັງວ່າ,ຜົນການບຳລຸງຜິວໃຫ້ຂາວງາມ ໂດຍຜ່ານການກິນດື່ມນັ້ນແມ່ນເປັນສ່ວນເລັກໆນ້ອຍໆ,ແລະ ຕ້ອງປະຕິບັດເປັນເວລາຍາວນານ,ຖ້າວ່າບໍ່ໄດ້ກັນແດດໃຫ້ດີ,ກໍ່ມັກຈະຫຼຸດຜ່ອນຜົນການບຳລຸງຜິວທາງອາຫານ.

Resveratrol ມີຜົນຕ້ານການປ່ອຍອົກຊີ,anthocyanidin ມີຜົນຊ່ວຍການຮັກສາສາຍຕາ

ນອກຈາກການບຳລຸງຜິວແລ້ວ,ທາດ Resveratrol ແລະ anthocyanidin ໃນໝາກອະງຸ່ນນັ້ນກໍ່ມີຜົນດີໃນການຕ້ານການປ່ອຍອົກຊີ.ຜົນການຄົ້ນຄວ້າຊີ້ອອກວ່າ,ທາດ Resveratrol ສາມາດຫຼຸດຜ່ອນອັດຕາເກີດພະຍາດເສັ້ນເລືອດຫົວໃຈຂອງຜູ້ເປັນພະຍາດໄຂມັນຕັບສູງທີ່ບໍ່ແມ່ນຍ້ອນທາດ alcohol,ພ້ອມທັງຫຼຸດຜ່ອນຕົວເລກດັດຊະນີ ALT (GPT)ຂອງຕັບ.

ແຕ່ວ່າ,ປະສິດທິຜົນອັນພົ້ນເດັ່ນຄືແບບນີ້ແມ່ນໄດ້ນຳໃຊ້ຢາເພີ່ມຕື່ມທາດ Resveratrol ໂດຍກົງ,ຖ້າວ່າກິນອະງຸ່ນທຳມະຊາດ,ກໍ່ຈະບໍ່ສາມາດເກັບເອົາ Resveratrol ຫຼາຍປານນີ້.

ສຳລັບ anthocyanidin ສາມາດປ້ອງກັນຜົນກະທົບຕໍ່ຮ່າງກາຍຍ້ອນ free radical ຫຼາຍໂພດ.ແລະ ມີຜົນການຄົ້ນຄວ້າຊີ້ອອກວ່າ,anthocyanidin ສາມາດຫຼຸດຜ່ອນແຮງກົດດັນຕໍ່ພື້ນຕາ,ແລະ ມີຜົນດີຕໍ່ການຮັກສາສຸຂະພາບດ້ານສາຍຕາ.

ດື່ມນ້ຳສູດພິເສດຄົນງາມຈະມີຜົນດີກວ່າເກົ່າໃນການກຳຈັດຝ້າ


楚然 图

ຖ້າວ່າເພີ່ມຜົນການບຳລຸງຜິວຂອງໝາກອະງຸ່ນ,ກໍສາມາດລອງປັ່ນນ້ຳໝາກໄມ້ຮ່ວມກັບໝາກໄມ້ອື່ນໆ. ປີ 2012,ເອີລົບມີບົດຄົ້ນຄວ້າສະບັບໜຶ່ງຊີ້ອອກວ່າ, ການນຳໃຊ້ Resveratrol ກັບຢາຕ້ານການປ່ອຍອົກຊີພ້ອມກັນ,ຈະມີຜົນດີຍິ່ງຫຼາຍໃນການຫຼຸດຜ່ອນ melanin.

ສະນັ້ນ,ນັກໂພສະນາການ(ຫຼືໂພສະນາກອນ)ສະເໜີວ່າ,ໃນເວລາກິນໝາກອະງຸ່ນ,ສາມາດກິນພ້ອມກັບໝາກໄມ້ອື່ນໆທີ່ມີວິຕາມິນ C,ເພື່ອເພີ່ມຜົນດີໃນການບຳລຸງຜິວ ແລະ ກຳຈັດຝ້າ.ຕໍ່ໄປນີ້ຈະແນະນຳສູດພິເສດ,ອັນທີ່ຈະໄດ້ທາດບຳລຸງຈາກໝາກໄມ້ຫຼາຍຊະນິດພ້ອມກັນ,ແລະ ຈະຊ່ວຍໃຫ້ຜິວໜັງນຸ້ມດີຂາວງາມ.

ນ້ຳສູດພິເສດຄົນງາມ

ວັດຖຸດິບ: ອາງຸ່ນ 12 ເມັດ,ບູເບຣີ 10 ເມັດ,ແຄຼນເບຣີ 5 ເມັດ,mulberry 5 ພວງ,ໝາກກີວີເຄິ່ງໜ່ວຍ,ນ້ຳດື່ມເຢັນ 300 ml.

文/杨晓梅 蓝 天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：聊聊晏子
### ບົດສົນທະນາ: ລົມກັນເລື່ອງທ່ານ ຢຽນຈື

zài zhōng guó de chūn qiū shí dài yǒu
A. 在中国的春秋时代，有
yí gè wēi wàng hěn gāo de zhèng zhì jiā
一个威望很高的政治家、
wài jiāo jiā tā de míng zì jiào yàn zǐ
外交家，他的名字叫晏子。
ໃນຍຸກສະໄໝຊຸນຊຽວຂອງຈີນມີຄົນຜູ້ໜຶ່ງຊື່ ຢຽນຈື ທີ່ເປັນນັກການເມືອງ,ນັກການທູດທີ່ມີອິດທິພົນສູງຫຼາຍ.

shì de lián kǒng zǐ dōu zàn yáng tā jiù
B. 是的。连孔子都赞扬他：救
bǎi xìng ér bú zì kuā fǔ zuǒ qí guó sān
百姓而不自夸，辅佐齐国三
dài jūn wáng dé cái jiān bèi shì zhēn
代君王德才兼备，是真
zhèng de jūn zǐ
正的君子！
ແມ່ນແລ້ວ,ທ່ານ ຂົງຈື ກໍຍ້ອງຍໍສັນລະເສີນເພິ່ນ: ເປັນຜູ້ກອບກູ້ລາຊະດອນແຕ່ກໍບໍ່ຍ້ອງຍໍຕົນເອງ,ຄັກຄະເສນາບໍດີທີ່ຊ່ວຍປະມຸກບໍລິຫານລາຊະການແຜ່ນດິນຂອງເຈົ້າຊີວິດລັດຊີສາມສະໄໝເຊິ່ງພຽບພ້ອມດ້ວຍຈະລິຍາທຳ ແລະ ສະຕິປັນຍາແມ່ນສຸພາບບຸລຸດທີ່ແທ້ຈິງ!

nà wǒ men jiù liáo liáo yàn zǐ de gù shì ba
A. 那我们就聊聊晏子的故事吧！
ຊັ້ນ,ພວກເຮົາກໍລົມກັນເລື່ອງນິທານຂອງ ຢຽນຈື ສາ!

hǎo de xiān shuō shuō tā hàn wèi qí guó
B. 好的，先说说他捍卫齐国
guó gé de gù shì yí cì yàn zǐ chū shǐ dào
国格的故事。一次，晏子出使到
chǔ guó chǔ wáng zhī dào yàn zǐ de shēn
楚国，楚王知道晏子的身
cái ǎi xiǎo jiù mìng lìng rén zài dà mén
材矮小，就命令人在大门
páng biān kāi le gè xiǎo dòng qǐng yàn
旁边开了个小洞，请晏
zǐ cóng xiǎo dòng jìn qù yàn zǐ zhī dào
子从小洞进去。晏子知道
chǔ wáng yào xì nòng tā jiù shuō dào le
楚王要戏弄他，就说，“到了
gǒu guó cái zǒu gǒu dòng wǒ xiàn zài shì
‘狗国’，才走狗洞，我现在是
chū shǐ chǔ guó bù yīng gāi zǒu gǒu dòng
出使楚国，不应该走狗洞
ba zhāo dài yàn zǐ de guān yuán zhǐ
吧？”招待晏子的官员只
hǎo qǐng yàn zǐ cóng dà mén jìn qù
好请晏子从大门进去。
ໄດ້ຢູ່,ລົມກັນເລື່ອງຂອງເພິ່ນທີ່ປົກປັກຮັກສາກຽດສັກສີຊາດຂອງລັດຊີສາກ່ອນ,ມີເທື່ອໜຶ່ງ,ຢຽນຈື ໄປເປັນທູດຢູ່ລັດຊູ,ເຈົ້າຊີວິດລັດຊູຮູ້ຈັກຮ່າງກາຍຂອງຢຽນຈືເຕ້ຍນ້ອຍ,ກໍສັ່ງຄົນຂຸດຮູນ້ອຍຮູໜຶ່ງຢູ່ແຄມຂ້າງປະຕູ,ເຊີນຢຽນຈືເຂົ້າໄປທາງໃນຜ່ານຈາກຮູນ້ອຍນັ້ນ,ຢຽນຈືຮູ້ວ່າເຈົ້າຊີວິດລັດຊູພວມຢອລາວຫຼິ້ນ,ລາວເລີຍເວົ້າຂຶ້ນວ່າ,“ມາຮອດລັດໝາ,ກໍຈະໄປຕາມຮູໝາ,ແຕ່ຂະນະນີ້ຂ້າພະເຈົ້າແມ່ນໄປເປັນທູດຂອງລັດຊູ,ບໍ່ຄວນໄປຕາມຮູໝາດອກ?”,ເມື່ອເປັນດັ່ງນັ້ນເຈົ້ານາຍທີ່ມາຮັບຕ້ອນຢຽນຈືນັ້ນຈຶ່ງໄດ້ເຊີນຢຽນຈືເຂົ້າໄປໂດຍຜ່ານຈາກປະຕູໃຫຍ່.

wǒ jiē zhe shuō yàn zǐ jìn mén hòu bài
A. 我接着说。晏子进门后，拜
jiàn chǔ wáng chǔ wáng gù yì wèn tā qí
见楚王。楚王故意问他：“齐
guó méi yǒu rén ma jìng pài nín zuò shǐ
国没有人吗？竟派您做使
chén yàn zǐ huí dá shuō qí guó rén cái
臣。”晏子回答说：“齐国人才
jǐ jǐ zěn me shuō qí guó méi yǒu rén ne
济济。怎么说齐国没有人呢？”
chǔ wáng yòu miè shì de shuō jì rán rú
楚王又蔑视地说：“既然如
cǐ wèi shén me pài nǐ zhè zhǒng rén chū
此，为什么派你这种人出
fǎng ne yàn zǐ bù bēi bú kàng de dá dào
访呢？”晏子不卑不亢地答道：
wǒ men qí guó pài shǐ jié chū fǎng hěn
“我们齐国派使节出访很
yǒu jiǎng jiu jīng míng néng gàn de rén
有讲究：精明能干的人
chū shǐ nà xiē dào dé gāo shàng de guó
出使那些道德高尚的国
jiā yú chǔn wú néng de chū shǐ nà xiē
家；愚蠢无能的出使那些
bù chéng qì de guó jiā xiàn zài qí guó
不成器的国家。现在齐国
pài wǒ chū shǐ chǔ guó nín jué de wǒ shì
派我出使楚国，您觉得我是
shén me yàng de rén ne chǔ wáng wú yán
什么样的人呢？”楚王无言
yǐ duì xīn zhōng què yóu rán shēng jìng
以对，心中却油然生敬，
zì cháo shuō bù néng yǔ shèng rén kāi
自嘲说：“不能与圣人开
wán xiào wǒ zì tǎo wú qù le
玩笑，我自讨无趣了。”
ຂ້ອຍຈະເວົ້າຕໍ່.ຫລັງຈາກຢຽນຈືເຂົ້າປະຕູແລ້ວ,ໄປເຂົ້າຢ້ຽມຄຳນັບເຈົ້າຊີວິດລັດຊູ,ເຈົ້າຊີວິດລັດຊູເຈຕະນາຖາມຢຽນຈືວ່າ,“ລັດຊີບໍ່ມີຄົນຫວະ? ເລີຍແຕ່ງຕັ້ງທ່ານມາເປັນທູດ”.ຢຽນຈືໃຫ້ຄຳຕອບວ່າ:“ລັດຊີມີບຸກຄະລາກອນຫຼວງຫຼາຍ,ເປັນຫຍັງຈຶ່ງເວົ້າວ່າລັດຊີບໍ່ມີຄົນ?”ເຈົ້າຊີວິດລັດຊູເວົ້າດູຖູກອີກວ່າ:“ເມື່ອໄດ້ຮູ້ຈັ່ງຊີ້ແລ້ວ,ເປັນຫຍັງຍັງແຕ່ງຕັ້ງຄົນຄືທ່ານຈັ່ງຊີ້ມາເປັນທູດ?”ຢຽນຈືໃຫ້ຄຳຕອບຢ່າງເຄັ່ງຂຶມວ່າ,“ລັດຊີພວກເຮົາແຕ່ງຕັ້ງນັກການທູດຢ່າງພິຖີພິຖັນທີ່ສຸດ,ຈະແຕ່ງຕັ້ງຜູ້ທີ່ສະຫລາດແກ່ນກ້າໄປເປັນທູດຂອງລັດທີ່ມີສິນທຳສູງສົ່ງເຫຼົ່ານັ້ນ;ຜູ້ທີ່ໂງ່ຈ້າເບົາປັນຍາບໍ່ຮູ້ຫຍັງໄປເປັນທູດຂອງລັດທີ່ບໍ່ໄດ້ເລື່ອງ.ດຽວນີ້,ລັດຊີແຕ່ງຕັ້ງຂ້ອຍເປັນທູດຂອງລັດຊູ,ເຈົ້າຮູ້ສຶກວ່າຂ້ອຍແມ່ນຄົນແນວໃດ?”ເຈົ້າຊີວິດລັດຊູໄຮ້ຄວາມໃຫ້ຄຳຕອບໂຕ້.ໃນໃຈຊ້ຳພັດເກີດມີຄວາມນັບຖື,ເວົ້າສຽດສີຕົນເອງວ່າ: “ບໍ່ສາມາດເວົ້າຢອກກັນກັບນັກປັດຊະຍາ,ຂ້ອຍໜ້າອາຍເອງແລ້ວ.”

shì de yàn zǐ cōng míng guò rén tā hái
B. 是的，晏子聪明过人，他还
jiǎng jiu quàn jiàn yì shù yí cì péi tóng
讲究劝谏艺术。一次陪同
qí wáng dào jì guó gù dì yóu wán dé dào
齐王到纪国故地游玩，得到
yí gè jīn hú lǐ miàn xiě yǒu wú shí fǎn
一个金壶，里面写有“无食反
yú wù chéng nú mǎ yàn zǐ jiè jī duì qí
鱼，勿乘驽马。”晏子借机对齐
wáng shuō chén jué de zhè bā gè zì bāo
王说：“臣觉得这八个字包
hán zhì guó de dào lǐ chī yú bú yào fān
含治国的道理：吃鱼不要翻
guò lái shì shuō bú yào bǎ mín lì yòng
过来，是说不要把民力用
jìn bú yào chéng zuò nú mǎ chē shì shuō
尽；不要乘坐驽马车，是说
bú yào bǎ xiǎo rén ān zài shēn biān
不要把小人安在身边。”
ແມ່ນແລ້ວ,ຢຽນຈື ມີຄວາມສະຫລາດກວ່າເພິ່ນ,ລາວຍັງຊຳນານສິນລະປະ. ຕັກເຕືອນຄົນ.ມີຄັ້ງໜຶ່ງ,ລາວພາທາງເຈົ້າຊີວິດລັດຊີໄປທ່ຽວຫຼິ້ນລັດຈີ,ໄດ້ຮັບໂຖຄຳອັນໜຶ່ງ,ໃນຖຄຳຂຽນໜັງສືວ່າ“ກິນປາບໍ່ປີ້ນ,ຢ່າຂີ່ມ້າທະນູ.”ຢຽນຈືຖືໂອກາດນີ້ເວົ້າຕໍ່ກັບເຈົ້າຊີວິດລັດຊີວ່າ: “ຂຸນນາງຂ້ອຍຮູ້ສຶກວ່າໂຕໜັງສືດັ່ງກ່າວນີ້ລວມທັງມີເຫດຜົນປົກຄອງລັດ. ກິນປາຢ່າປີ້ນຄືນມາກິນ,ໝາຍເຖິງວ່າ,ບໍ່ຕ້ອງໃຊ້ແຮງປະຊາຊົນໃຫ້ໝົດກ້ຽງ,ຢ່າຂີ່ກວຽນມ້າທະນູ,ໝາຍຄວາມວ່າບໍ່ຕ້ອງເອົາຄົນຕໍ່າຕອຍໄວ້ຢູ່ແຄມຂ້າງຂອງຕົນ.”

hòu lái qí wáng fǎn wèn jì guó yǒu zhè
A. 后来，齐王反问：“纪国有这
yàng de jǐng shì zhī yán wèi shén me hái
样的警世之言，为什么还
huì miè wáng ne yàn zǐ de huí dá hěn
会灭亡呢？”晏子的回答很
qiǎo miào tā shuō wǒ tīng shuō jūn zǐ yǒu
巧妙，他说：“我听说，君子有
le zhì lǐ míng yán jiù bǎ tā xuán guà zài
了至理名言，就把它悬挂在
dà mén shàng kě shì jì guó yǒu zhè yàng
大门上。可是纪国有这样
de liáng yán què bǎ tā zhuāng zài hú lǐ
的良言，却把它装在壶里，
dāng rán huì miè wáng le
当然会灭亡了！”
ຕໍ່ມາ,ເຈົ້າຊີວິດລັດຊີຖາມຄືນວ່າ,“ລັດຈີມີຄະຕິເຕືອນໃຈດັ່ງກ່າວນີ້ເປັນຫຍັງຍັງຖືກດັບສູນອີກ?”ຄຳຕອບຂອງຢຽນຈືໂດຍຄວາມຍອດຢ້ຽມເລີດລ້ຳທີ່ສຸດ,ລາວເວົ້າວ່າ,“ຂ້ອຍໄດ້ຍິນວ່າ,ສຸພາບບຸລຸດໄດ້ມີຄະຕິເຕືອນໃຈແລ້ວກໍຫ້ອຍໄວ້ຢູ່ເທິງປະຕູໃຫຍ່,ແຕ່ວ່າ,ລັດຈີມີຄະຕິເຕືອນໃຈແລ້ວຊ້ຳພັດປະໄວ້ຢູ່ໃນໂຖ”,ທຳມະດາແລ້ວ,ກໍຈະຕ້ອງຖືກດັບສູນແລ້ວ.

yàn zǐ tā bù shǔ yú rú jiā dàn zàn chéng
B. 晏子他不属于儒家，但赞成
rú jiā chàng dǎo de rén zhèng yǒu yí gè
儒家倡导的仁政。有一个
gù shì shuō qí wáng dé dào yì zhī piào
故事说，齐王得到一只漂
liang de niǎo fēi cháng xǐ huān dàn yǎng
亮的鸟，非常喜欢，但养
niǎo de rén bù xiǎo xīn fàng pǎo le qí
鸟的人不小心放跑了，齐
wáng qì huài le yào shā le tā yàn zǐ gǎn
王气坏了，要杀了他。晏子赶
lái qiú qíng shuō xiān ràng wǒ xuān bù
来求情说：“先让我宣布
tā de zuì zhuàng ràng tā sǐ dé míng bái
他的罪状，让他死得明白
hǎo ma
好吗？”

ປຽນຈືບໍ່ສັງກັດສຳນັກອົງຈື,ແຕ່ວ່າ,ລາວຍ້ອງຍໍການປົກຄອງເຕັມໄປດ້ວຍກະລຸນາຍະທຳທີ່ສຳນັກອົງຈືມີເຈດຈຳນົງນັ້ນ.ມີນິທານເລື່ອງໜຶ່ງເວົ້າວ່າ,ເຈົ້າຊີວິດລັດຊີໄດ້ຮັບນົກສວຍງາມໂຕໜຶ່ງ,ມັກຮັກທີ່ສຸດ,ແຕ່ວ່າ,ຜູ້ລ້ຽງນົກບໍ່ລະວັງປ່ອຍນົກໜີໄປແລ້ວ,ເຈົ້າຊີວິດລັດຊີຄຽດຫຼາຍ,ຈຶ່ງຈະຂ້າລາວຕາຍ.ປຽນຈືຮີບມາເວົ້າເພື່ອຂໍຄວາມເຫັນໃຈ,ໃຫ້ຂ້ອຍປະກາດໂທດກຳຂອງລາວສາກ່ອນ,ເຮັດໃຫ້ລາວຕາຍໂດຍທີ່ໄດ້ເຂົ້າໃຈໂທດກ່ອນໄດ້ບໍ່?

qí wáng dā yìng hòu yàn zǐ duì yǎng niǎo
A. 齐王答应后，晏子对养鸟

rén shuō dà wáng jiào nǐ yǎng niǎo nǐ
人说：“大王叫你养鸟，你

bù liú xīn ràng niǎo fēi le shǐ guó jūn
不留心让鸟飞了，使国君

wèi yì zhī niǎo jiù yào shā rén zhè jiàn
为一只鸟就要杀人；这件

shì rú guǒ ràng qí tā zhū hóu guó zhī dào
事如果让其他诸侯国知道

le dōu huì rèn wéi wǒ men de guó jūn zhī
了，都会认为我们的国君只

kàn zhòng niǎo ér qīng shì lǎo bǎi xìng
看重鸟而轻视老百姓

de xìng mìng cóng ér kàn bu qǐ wǒ men zhè
的性命，从而看不起我们，这

yàng nǐ de zuì guò jiù dà le suǒ yǐ yào
样你的罪过就大了，所以要

shā sǐ nǐ tīng le yàn zǐ de huà qí wáng
杀死你。”听了晏子的话，齐王

ruò yǒu suǒ sī shuō suàn le bǎ tā fàng
若有所思，说：“算了，把他放

le ba jiē zhe duì yàn zǐ gǒng shǒu shuō
了吧。”接着，对晏子拱手说：

ruò bú shì nín de kāi dǎo wǒ xiǎn xiē fàn
“若不是您的开导，我险些犯

le dà cuò wù ya
了大错误呀！”

ເຈົ້າຊີວິດລັດຊີເຫັນດີແລ້ວ,ປຽນຈືເວົ້າຕໍ່ຜູ້ລ້ຽງນົກວ່າ:“ເຈົ້າຊີວິດລັດຊີມອບໃຫ້ເຈົ້າລ້ຽງນົກ,ເຈົ້າບໍ່ລະວັງເຮັດໃຫ້ນົກບິນໜີແລ້ວ,ເຮັດໃຫ້ເຈົ້າຊີວິດຈະຂ້າຄົນເພື່ອນົກໂຕໜຶ່ງ;ເລື່ອງນີ້ເຮັດໃຫ້ລັດອື່ນໆຮູ້ຈັກກັນໝົດແລ້ວ,ເຫັນວ່າ,ເຈົ້າຊີວິດພວກເຮົາມີພຽງແຕ່ເຫັນສຳຄັນນົກໂຕໜຶ່ງເລີຍຖືເບົາຕໍ່ຊີວິດຂອງປະຊາຊົນ,ເລີຍເບິ່ງເບົາພວກເຮົາ,ເມື່ອເປັນແນວນີ້,ໂທດກຳຂອງເຈົ້າກໍໜັກໜ່ວງແລ້ວ.ສະນັ້ນຈະຕ້ອງຂ້າເຈົ້າ.”ໄດ້ຟັງຄວາມເວົ້າຂອງປຽນຈື,ເຈົ້າຊີວິດລັດຊີຈະມີຄວາມຄິດຕອງໜ້ອຍໜຶ່ງ,ແລ້ວເວົ້າວ່າ,ເອົາລະ,ປ່ອຍລາວສາ! ເວົ້າຕໍ່ປຽນຈືດ້ວຍຄວາມສະແດງເຄົາລົບນັບຖືວ່າ:“ຖ້າຫາກວ່າ,ບໍ່ແມ່ນທ່ານອົບລົມສັ່ງສອນຂ້າພະເຈົ້າ,ຂ້າພະເຈົ້າອາດຈະມີຄວາມຜິດພາດຫຼາຍແລ້ວ.”

shì de yàn zǐ zài qí guó fǔ zhèng qí líng
B. 是的。晏子在齐国辅政齐灵

gōng zhuāng gōng jǐng gōng sān cháo yǒu
公、庄公、景公三朝，有

xǔ duō quàn gào jūn zhǔ qín zhèng ài hù
许多劝告君主勤政、爱护

bǎi xìng hé rèn yòng xián néng de shì lì
百姓和任用贤能的事例。

hòu rén gēn jù tā de yán xíng zhěng lǐ le
后人根据他的言行整理了

yí bù lì shǐ diǎn jí yàn zǐ chūn qiū chuán
一部历史典籍《晏子春秋》，传

chéng le liǎng qiān duō nián tā shì wǒ
承了两千多年，它是我

men bǎo guì de wén huà cái fù
们宝贵的文化财富。

ແມ່ນແລ້ວ,ປຽນຈືຊ່ວຍຊີລິນກົງ,ຈວງກົງ,ຈິ້ນກົງປົກຄອງລັດຊີສາມສະໄໝ,ມີຫຼາຍຕົວຢ່າງທີ່ຕັກເຕືອນເຈົ້າຊີວິດປົກຄອງລັດຊີ່ສັດສຸດຈະລິດ,ຮັກຫອມປະຊາຊົນ ແລະ ນຳໃຊ້ບຸກຄົນທີ່ມີຄວາມສາມາດ ແລະ ສະຕິປັນຍາ.ຄົນລຸ້ນຫລັງໄດ້ລຽບຮຽງການກະທຳ ແລະ ຄວາມເວົ້າຂອງປຽນຈືຂຽນເປັນປຶ້ມປະຫວັດສາດຫົວໜຶ່ງຊື່ວ່າ《ປຽນຈື ຊຸນຊຽວ》ໄດ້ສືບທອດກັນມາສອງພັນກວ່າປີ,ມັນແມ່ນຊັບສິນບັດວັດທະນະທຳອັນລ້ຳຄ່າຂອງພວກເຮົາ.

## 二、词汇积累 ສະສົມຄຳສັບ

lǎn
懒 ຂີ້ຄ້ານ

xiǎo gǒu lǎn yāng yāng de shài tài yang
小狗懒洋洋的晒太阳。

ໝານ້ອຍນອນຕາກແດດຢ່າງເບື່ອໜ່າຍ.

làng fèi
浪费 ຟຸມເຟືອຍ

wǒ zhī jiǎn dān jiǎng liǎng jù bú làng
我只简单讲两句，不浪

fèi dà jiā de bǎo guì shí jiān
费大家的宝贵时间。

ຂ້ອຍຈະເວົ້າແຕ່ພຽງສອງສາມຄວາມ, ຈະບໍ່ຟຸມເຟືອຍເວລາທີ່ລ້ຳຄ່າຂອງພວກເຈົ້າແລ້ວ.

làng màn
浪漫 ໂຣມັນຕິກ

wǒ de xiǎng fǎ yě xǔ yǒu diǎn làng màn
我的想法也许有点浪漫。

ຄວາມຄິດຂອງຂ້ອຍອາດຈະມີໂຣມັນຕິກໜ້ອຍໜຶ່ງແດ່.






# 云南鼎顺货运代理有限公司

鼎顺货运 DINGSHUN LOGISTICS

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线　大型项目配套物流**

**海运、陆运、空运、国际运输、物资采购　保险代理、单证缮制、代理报关、外汇结算，提供门到门服务**

Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.
Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service









Http：www.dingshun88.com　E-MAIL：168606284@QQ.COM
Customer QQ：1459997464、168606284　TEL：0086-871-68381415
ADD:No.11C Entrance2 Building 7th Xichunyuan Century Town Kunming Province Yunnan China

网站：www.dingshun88.com　E-MAIL：168606284@QQ.COM
商务QQ：1459997464、168606284　电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ

# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ,ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກາສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ,ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。







总经理：张惠平先生
ທ່ານ ຈາງຮຸ້ຍຜິງ

**主营业务**
- ★国际货代、货物进出口
- ★中国—老挝—泰国　专线往返海路、陆路运输
- ★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ

★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ

★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com
传真FAX：0691-8811237　客服QQ：783667765
网站：www.ydjck.com　E-mail: 783667765@qq.com
老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）
ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918　电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

# 云南阳光道桥股份有限公司

## YUNNAN SUNNY ROAD & BRIDGE CO.,LTD

## ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດ




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

地址：中国　昆明市官南大道1588号
电话：0871－67017107　67017108
网址：WWW.YNROAD.COM

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກຳສ້າງທາງ ແລະ ມີສິດດຳເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສຳເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທຳອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຣິກກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107　67017108
ເວັບໄຊ: WWW.YNROAD.COM

做人守德　感恩做人　　做事守道　负责做事

ເປັນຄົນຕ້ອງມີຄຸນສົມບັດ　ຮູ້ຕອບບຸນແທນຄຸນ　ເຮັດວຽກປະຕິບັດຕາມຫຼັກການ　ກ້າແບກຫາບໜ້າທີ່ຮັບຜິດຊອບ

# ລາວສບ້າຍ | LB 老挝商城

360LAOSBUY.COM

## 想得到就淘得到的老挝最大网上购物平台！




微信扫一扫
进入移动商城

## 老挝商城　欢迎入驻

http://www.360laosbuy.com GO

### 老挝商城的服务

生活信息　二手买卖　招聘求职　酒店餐饮　机票签证　旅游租车　商务服务

ການບິນລາວ
Lao Airlines

# More Miles, More Privileges




## ChamPa MuangLao Member card

Gold Card

Silver Card




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

Muangthong Hotel
Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays
Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com